ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຍຸດທະສາດ

## ການປົກປ້ອງສັງຄົມແຫ່ງຊາດ

## ວິໄສທັດ ຮອດ ປີ 2030
## ເປົ້າໝາຍລວມ ຮອດ ປີ 2025

ຈັດພິມໂດຍ:

ກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ກັນຍາ 2020

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 224/ນຍ.

ນະຄອນຫຼວງວຽງຈັນ, ວັນທີ 01.04.2020.

# ດຳລັດ

## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ( ສະບັບປັບປຸງ ) ສະບັບເລກທີ 04/ສພຊ, ວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ແຮງງານ ສະບັບເລກທີ 43/ສພຊ, ວັນທີ 24 ທັນວາ 2016;
- ອີງຕາມ ກົດໝາຍວ່າດ້ວຍ ການປະກັນສັງຄົມ ( ສະບັບປັບປຸງ ) ສະບັບເລກທີ 54/ສພຊ, ວັນທີ 27 ມິຖຸນາ 2018;
- ອີງຕາມ ໜັງສືສະເໜີ ຂອງກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 0670/ຮສສ, ວັນທີ 03 ມີນາ 2020.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1** ຮັບຮອງ ແລະ ປະກາດໃຊ້ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຕາມການເຫັນດີ ໃນກອງປະຊຸມລັດຖະບານ ປະຈຳເດືອນ ຕຸລາ 2019 ທີ່ໄດ້ຮັບຮອງ ຢ່າງເປັນທາງການແລ້ວ.

**ມາດຕາ 2** ມອບໃຫ້ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3** ບັນດາກະຊວງ, ອົງການ, ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 4** ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະບານແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ

## ສາລະບານ


**ຄຳນຳ.....i**

**ຄຳສະແດງຄວາມຂອບໃຈ.....ii**

**ການອະທິບາຍຄຳສັບ.....iii**

**ຄຳຫຍໍ້ ແລະ ຄວາມໝາຍ.....vi**

**I. ການສະເໜີ.....1**

1. ບົດບາດ ແລະ ຄວາມສຳຄັນຂອງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ.....1
2. ຂອບເຂດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ.....2
3. ຂັ້ນຕອນການສ້າງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ.....2

**II. ສະພາບວຽກປົກປ້ອງສັງຄົມ ໃນລະດັບສາກົນ, ພາກພື້ນ ແລະ ສປປ ລາວ.....3**

1. ສະພາບວຽກປົກປ້ອງສັງຄົມ ໃນລະດັບສາກົນ.....3
   1.1. ບັນດານິຕິກຳ ແລະ ມາດຕະຖານສາກົນ.....3
   1.2. ລະບົບການປົກປ້ອງສັງຄົມ.....4
2. ສະພາບການປົກປ້ອງສັງຄົມໃນພາກພື້ນ.....4
3. ສະພາບການປົກປ້ອງສັງຄົມໃນ ສປປ ລາວ.....5
   3.1. ການສະເໜີ.....5
   3.2. ກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ.....7
   3.3 ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII.....8
   3.4 ບັນດາແຜນພັດທະນາຂອງຂະແໜງການທີ່ຕິດພັນກັບວຽກງານປົກປ້ອງສັງຄົມ.....9
   3.5 ຜົນສຳເລັດການຈັດຕັ້ງປະຕິບັດວຽກງານການປົກປ້ອງສັງຄົມໃນ ສປປ ລາວ.....10
   3.6 ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດ.....11
   3.7 ຂໍ້ແນະນຳ ແລະ ວິທີການແກ້ໄຂ.....12

**III. ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ.....12**

1. ວິໄສທັດ.....12
2. ຫຼັກການລວມ.....13
3. ເປົ້າໝາຍລວມ.....13
4. ຈຸດປະສົງ.....13
   4.1. ຈຸດປະສົງວຽກປະກັນສຸຂະພາບ.....14
   4.2. ຈຸດປະສົງວຽກປະກັນສັງຄົມ.....15
   4.3. ຈຸດປະສົງວຽກສະຫວັດດີການສັງຄົມ.....16

**IV. ມາດຕະການຈັດຕັ້ງປະຕິບັດ.....18**

1. ກົນໄກການປະສານງານ ແລະ ການຮ່ວມມືກັບຂະແໜງການ ທີ່ກ່ຽວຂ້ອງ.....18
2. ງົບປະມານ ແລະ ການລະດົມແຫຼ່ງທຶນສະໜັບສະໜູນການຈັດຕັ້ງປະຕິບັດ.....19
3. ການຮ່ວມມືກັບບັນດາຄູ່ຮ່ວມພັດທະນາ.....20
4. ການໂຄສະນາເຜີຍແຜ່ ແລະ ການສ້າງຄວາມອາດສາມາດໃນການຈັດຕັ້ງປະຕິບັດ.....21
5. ການຕິດຕາມ ແລະ ປະເມີນຜົນ.....22

**ເອກະສານຊ້ອນທ້າຍ 1. ການວິເຄາະສຶກສາຕົ້ນທຶນສະເພາະ ສຳລັບການອຸດໜູນເດັກ, ຜູ້ພິການ ແລະ ຜູ້ອາຍຸສູງ ໄລຍະແຕ່ປີ 2019-2030.....23**

**ເອກະສານຊ້ອນທ້າຍ 2. ຄຳອະທິບາຍກ່ຽວກັບວິທີການນຳໃຊ້ໃນການຄາດຄະເນຄ່າໃຊ້ຈ່າຍສຳລັບແຕ່ລະຈຳລອງນະໂຍບາຍຂອງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໄລຍະ 2019–2030.....25**

**ເອກກະສານຊ້ອນທ້າຍ 3. ຄາດຄະເນຕົ້ນທຶນຕາມການອຸດໜູນ (% GDP, % GGE, ຕື້ກີບ).....28**

**ເອກະສານອ້າງອີງ.....29**

**ບັນດາກະຊວງ ແລະ ຂະແໜງການທີ່ເຂົ້າຮ່ວມໃນການສ້າງຍຸດທະສາດ.....31**

# ຄໍານໍາ

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ສະບັບນີ້ ໄດ້ຮັບການຄົ້ນຄ້ວາ ແລະ ສ້າງຂຶ້ນ ຈາກຜົນການປະເມີນສະພາບການປົກປ້ອງສັງຄົມ ໂດຍການປຶກສາຫາລືຮ່ວມກັນໃນລະດັບຊາດ ຊຶ່ງເປັນການປະເມີນແບບມີສ່ວນຮ່ວມ ຂອງອົງການສະຫະປະຊາຊາດ ໂດຍການນໍາໃຊ້ຫຼັກວິຊາການຂອງອົງການແຮງງານສາກົນ. ຂັ້ນຕອນການປະເມີນສະພາບການປົກປ້ອງສັງຄົມ ແມ່ນໄດ້ດໍາເນີນພາຍໃຕ້ການຊີ້ນໍາຂອງຄະນະກໍາມະການຮ່າງຍຸດທະສາດວຽກງານປົກປ້ອງສັງຄົມແຫ່ງຊາດ ຊຶ່ງປະກອບມີກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ບັນດາຂະແໜງການຂອງລັດທີ່ກ່ຽວຂ້ອງ, ອົງການແຮງງານສາກົນ ແລະ ອົງການເຄືອຂ່າຍສະຫະປະຊາຊາດ ທີ່ໄດ້ສະໜັບສະໜູນດ້ານແຫຼ່ງທຶນ ແລະ ວິຊາການ ໂດຍໄດ້ດໍາເນີນການປະເມີນດ້ວຍການເກັບກໍາ ແລະ ການວິໄຈແຫຼ່ງຂໍ້ມູນທີ່ກ່ຽວຂ້ອງ, ການຈັດກອງປະຊຸມປຶກສາຫາລືຮ່ວມກັນຫຼາຍຄັ້ງ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ ຈຶ່ງໄດ້ສໍາເລັດການສ້າງບົດລາຍງານການປະເມີນ ແລະ ຖືກຮັບຮອງໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຮ່ວມກັບອົງການແຮງງານສາກົນ ແລະ ຕາງໜ້າອົງການສະຫະປະຊາຊາດ ປະຈໍາ ສປປ ລາວ.

ຄະນະກໍາມະການຮ່າງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໄດ້ດໍາເນີນການຄົ້ນຄ້ວາ ແລະ ສ້າງຮ່າງຍຸດທະສາດສະບັບນີ້ ໂດຍໄດ້ອີງຕາມຫຼັກການຕ່າງໆ ເປັນຕົ້ນ ການແນະນໍາການເຂົ້າເຖິງການບໍລິການປົກປ້ອງສັງຄົມ, ມີຄວາມຍືນຍົງ ແລະ ມີຄຸນນະພາບທີ່ດີສໍາລັບທຸກຄົນ, ການປະເມີນລະບົບການໃຫ້ບໍລິການປົກປ້ອງສັງຄົມ ທີ່ມີໃນປະຈຸບັນ ໃນລະດັບຊາດ ເພື່ອສະແດງຜົນຂອງການປະເມີນ ແລະ ຫຼັກຖານຕົວຈິງ ໃນການໃຫ້ການບໍລິການ ແລະ ໃຫ້ມີຄວາມສອດຄ່ອງກັບເປົ້າໝາຍແຫ່ງຊາດ, ປັບປຸງການຈັດຕັ້ງປະຕິບັດໃຫ້ເໝາະສົມກັບເງື່ອນໄຂ ແລະ ສະພາບແວດລ້ອມຕົວຈິງຄວາມອາດສາມາດດ້ານຊັບພະຍາກອນ, ເສດຖະກິດ ແລະ ງົບປະມານແຫ່ງລັດ ແລະ ການມີສ່ວນຮ່ວມຈາກອົງການເຄືອຂ່າຍສະຫະປະຊາຊາດ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ.

ຄະນະກໍາມະການຮ່າງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໄດ້ຈັດກອງປະຊຸມລະດົມຄວາມຄິດເຫັນ ແລະ ປຶກສາຫາລືກັນຫຼາຍຄັ້ງ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ໂດຍມີການປຶກສາຫາລືຮ່ວມກັນ ລະຫວ່າງບັນດາຂະແໜງການຂອງລັດ , ອົງການຕາງໜ້າຜູ້ອອກແຮງງານ, ອົງການຕາງໜ້າຜູ້ໃຊ້ແຮງງານ, ອົງການເຄືອຂ່າຍສະຫະປະຊາຊາດ ແລະ ຄູ່ຮ່ວມພັດທະນາ ທີ່ກ່ຽວຂ້ອງ ຢ່າງກ້ວາງຂວາງ ໂດຍເຫັນວ່າ ຮ່າງຍຸດທະສາດສະບັບນີ້ ມີໂຄງສ້າງທີ່ເໝາະສົມ ຕາມແບບສະບັບຂອງລາວ, ມີເນື້ອໃນ ທີ່ຊັດເຈນ, ສອດຄ່ອງກັບນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຊຶ່ງຍຸດທະສາດສະບັບນີ້ ປະກອບດ້ວຍວິໄສທັດ ຮອດປີ 2030, ເປົ້າໝາຍລວມ ຮອດປີ 2025, ຈຸດປະສົງຂອງຍຸດທະສາດ ຊຶ່ງລວມມີຈຸດປະສົງວຽກປະກັນສຸຂະພາບ, ຈຸດປະສົງວຽກປະກັນສັງຄົມ ແລະ ຈຸດປະສົງວຽກສະຫວັດດີການສັງຄົມ. ໃນແຕ່ລະຈຸດປະສົງໄດ້ກໍານົດບັນດາກິດຈະກໍາ ແລະ ໜ້າວຽກທີ່ເປັນຈຸດສຸມໃນການຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ.

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດສະບັບນີ້ ໄດ້ສະແດງໃຫ້ເຫັນຄວາມມຸ່ງໝັ້ນ ແລະ ຄວາມຮັບຜິດຊອບຂອງລັດຖະບານ ແຫ່ງ ສປປ ລາວ ໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໂດຍສະເພາະແມ່ນການຮ່ວມມືກັບບັນດາອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ໃນການຍົກສູງພາລະບົດບາດ ແລະ ພັນທະໃນການສືບຕໍ່ເພີ່ມທະວີການຮ່ວມມືກັນ ໃນການຈັດຕັ້ງປະຕິບັດວຽກປົກປ້ອງສັງຄົມ ໃນ ສປປ ລາວ ໃຫ້ເຊື່ອມສານກັບບັນດານະໂຍບາຍ ແລະ ສົນທິ ສັນຍາຕ່າງໆ ຂອງສາກົນ ແລະ ພາກພື້ນ ເພື່ອໃຫ້ມີບາດກ້າວຂະຫຍາຍຕົວ ແລະ ມີປະສິດທິຜົນໃນອະນາຄົດ.

ນະຄອນຫຼວງວຽງຈັນ, ວັນທີ........................

**ລັດຖະມົນຕີ**

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

# ຄຳສະແດງຄວາມຂອບໃຈ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນນາມຕາງໜ້າລັດຖະບານ ແຫ່ງ ສປປ ລາວ ຂໍສະແດງຄວາມຮູ້ບຸນຄຸນຢ່າງຈິງໃຈ ມາຍັງບັນດາທ່ານທີ່ໄດ້ປະກອບສ່ວນ ອັນສຳຄັນເຂົ້າໃນການຄົ້ນຄ້ວາ ແລະ ສ້າງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດສະບັບນີ້ ໂດຍສະເພາະແມ່ນສະແດງຄວາມຂອບໃຈມາຍັງຄະນະຮັບຜິດຊອບການສ້າງຮ່າງຍຸດທະສາດສະບັບນີ້ ໂດຍພາຍໃຕ້ການເປັນຫົວໜ້າຂອງທ່ານ ນາງ ໃບຄຳ ຂັດທິຍະ ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ທ່ານ ປອ. ຢ່າງກູ້ ຢາງລີໄຊ ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນນາມຫົວໜ້າກອງເລຂາຄະນະຮັບຜິດຊອບສ້າງຮ່າງຍຸດທະສາດ ລວມທັງບັນດາທ່ານໃນຄະນະຮັບຜິດຊອບ ທີ່ເປັນຜູ້ຕາງໜ້າມາຈາກຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ກະຊວງພາຍໃນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງແຜນການ ແລະ ການລົງທຶນ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງການເງິນ, ກຳມາທິການວັດທະນະທຳສັງຄົມສະພາແຫ່ງຊາດ, ສູນກາງກຳມະບານລາວ, ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ, ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ແລະ ຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ແລະ ພາກສ່ວນອື່ນ ຊຶ່ງໄດ້ເຮັດໃຫ້ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດສະບັບນີ້ ໄດ້ຮັບຜົນສຳເລັດ ເປັນຢ່າງດີ ໂດຍໄດ້ຮັບການຮັບຮອງ ແລະ ປະກາດໃຊ້ຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 224/ນຍ, ລົງວັນທີ 01 ເມສາ 2020 ຊຶ່ງຈະໄດ້ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໃຫ້ເຊື່ອມໂຍງກັບແຜນພັດທະນາຂອງຂະແໜງການທີ່ກ່ຽວຂ້ອງ ຢ່າງກ້ວາງຂວາງ.

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດສະບັບນີ້ ຍັງໄດ້ຮັບການສະໜັບສະໜູນດ້ານວິຊາການຈາກທ່ານ ນູໂນ ຄູຣານ , ຊ່ຽວຊານອາວຸໂສວຽກປົກປ້ອງສັງຄົມຂອງອົງການແຮງງານສາກົນ ແລະ ທ່ານ ນາງ ເຂັມພອນ ເຜົ່າຄຳແກ້ວ ຜູ້ປະສານງານອົງການແຮງງານສາກົນ ປະຈຳ ສປປ ລາວ, ທ່ານ ໂຣເຊ ອາກູນ ຊ່ຽວຊານທີ່ປຶກສາ ທີ່ໄດ້ໃຫ້ການສະໜັບສະໜູນດ້ານແນວຄວາມຄິດ ແລະ ຫຼັກວິຊາການຕ່າງໆ ໃນການດຳເນີນການຄົ້ນຄ້ວາ, ປຶກສາຫາລື ແລະ ສ້າງຍຸດທະສາດສະບັບນີ້ ລວມທັງທ່ານ ແອນເດຣຍ ບູນເກດສເທບ ຊ່ຽວຊານຄິດໄລ່ ແລະ ການສຶກສາຕົ້ນທຶນໃນການໃຫ້ການອຸດໜູນຕ່າງໆ ທ່ານ ຈອນ ຄຣໍ ເຮັນນິຄັອດ ອາດີດຊ່ຽວຊານຂອງໂຄງການອົງການແຮງງານສາກົນ ທີ່ໄດ້ປະກອບຂໍ້ມູນຕ່າງໆ ແລະ ໃຫ້ຄຳເຫັນ ອັນສຳຄັນ ໃນການສ້າງຍຸດທະສາດສະບັບນີ້.

ກະຊວງແຮງງານ ແລະ ສະຫວັດດການສັງຄົມ ໃນນາມຕາງໜ້າລັດຖະບານແຫ່ງ ສປປ ລາວ ສະແດງຄວາມຂອບໃຈມາຍັງບັນດາອົງການເຄືອຂ່າຍ ສປຊ ປະຈຳ ສປປ ລາວ ເປັນຕົ້ນ ຫ້ອງການປະສານງານຂອງຜູ້ປະສານງານອົງການເຄືອຂ່າຍ ສປຊ, ອົງການສະຫະປະຊາຊາດເພື່ອເດັກ, ອົງການອະນາໄມໂລກ, ອົງການກອງທຶນປະຊາກອນສະຫະປະຊາຊາດ, ອົງການອາຫານໂລກ ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ ລວມທັງສະຖານທູດອົສຕຣາລີ ປະຈຳລາວ, ຫ້ອງການສະຫະພັນເອີຣົບປະຈຳລາວ, ອົງການສາກົນເພື່ອຜູ້ພິການ, ອົງການສາກົນເພື່ອຜູ້ອາຍຸສູງ, ຫ້ອງການກອງທຶນສາກົນ, ອົງການອັອສຟາມສາກົນ, ບັນດາອົງການຄູ່ຮ່ວມພັດທະນາ ແລະ ອົງການທາງສັງຄົມອື່ນໆ ທີ່ໄດ້ໃຫ້ການຮ່ວມມືໃນການສະໜັບສະໜູນດ້ານແຫຼ່ງທຶນ ແລະ ເຕັກນິກວິຊາການເຂົ້າໃນການສ້າງຍຸດທະສາດສະບັບນີ້.

## ການອະທິບາຍຄຳສັບ

**ການປົກປ້ອງສັງຄົມ** ໝາຍເຖິງ ນະໂຍບາຍ ແລະ ໂຄງການທີ່ອອກແບບເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ປ້ອງກັນບໍ່ໃຫ້ເກີດຄວາມທຸກຍາກ, ຄວາມດ້ອຍໂອກາດ ແລະ ການຖືກຈຳແນກຈາກສັງຄົມ ໃນຕະຫຼອດໄລຍະຮອບວຽນການດຳລົງຊີວິດ. ລະບົບການປົກປ້ອງສັງຄົມ ເປັນການແກ້ໄຂຂົງເຂດນະໂຍບາຍທັງໝົດເຫຼົ່ານີ້ ໂດຍການປະສົມປະສານລະບົບປົກປ້ອງສັງຄົມແບບປະກອບທຶນສົມທົບ (ລະບົບປະກັນສັງຄົມ ແລະ ລະບົບປະກັນສຸຂະພາບ) ແລະ ລະບົບອຸດ ໜູນແບບບໍ່ປະກອບທຶນສົມທົບ (ລະບົບສະຫວັດດີການສັງຄົມ) ໂດຍການສະໜັບສະໜູນຈາກງົບປະມານຂອງລັດ.

**ການປົກປ້ອງສັງຄົມຂັ້ນພື້ນຖານ** ໝາຍເຖິງ ການຄ້ຳປະກັນສັງຄົມຂັ້ນພື້ນຖານໃນລະດັບຊາດ ເພື່ອຮັບປະກັນ ໄລຍະວົງຈອນຊີວິດຂອງບຸກຄົນ ຂັ້ນພື້ນຖານ ທີ່ຕ້ອງການເຂົ້າເຖິງການປິ່ນປົວສຸຂະພາບທີ່ຈຳເປັນ ແລະ ການມີລາຍຮັບທີ່ຄ້ຳປະກັນຂັ້ນພື້ນຖານ ເພື່ອໃຫ້ສາມາດເຂົ້າເຖິງສິນຄ້າ ແລະ ການບໍລິການພຽງພໍ ຕາມທີ່ກຳນົດເປັນຖານການປົກປ້ອງສັງຄົມໃນລະດັບຊາດ.

**ການປະກັນສັງຄົມ** ໝາຍເຖິງ ການຮັບປະກັນໃຫ້ຜູ້ປະກັນຕົນ ແລະ ສະມາຊິກຄອບຄົວໄດ້ຮັບການອຸດໜູນຈາກກອງທຶນປະກັນສັງຄົມ ເພື່ອຄ້ຳປະກັນ ການດຳລົງຊີວິດ ຂັ້ນພື້ນຖານ ເມື່ອມີການປິ່ນປົວສຸຂະພາບ, ເກີດອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ, ອອກລູກ, ປ່ອຍການ, ເສຍກຳລັງແຮງງານ, ບຳນານ, ເສຍຊີວິດ, ອຸດໜູນສະມາຊິກຄອບຄົວ ແລະ ວ່າງງານ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ແຕ່ລະກໍລະນີ ໂດຍແມ່ນລະບົບປະກອບທຶນສົມທົບຈາກຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ.

**ການປະກັນສຸຂະພາບ** ໝາຍເຖິງ ການຮັບປະກັນໃຫ້ຜູ້ເປັນສະມາຊິກໄດ້ເຂົ້າເຖິງການບໍລິການປິ່ນປົວສຸຂະພາບ ໂດຍນຳໃຊ້ທຶນສົມທົບທີ່ໄດ້ຈ່າຍລ່ວງໜ້າ ແລະ ງົບປະມານສົມທົບຂອງລັດ.

**ສະຫວັດດີການສັງຄົມ** ໝາຍເຖິງ ລະບົບການບໍລິການສັງຄົມ ເພື່ອປ້ອງກັນ, ແກ້ໄຂບັນຫາສັງຄົມ ແລະ ການພັດທະນາສັງຄົມ ລວມທັງການສົ່ງເສີມຄວາມໝັ້ນຄົງທາງສັງຄົມ ເພື່ອໃຫ້ປະຊາຊົນດຳລົງຊີວິດໃນສັງຄົມ ຕາມລະດັບມາດຕະຖານ ໂດຍຕອບສະໜອງການບໍລິການຕາມຄວາມຕ້ອງການຂັ້ນພື້ນຖານຂອງປະຊາຊົນ ໃຫ້ໄດ້ຮັບການພັດທະນາຄຸນນະພາບຊີວິດ ຢ່າງທົ່ວເຖິງ ແລະ ເປັນທຳ ລວມທັງດ້ານການສຶກສາທີ່ດີ, ການມີສຸຂະພາບດີ, ການມີທີ່ຢູ່ອາໃສ, ການມີວຽກເຮັດງານທຳ, ການມີລາຍໄດ້, ມີສະຫວັດດີການດ້ານແຮງງານ ແລະ ການມີຄວາມໝັ້ນຄົງທາງສັງຄົມ.

**ການອຸດໜູນແບບບໍ່ປະກອບທຶນສົມທົບ** ໝາຍເຖິງ ການອຸດໜູນທີ່ຊ່ວຍເຫຼືອຜູ້ໄດ້ຮັບການອຸດໜູນ ໂດຍທີ່ບໍ່ຕ້ອງປະກອບທຶນສົມທົບ.

**ການກຳນົດເປົ້າໝາຍ** ໝາຍເຖິງ ການຄັດເລືອກເອົາເປົ້າໝາຍທີ່ກ່ຽວຂ້ອງ ເພື່ອພິຈາລະນາໃຫ້ການຊ່ວຍເຫຼືອ ຫຼື ການອຸດໜູນໃດໜຶ່ງ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້.

**ກຸ່ມດ້ອຍໂອກາດ** ໝາຍເຖິງ ກຸ່ມທີ່ມີຄວາມສ່ຽງສະເພາະຈາກໄພຂົ່ມຂູ່ດ້ານສັງຄົມ, ເສດຖະກິດ, ການເມືອງ ຫຼື ອື່ນໆ.

**ການປົກຄຸມ** ໝາຍເຖິງ ການເຂົ້າເຖິງການບໍລິການປົກປ້ອງສັງຄົມຂອງປະຊາຊົນ ຕາມກຸ່ມເປົ້າໝາຍຕ່າງໆ.

**ອັດຕາການປົກຄຸມ** ໝາຍເຖິງການວັດແທກລະດັບການເຂົ້າເຖິງການປົກປ້ອງສັງຄົມຂອງປະຊາຊົນ ຕາມກຸ່ມເປົ້າໝາຍ ແລະ ສ່ວນໃຫຍ່ແມ່ນວັດແທກໂດຍອັດຕາສ່ວນຮ້ອຍຂອງຜູ້ທີ່ຖືກປົກຄຸມສົມທຽບໃສ່ກັບຈຳນວນຜູ້ມີເງື່ອນໄຂ.

**ການອຸດໜູນແບບທຸກທົ່ວໜ້າ** ໝາຍເຖິງ ລະບົບການເຂົ້າເຖິງການອຸດໜູນ ແລະ ການບໍລິການ ທີ່ປະຕິບັດຕໍ່ປະຊາຊົນທຸກຄົນພາຍໃນປະເທດ.

**ເສັ້ນແບ່ງຄວາມທຸກຍາກ** ໝາຍເຖິງ ລະດັບລາຍຮັບໃດໜຶ່ງ ທີ່ຖືວ່າເປັນພື້ນຖານພຽງພໍ ເພື່ອໃຫ້ຄອບຄົວສາມາດເຂົ້າເຖິງອາຫານ, ທີ່ພັກອາໃສ, ເຄື່ອງນຸ່ງຫົ່ມ ແລະ ຢາປົວພະຍາດ.

**ຄວາມທຸກຍາກ** ໝາຍເຖິງ ການຂາດປັດໃຈພື້ນຖານໃນການດຳລົງຊີວິດປະຈຳວັນ ເປັນຕົ້ນ ຂາດເຂີນສະບຽງອາຫານທີ່ບໍ່ສາມາດສະໜອງພະລັງງານ 2100 ກິໂລກາລໍລີຕໍ່ຄົນຕໍ່ມື້, ຂາດເຂີນເຄື່ອງນຸ່ງຫົ່ມທີ່ຈຳເປັນ, ບໍ່ມີທີ່ຢູ່ອາໄສຖາວອນ, ບໍ່ສາມາດໃຊ້ຈ່າຍໃນການປິ່ນປົວເວລາເຈັບເປັນພື້ນຖານ, ບໍ່ສາມາດໃຊ້ຈ່າຍເຂົ້າໃນການສຶກສາຂັ້ນພື້ນຖານ, ບໍ່ມີເງື່ອນໄຂເຂົ້າເຖິງຕາໜ່າງການບໍລິການດ້ານພື້ນຖານໂຄງລ່າງທີ່ຈຳເປັນຂອງສັງຄົມ.

**ມາດຕະຖານພັດທະນາ** ໝາຍເຖິງ ການກຳນົດບັນດາເງື່ອນໄຂທີ່ມີລັກສະນະຮອບດ້ານ ເພື່ອວັດແທກຜົນສຳເລັດໃນການສ້າງຄອບຄົວ, ບ້ານພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ແລະ ເມືອງເຂັ້ມແຂງຮອບດ້ານໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດ ໃນແຕ່ລະໄລຍະ.

**ຜູ້ທຸກຍາກ** ໝາຍເຖິງ ບຸກຄົນທີ່ມີລາຍຮັບສະເລ່ຍຄິດໄລ່ເປັນເງິນກີບ ຕໍ່າກວ່າ 192.000 ກີບຕໍ່ເດືອນ.

**ຜູ້ດ້ອຍໂອກາດ** ໝາຍເຖິງ ຜູ້ທີ່ຂາດເງື່ອນໄຂໃນການເຂົ້າເຖິງການບໍລິການດ້ານສຶກສາ, ຝຶກວິຊາຊີບ, ສີມືແຮງງານ, ວຽກເຮັດງານທຳ, ການປິ່ນປົວສຸຂະພາບ, ການໃຫ້ຄຳປຶກສາດ້ານຈິດໃຈ, ສະບຽງອາຫານ, ເຄື່ອງໃຊ້ສອຍ ແລະ ທີ່ພັກອາໄສ.

**ຜູ້ອາຍຸສູງປ່ຽວພອຍ** ໝາຍເຖິງ ບຸກຄົນທີ່ມີອາຍຸ ຫົກສິບປີຂຶ້ນໄປທີ່ທຸກຍາກ, ຂາດທີ່ເພິ່ງພາອາໄສ, ຂາດຜູ້ດູແລ ຫຼື ອາໄສຢູ່ນຳຄອບຄົວທີ່ທຸກຍາກ.

**ເດັກທີ່ຕ້ອງການປົກປ້ອງພິເສດ** ໝາຍເຖິງ ເດັກກຳພ້າ, ກຳພອຍ, ເດັກພິການ, ເດັກທີ່ຖືກປະຖິ້ມ, ເດັກທີ່ຖືກທຳຮ້າຍຮ່າງກາຍ, ເດັກທີ່ຖືກຂູດຮີດ ແລະ ທາລຸນທາງເພດ, ເດັກທີ່ຖືກເຄາະຮ້າຍຈາກການຄ້າມະນຸດ, ເດັກທີ່ຕົກຢູ່ໃນສະພາບອັນຕະລາຍຮ້າຍແຮງຕໍ່ສຸຂະພາບ, ຊີວິດ ຫຼື ຖືກຂູດຮີດແຮງງານ.

**ຜູ້ພິການ** ໝາຍເຖິງ ບຸກຄົນທີ່ມີຄວາມບົກພ່ອງທາງດ້ານ ຮ່າງກາຍ, ການເບິ່ງເຫັນ, ການໄດ້ຍິນ ແລະ ການປາກເວົ້າ, ສະຕິປັນຍາ, ຄວາມຈື່ຈຳ ແລະ ດ້ານອື່ນ ບວກກັບສິ່ງກີດຂວາງ ຊຶ່ງເປັນອຸປະສັກໃນການເຄື່ອນໄຫວຊີວິດປະຈຳວັນ, ການຮຽນຮູ້ ແລະ ການເຂົ້າຮ່ວມກິດຈະກຳທາງສັງຄົມ.

**ການສົງເຄາະ** ໝາຍເຖິງ ການໃຫ້ການຊ່ວຍເຫຼືອ ແລະ ການບໍລິການ ເພື່ອຕອບສະໜອງຄວາມຕ້ອງການດ້ານວັດຖຸ ແລະ ຈິດໃຈ.

**ຜູ້ຖືກເຄາະຮ້າຍຈາກໄພພິບັດ** ໝາຍເຖິງ ຜູ້ທີ່ຖືກເຄາະຮ້າຍຈາກໄພອັນຕະລາຍທີ່ເກີດຂຶ້ນຈາກໄພທຳມະຊາດ ແລະ ການກະທຳຂອງມະນຸດ ເຊັ່ນ: ອັກຄີໄພ, ອຸທົກກະໄພ, ວາຕະໄພ, ໄພແຫ້ງແລ້ງ, ສັດຕູພືດ, ພະຍາດລະບາດ, ອາກາດໜາວ, ໝາກເຫັບຕົກ, ດິນເຈື່ອນ, ແຜ່ນດິນໄຫວ, ພູໄຟລະເບີດ ຊຶ່ງເກີດຂຶ້ນ ແລະ ສ້າງຄວາມເສຍຫາຍຕໍ່ຊີວິດ, ຊັບສິນ, ເສດຖະກິດ ແລະ ສິ່ງແວດລ້ອມ.

**ການອຸດໜູນ** ໝາຍເຖິງ ການໃຫ້ການຊ່ວຍເຫຼືອດ້ານວັດຖຸ ຫຼື ເງິນອຸດໜູນໂດຍກົງ, ເປັນປະຈຳ ແລະ ເປັນການໃຫ້ອຸດໜູນແບບບໍ່ປະກອບທຶນສົມທົບ ໃຫ້ຜູ້ດ້ອຍໂອກາດ ທີ່ທຸກຍາກ ເພື່ອໃຫ້ສາມາດມີລາຍຮັບເປັນປະຈຳ ເປັນຕົ້ນ ການໃຫ້ເບ້ຍລ້ຽງຜູ້ອາຍຸສູງທີ່ປ່ຽວພອຍ, ເງິນອຸດໜູນເດັກທີ່ຕ້ອງການປົກປ້ອງພິເສດ, ຜູ້ພິການ ທີ່ບໍ່ສາມາດຊ່ວຍເຫຼືອຕົນເອງ ແລະ ນັກຮຽນທີ່ທຸກຍາກ.

**ທຶນການສຶກສາ** ໝາຍເຖິງ ການໃຫ້ເງິນອຸດໜູນ ໃຫ້ນັກຮຽນທີ່ທຸກຍາກ ແລະ ດ້ອຍໂອກາດ ໃນຊັ້ນມັດທະຍົມຕົ້ນ, ມັດທະຍົມປາຍ ແລະ ອາຊີວະສຶກສາ.

**ທຶນຝຶກວິຊາຊີບ ແລະ ສີມືແຮງງານ** ໝາຍເຖິງ ການໃຫ້ເງິນອຸດໜູນ ຫຼື ຄ່າຄອງຊີບ ໃຫ້ນັກຮຽນທີ່ທຸກຍາກ ແລະ ດ້ອຍໂອກາດ ເພື່ອເຂົ້າຮຽນອາຊີວະສຶກສາ, ການຝຶກອົບຮົມວິຊາຊີບ ຫຼື ສີມືແຮງງານ.

**ທຶນບໍລິຫານໂຮງຮຽນ** ໝາຍເຖິງ ງົບປະມານທີ່ສະໜັບສະໜູນໃຫ້ໂຮງຮຽນປະຖົມ ແລະ ມັດທະຍົມ ເພື່ອທົດແທນການເກັບຄ່າທຳນຽມຕ່າງໆ ແລະ ຮັບປະກັນການສະໜອງການສຶກສາແບບບໍ່ໄດ້ເສຍຄ່າ.

**ອາຫານໃນໂຮງຮຽນ** ໝາຍເຖິງ ການສະໜອງອາຫານສວາຍໃຫ້ເດັກໃນໂຮງຮຽນກຽມອານຸບານ, ໂຮງຮຽນອານຸບານ, ໂຮງຮຽນປະຖົມໃນເຂດຊົນນະບົດ, ເຂດຫ່າງໄກສອກຫລີກ ແລະ ເຂດທີ່ທຸກຍາກ ໂດຍນຳໃຊ້ວັດຖຸດິບຈາກສວນຄົວໃນໂຮງຮຽນ ພ້ອມທັງຈັດສັນງົບປະມານຈຳນວນໜຶ່ງໃຫ້ໂຮງຮຽນ ເພື່ອຊື້ອາຫານສວາຍຈາກຊຸມຊົນ.

**ເບ້ຍລ້ຽງອຸດໜູນນັກຮຽນທຸກຍາກ** ໝາຍເຖິງ ເງິນອຸດໜູນສຳລັບຄ່າເຄື່ອງແບບນັກຮຽນ, ຄ່າອຸປະກອນການສຶກສາ ແລະ ຄ່າໃຊ້ຈ່າຍອື່ນໆທີ່ຈຳເປັນ.

**ຜູ້ອອກແຮງງານໃນລະບົບ** ໝາຍເຖິງ ຜູ້ອອກແຮງງານໃນຫົວໜ່ວຍແຮງງານ ແລະ ຜູ້ທີ່ເຮັດທຸລະກິດ ຫຼື ການບໍລິການໃດໜຶ່ງ ທີ່ໄດ້ຂຶ້ນທະບຽນຕາມກົດໝາຍ ແລະ ລະບຽບການ ຊຶ່ງມີຜົນຕໍ່ເສດຖະກິດ.

**ຜູ້ອອກແຮງງານນອກລະບົບ** ໝາຍເຖິງ ຜູ້ອອກແຮງງານ ທີ່ເຮັດວຽກແບບສ່ວນບຸກຄົນ ທີ່ບໍ່ມີຜົນຕໍ່ເສດຖະກິດ.

**ຜູ້ອາຍຸເກນອອກແຮງງານທີ່ທຸກຍາກ** ໝາຍເຖິງ ບຸກຄົນທີ່ມີອາຍຸແຕ່ 14 - 60 ປີ ຊຶ່ງສາມາດອອກແຮງງານໄດ້ ແລະ ມີລາຍຮັບສະເລ່ຍຕ່ຳກວ່າຄ່າແຮງງານຕ່ຳສຸດ.

**ຜູ້ວ່າງງານ** ໝາຍເຖິງ ບຸກຄົນທີ່ມີອາຍຸແຕ່ 14 - 60 ປີ ທີ່ຍັງບໍ່ມີເງື່ອນໄຂໄດ້ມີວຽກເຮັດງານທຳ ຫຼື ພວມຊອກຫາວຽກເຮັດງານທຳຢູ່.

**ເງິນເພື່ອວຽກ** ໝາຍເຖິງເງິນທີ່ຈ່າຍໃຫ້ຕາມໂຄງການສາທາລະນະເພື່ອການອຸດໜູນກັບບຸກຄົນທີ່ເປັນກຸ່ມດ້ອຍໂອກາດ ຫຼື ໃຫ້ກັບຄົວເຮືອນທີ່ດ້ອຍໂອກາດ ເພື່ອເປັນການຕອບແທນກັບການນຳໃຊ້ແຮງງານຂອງເຂົາ.

**ໂຄງການວຽກສະທາລະນະ** ໝາຍເຖິງ ໂຄງການຍ່ອຍຂອງການປົກປ້ອງສັງຄົມ ຊຶ່ງໂດຍລວມແລ້ວ ແມ່ນກຳນົດເປັນວຽກລິເລີ່ມເພື່ອການພັດທະນາໂຄງລ່າງພື້ນຖານຂອງສາທາລະນະ ທີ່ມີການນຳໃຊ້ແຮງງານຄົນ ໂດຍຕອບແທນຄ່າແຮງງານ ເປັນເງິນຫຼື ເປັນອາຫານ ເພື່ອສະໜັບສະໜູນຜູ້ທຸກຍາກໃຫ້ມີວຽກເຮັດງານທຳ ໃນຍາມຕິດຂັດດ້ານລາຍຮັບ ໂດຍສະເພາະໃນຍາມ ທີ່ລຳບາກ ຫຼື ອຶດຫິວ ເພື່ອສ້າງວຽກເຮັດງານທຳ ຕາມໂຄງການພື້ນຖານໂຄງລ່າງ ເປັນຕົ້ນ ໂຄງການສ້າງເສັ້ນທາງຊຸມຊົນ, ຊົນລະປະທານ, ການປູກຕົ້ນໄມ້, ການສ້າງໂຮງຮຽນ, ສຸກສາລາ ແລະ ອື່ນໆ.

**ກົນໄກການຕິດຕາມ ແລະ ປະເມີນຜົນ** ໝາຍເຖິງ ເຄື່ອງມືການຕິດຕາມ ແລະ ປະເມີນຜົນເພື່ອຮັບໃຊ້ຫຼາຍໜ້າທີ່ ຊຶ່ງໃນດ້ານໜຶ່ງ ເຮັດໃຫ້ສາມາດປະເມີນໃຫ້ເຫັນຜົນການຈັດຕັ້ງປະຕິບັດຄາດໝາຍຜົນໄດ້ຮັບຢູ່ໃນລະດັບໃດ ແລະ ປະກອບດ້ວຍການເກັບກຳຂໍ້ມູນສະເພາະດ້ານການບໍລິຫານ ແລະ ແຜນງານເປັນປະຈຳ, ປະເມີນການຊ່ວຍເຫຼືອ ຫຼື ການອຸດໜູນມີປະສິດທິພາບແນວໃດ, ການຕິດຕາມມີຂະບວນການຕໍ່ເນື່ອງ ແລະ ເຊື່ອມສານກັບການຈັດຕັ້ງປະຕິບັດໂຄງການແນວໃດ. ອີກດ້ານໜຶ່ງ ການປະເມີນຜົນ ຈະໄດ້ເຫັນຂົງເຂດສະເພາະຂອງການຈັດຕັ້ງປະຕິບັດ, ການດຳເນີນງານຂອງໂຄງການ (ປະເມີນຂັ້ນຕອນ) ແລະ ປະເມີນຜົນກະທົບ (ການປະເມີນຜົນໄດ້ຮັບ) ໃນການຈັດຕັ້ງປະຕິບັດ.

# ຄຳຫຍໍ້ ແລະ ຄວາມໝາຍ

| | |
|---|---|
| ABND | ການປຶກສາຫາລືສາມຝ່າຍກ່ຽວກັບວຽກງານປົກປ້ອງສັງຄົມໂດຍອີງໃສ່ຜົນການປະເມີນ |
| ASEAN | ປະຊາຄົມອາຊີຕາເວັນອອກ |
| DP | ຄູ່ຮ່ວມພັດທະນາ |
| GDP | ລວມຍອດຜະລິດຕະພັນພາຍໃນ |
| GGHE | ລາຍຈ່າຍລວມແຫ່ງລັດທີ່ຈັດສັນໃສ່ຂະແໜງສາທາລະນະສຸກ |
| ILO | ອົງການແຮງງານສາກົນ |
| IMF | ກອງທຶນການເງິນສາກົນ |
| LAK | ລາວກີບ |
| Lao PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| LECS | ການສຳຫລວດການໃຊ້ຈ່າຍຄົວເຮືອນຂອງ ລາວ |
| LFTU | ສະຫະພັນກຳມະບານລາວ |
| LNCCI | ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ |
| LSB | ສູນສະຖິຕິແຫ່ງຊາດ |
| MIS | ລະບົບຂໍ້ມູນຂ່າວສານ |
| MNCH | ສຸຂະພາບແມ່ ແລະ ເດັກ |
| MoLSW | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| MoES | ກະຊວງສຶກສາທິການ ແລະ ກິລາ |
| MoHA | ກະຊວງພາຍໃນ |
| MoF | ກະຊວງການເງິນ |
| MoH | ກະຊວງສາທາລະນະສຸກ |
| MoICT | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ |
| MoPI | ກະຊວງແຜນການ ແລະ ການລົງທຶນ |
| NCRDPE | ຄະນະກຳມະການແຫ່ງຊາດ ເພື່ອພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ |
| NHI | ກອງທຶນປະກັນສຸຂະພາບແຫ່ງຊາດ |
| NHIB | ຫ້ອງການປະກັນສຸຂະພາບແຫ່ງຊາດ |
| NSEDP | ແຜນພັດທະນາເສດຖະກິດ ສັງຄົມ |
| NSMP | ໂຄງການອາຫານກາງເວັນ |
| NSPC | ຄະນະກຳມະການປົກປ້ອງສັງຄົມແຫ່ງຊາດ |
| NSSF | ກອງທຶນປະກັນສັງຄົມແຫ່ງຊາດ |
| NUOL | ມະຫາວິທະຍາໄລແຫ່ງຊາດ |
| PRF | ກອງທຶນລຶບລ້າງຄວາມທຸກຍາກ |
| RAP | ເຄື່ອງມືປະເມີນຜົນ |
| SASS | ກອງທຶນປະກັນສັງຄົມພາກລັດຖະກອນ |

| | |
|---|---|
| SDG | ເປົ້າໝາຍພັດທະນາແບບຍືນຍົງ |
| SPF | ການປົກປ້ອງສັງຄົມຂັ້ນພື້ນຖານ |
| SSO | ອົງການປະກັນສັງຄົມແຫ່ງຊາດ |
| TVET | ອະຊີວະສຶກສາ ແລະ ການຝຶກອົບຮົມ |
| UXO | ລະເບີດທີ່ບໍ່ທັນແຕກ |
| WPP | ການຄາດຄະເນປະຊາກອນໂລກ |

## I. ການສະເໜີ

### 1. ບົດບາດ ແລະ ຄວາມສຳຄັນຂອງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ

ການເຕີບໂຕດ້ານເສດຖະກິດ ແບບມີສ່ວນຮ່ວມເປັນປັດໃຈ ທີ່ສຳຄັນ ໃນການສົ່ງເສີມການເຕີບໂຕຂອງເສດຖະກິດ ແລະ ເພື່ອຫຼຸດຊ່ອງຫວ່າງຂອງຄວາມບໍ່ເທົ່າທຽມກັນ ແລະ ເພື່ອກ້າວໄປສູ່ການຫຼຸດຜ່ອນຄວາມທຸກຍາກ. ເນື່ອງຈາກ ຍັງບໍ່ມີຄວາມສະເໝີພາບໃນການສ້າງລາຍໄດ້ ແລະ ການຮັບປະກັນສິດຜົນປະໂຫຍດໃຫ້ທຸກຄົນທີ່ໄດ້ຮັບຈາກການພັດທະນາໃຫ້ຫຼາຍຂຶ້ນຊຶ່ງໃນໄລຍະຜ່ານມາ ຍັງມີຄວາມທ້າທາຍໃນການຜັນແຍກຂໍ້ວຮັ່ງ ແລະ ຂໍ້ທຸກໃນສັງຄົມ ໂດຍສະເພາະແມ່ນຄວາມຮັ່ງມີໃນຕົວເມືອງ ແລະ ຄວາມທຸກຍາກໃນຊົນນະບົດ ຊຶ່ງຍັງມີຄອບຄົວທີ່ທຸກຍາກ ແລະ ດ້ອຍໂອກາດທີ່ບໍ່ສາມາດດູແລເດັກ, ຜູ້ພິການ ແລະ ຜູ້ອາຍຸສູງທີ່ປ່ຽວພອຍ ແລະ ກຸ່ມດ້ອຍໂອກາດອື່ນໆ.

ໃນຂະນະທີ່ເສດຖະກິດມີການເຕີບໂຕ ຢ່າງຕໍ່ເນື່ອງ ກໍມີຄວາມອາດສາມາດໃນການຈັດສັນງົບປະມານຂອງລັດ ເພື່ອຈັດຕັ້ງປະຕິບັດລະບົບປົກປ້ອງສັງຄົມ, ຊ່ວຍເຫຼືອກຸ່ມຜູ້ດ້ອຍໂອກາດ, ຫຼຸດຄວາມບໍ່ເທົ່າທຽມດ້ານເສດຖະກິດ-ສັງຄົມ ແລະ ແບ່ງປັນການແຈກຢາຍຄືນຜົນໄດ້ຮັບຈາກການຂະຫຍາຍຕົວຂອງເສດຖະກິດ. ການລົງທຶນດັ່ງກ່າວບໍ່ພຽງແຕ່ໃຫ້ປະໂຫຍດກັບຜູ້ທີ່ມີຄວາມຕ້ອງການເທົ່ານັ້ນ, ແຕ່ຍັງປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມຂອງປະເທດ.

ລັດຖະບານ ແຫ່ງ ສປປ ລາວ ມີຄວາມຕັ້ງໃຈໃນການຂະຫຍາຍການປົກຄຸມໃນການປົກປ້ອງສັງຄົມທຸກທົ່ວໜ້າ ເທື່ອລະກ້າວຕາມຄວາມອາດສາມາດດ້ານຊັບພະຍາກອນ ແລະ ເງື່ອນໄຂການພັດທະນາຂອງເສດຖະກິດ-ສັງຄົມ ແລະ ພະຍາຍາມເອົາໃຈໃສ່ພັດທະນາວຽກປົກປ້ອງສັງຄົມຂັ້ນພື້ນຖານ ເພື່ອປົກປ້ອງພົນລະເມືອງທຸກຄົນຈາກຜົນກະທົບດ້ານເສດຖະກິດ ແລະ ສັງຄົມ, ໄພພິບັດຈາກທຳມະຊາດ ແລະ ຄວາມບອບບາງອື່ນໆ.

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຮອດປີ 2025 ມີເປົ້າໝາຍ ເພື່ອເພີ່ມທະວີ ແລະ ປະກອບສ່ວນເຂົ້າໃນຄວາມຕັ້ງໃຈຂອງລັດຖະບານໃນການຈັດຕັ້ງປະຕິບັດນະໂຍບາຍສາກົນ ແລະ ຈຸດປະສົງຍຸດທະສາດແຫ່ງຊາດ ໂດຍເລັງເປົ້າໝາຍເພື່ອຮັບຮູ້ເຖິງເນື້ອໃນຂອງຖະແຫຼງການ, ສົນທິສັນຍາ ແລະ ຂໍ້ແນະນຳກ່ຽວກັບການຈັດຕັ້ງປະຕິບັດການປົກປ້ອງສັງຄົມສຳລັບທຸກຄົນ ເປັນຕົ້ນ ຖະແຫຼງການສາກົນວ່າດ້ວຍສິດທິມະນຸດ, ອານຸສັນຍາສາກົນວ່າດ້ວຍສິດທິດ້ານເສດຖະກິດ, ສັງຄົມ ແລະ ວັດທະນາທຳ, ສົນທິສັນຍາຂອງອົງການແຮງງານສາກົນວ່າດ້ວຍມາດຕະຖານປະກັນສັງຄົມ, ຂໍ້ແນະນຳຂອງອົງການແຮງງານສາກົນວ່າດ້ວຍການປົກປ້ອງສັງຄົມຂັ້ນພື້ນຖານ ແລະ ຖະແຫຼງການອາຊຽນວ່າດ້ວຍການຂະຫຍາຍການປົກປ້ອງສັງຄົມ. ເປົ້າໝາຍການພັດທະນາແບບຍືນຍົງ ຫຼື SDGs ມີບົດບາດສຳຄັນໃນການເປັນແນວທາງຊ່ວຍໃຫ້ ສປປ ລາວ ບັນລຸເປົ້າໝາຍການພັດທະນາເສດຖະກິດ ແລະ ສັງຄົມ. ທັງໝົດນີ້ ເປັນພື້ນຖານສຳຄັນສຳລັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໂດຍສະເພາະເປັນຈຸດໃຈກາງຂອງເປົ້າໝາຍ, ຈຸດປະສົງ ແລະ ກິດຈະກຳ ແລະ ເປັນພື້ນຖານສຳລັບການຕິດຕາມ ແລະ ປະເມີນຜົນສຳເລັດຂອງການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້.

ລັດຖະທຳມະນູນ ແຫ່ງ ສປປ ລາວ ໄດ້ຮັບຮູ້ເຖິງຄວາມເອົາໃຈໃສ່ຂອງລັດໃນການຕັ້ງໜ້າພັດທະນາການສຶກສາແຫ່ງຊາດໃຫ້ມີຄຸນນະພາບ, ສ້າງໂອກາດ ແລະ ເງື່ອນໄຂໃຫ້ປະຊາຊົນໄດ້ຮັບການສຶກສາ ຢ່າງທົ່ວເຖິງ ໂດຍສະເພາະປະຊາຊົນ ທີ່ຢູ່ເຂດຫ່າງໄກສອກຫຼີກ, ຊົນເຜົ່າ, ແມ່ຍິງ, ເດັກນ້ອຍ, ຜູ້ດ້ອຍໂອກາດ ແລະ ຜູ້ພິການ; ລັດເອົາໃຈໃສ່ພັດທະນາສີມືແຮງງານ, ຍົກສູງວິໄນແຮງງານ, ສົ່ງເສີມວິຊາຊີບ ແລະ ວຽກເຮັດງານທຳຂອງປະຊາຊົນ ພ້ອມທັງປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງຜູ້ອອກແຮງງານ; ລັດເອົາໃຈໃສ່ປະຕິບັດນະໂຍບາຍປະກັນສັງຄົມ ແລະ ກຳນົດໃຫ້ເຫັນເຖິງການສະໜັບສະໜູນສິດທິການປົກປ້ອງສັງຄົມຫຼາຍຮູບແບບ.

ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ໄລຍະແຕ່ປີ 2016-2020 ໄດ້ກຳນົດແນວທາງຫຼັກໃນການຈັດຕັ້ງປະຕິບັດການພັດທະນາເສດຖະກິດ, ສັງຄົມ ແລະ ວັດທະນາທຳ ຕິດພັນກັບການພັດທະນາຊົນນະບົດ ແລະ

ການຫຼຸດຜ່ອນຄວາມທຸກຍາກ, ປັບປຸງການພັດທະນາຊັບພະຍາກອນມະນຸດ ໂດຍເນັ້ນໜັກການພັດທະນາການສຶກສາ, ສາທາລະນະສຸກ, ວິຊາຊີບ, ສີມືແຮງງານ, ສ້າງວຽກເຮັດງານທໍາ ແລະ ສ້າງຄວາມສາມັກຄີໃນສັງຄົມ.

## 2. ຂອບເຂດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ

ລັດຖະບານ ແຫ່ງ ສປປ ລາວ ຮັບຮູ້ບົດບາດ ແລະ ຄວາມໝາຍສໍາຄັນຂອງວຽກປົກປ້ອງສັງຄົມ ທີ່ປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ, ຄວາມບໍ່ສະເໝີພາບ, ການພັດທະນາຊັບພະຍາກອນມະນຸດ ແລະ ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເພື່ອໃຫ້ບັນດາກຸ່ມເປົ້າໝາຍຜູ້ດ້ອຍໂອກາດ ແລະ ທຸກຍາກ ໄດ້ມີຫຼັກຄໍ້າປະກັນໃນການໄດ້ຮັບສິດຜົນປະໂຫຍດຈາກຜົນຂອງການພັດທະນາ ແນໃສ່ປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ ແລະ ບໍ່ກັບໄປທຸກຍາກອີກ.

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດສະບັບນີ້ ມີຈຸດປະສົງ ເພື່ອສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດລະບົບການປົກປ້ອງສັງຄົມ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ມີຜົນສໍາເລັດ ຢ່າງກ້ວາງຂວາງກ່ວາເກົ່າ ພ້ອມທັງປະກອບສ່ວນອັນສໍາຄັນເຂົ້າໃນການພັດທະນາຊັບພະຍາກອນມະນຸດ, ແຜນພັດທະນາຂອງຂະແໜງການທີ່ກ່ຽວຂ້ອງ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ. ເພື່ອໃຫ້ບັນລຸເປົ້າໝາຍເຫຼົ່ານີ້, ຍຸດທະສາດສະບັບນີ້ ໄດ້ກໍານົດວິໄສທັດຮອດປີ 2030, ເປົ້າໝາຍ ແລະ ຈຸດປະສົງຍຸດທະສາດ ເພື່ອພັດທະນາລະບົບປົກປ້ອງສັງຄົມຮອດປີ 2025 ໂດຍລວມມີ 3 ຈຸດປະສົງ ຄື: ວຽກປະກັນສຸຂະພາບ, ວຽກປະກັນສັງຄົມ ແລະ ວຽກສະຫວັດດີການສັງຄົມ ຊຶ່ງໃນແຕ່ລະຈຸດປະສົງ ໄດ້ກໍານົດບັນດາກິດຈະກໍາຕ່າງໆເພື່ອສູ້ຊົນພັດທະນາລະບົບການປົກປ້ອງສັງຄົມໃຫ້ໄປຄຽງຄູ່ກັບການເຕີບໂຕທາງເສດຖະກິດ, ນໍາໃຊ້ໝາກຜົນຂອງການພັດທະນາ, ການແບ່ງປັນລາຍຮັບແຫ່ງຊາດ ແລະ ການມີສ່ວນຮ່ວມຂອງກຸ່ມເປົ້າໝາຍຕ່າງໆເຂົ້າໃນການພັດທະນາວຽກປົກປ້ອງສັງຄົມໃຫ້ເປັນລະບົບ, ເຂັ້ມແຂງ ແລະ ມີປະສິດທິພາບດີຂຶ້ນ ເພື່ອບັນລຸເປົ້າໝາຍການປົກຄຸມໃນການປົກປ້ອງສັງຄົມສໍາລັບທຸກຄົນ ໂດຍອີງໃສ່ຄວາມອາດສາມາດດ້ານຊັບພະຍາກອນ, ເງື່ອນໄຂການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປ້ອງພົນລະເມືອງທຸກຄົນຈາກຜົນກະທົບທີ່ບໍ່ຄາດຄິດຈາກເສດຖະກິດ, ສັງຄົມ ແລະ ໄພພິບັດ ເພື່ອປັບປຸງເງື່ອນໄຂການດໍາລົງຊີວິດໃຫ້ດີຂຶ້ນ ໃນຕະຫຼອດໄລຍະວົງຈອນຊີວິດ.

## 3. ຂັ້ນຕອນການສ້າງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດສະບັບນີ້ ແມ່ນສ້າງຂຶ້ນຈາກຜົນການປະເມີນສະພາບການປົກປ້ອງສັງຄົມ ໂດຍການປຶກສາຫາລືຮ່ວມກັນ ໃນລະດັບຊາດ ຊຶ່ງເປັນການປະເມີນແບບມີສ່ວນຮ່ວມ ຂອງອົງການສະຫະປະຊາຊາດ ໂດຍການນໍາໃຊ້ຫຼັກວິຊາການ ຂອງອົງການແຮງງານສາກົນ ຊຶ່ງເປັນວິທີການ ທີ່ມີຄວາມສໍາຄັນໃນການປະເມີນເຖິງລະບົບການປົກປ້ອງສັງຄົມໃນການປົກຄຸມປະຊາກອນທັງໝົດ ໂດຍໄດ້ກໍານົດຊ່ອງຫວ່າງນະໂຍບາຍ ແລະ ບັນຫາໃນການຈັດຕັ້ງປະຕິບັດລະບົບການປົກປ້ອງສັງຄົມ ແລະ ສະເໜີຂໍ້ແນະນໍາ ເພື່ອການປັບປຸງການຂະຫຍາຍການປົກຄຸມໃຫ້ເຂົ້າເຖິງກຸ່ມເປົ້າໝາຍຕ່າງໆ.

ຂັ້ນຕອນການປະເມີນສະພາບການປົກປ້ອງສັງຄົມແມ່ນໄດ້ດໍາເນີນພາຍໃຕ້ການຊີ້ນໍາຂອງຄະນະກໍາມະການຮ່າງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຊຶ່ງເປັນເຈົ້າການໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ບັນດາຂະແໜງການຂອງລັດ ທີ່ກ່ຽວຂ້ອງ, ອົງການແຮງງານສາກົນ ທີ່ໄດ້ສະໜັບສະໜູນດ້ານແຫຼ່ງທຶນ ແລະ ວິຊາການ ຮ່ວມກັບອົງການເຄືອຂ່າຍສະຫະປະຊາຊາດ ໂດຍໄດ້ດໍາເນີນການປະເມີນດ້ວຍການເກັບກໍາ ແລະ ການວິໄຈແຫຼ່ງຂໍ້ມູນທີ່ກ່ຽວຂ້ອງ, ການຈັດກອງປະຊຸມປຶກສາຫາລືຮ່ວມກັນຫຼາຍຄັ້ງ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ ຈຶ່ງໄດ້ສໍາເລັດການສ້າງບົດລາຍງານການປະເມີນ ແລະ ຖືກຮັບຮອງໂດຍກະຊວງແຮງານ ແລະ ສະຫວັດດີການສັງຄົມຮ່ວມກັບອົງການສະຫະປະຊາຊາດ ປະຈໍາ ສປປ ລາວ.
ຄະນະຮັບຜິດຊອບຮ່າງຍຸດທະສາດແຫ່ງຊາດສະບັບນີ້ ໄດ້ອີງໃສ່ຜົນການປະເມີນດັ່ງກ່າວ ເປັນເນື້ອໃນຕົ້ນຕໍໃນການຮ່າງຍຸດທະສາດແຫ່ງຊາດສະບັບນີ້ຂຶ້ນ. ຫຼັກການພື້ນຖານທີ່ອີງໃສ່ໃນການຮ່າງຍຸດທະສາດແຫ່ງຊາດສະບັບນີ້ ແມ່ນອີງໃສ່ການເຂົ້າເຖິງລະບົບການບໍລິການປົກປ້ອງສັງຄົມ, ຄວາມຍືນຍົງ ແລະ ຄຸນນະພາບຂອງລະບົບ ຊຶ່ງໄດ້ຈັດກອງປະຊຸມ

ລະດົມຄວາມຄິດເຫັນ ແລະ ປຶກສາຫາລືກັນຫຼາຍຄັ້ງ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍມີການປຶກສາຫາລືຮ່ວມກັນລະຫວ່າງບັນດາຂະແໜງການຂອງລັດ, ອົງການຕາງໜ້າຜູ້ອອກແຮງງານ, ອົງການຕາງໜ້າຜູ້ໃຊ້ແຮງງານ, ອົງການເຄືອຂ່າຍສະຫະປະຊາຊາດ ແລະ ຄູ່ຮ່ວມພັດທະນາ ທີ່ກ່ຽວຂ້ອງ ຢ່າງກ້ວາງຂວາງ.

ຮ່າງຍຸດທະສາດສະບັບນີ້ ມີໂຄງສ້າງທີ່ເໝາະສົມ ຕາມແບບສະບັບຂອງລາວ ຊຶ່ງປະກອບມີ 4 ພາກ ຄື: ພາກທີ 1 ກ່ຽວກັບການສະເໜີ, ພາກທີ 2 ກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານປົກປ້ອງສັງຄົມ ໃນລະດັບສາກົນ, ພາກພື້ນ ແລະ ສປປ ລາວ, ພາກທີ 3 ກ່ຽວກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແລະ ພາກທີ 4 ກ່ຽວກັບມາດຕະການຈັດຕັ້ງປະຕິບັດ.

## II. ສະພາບວຽກປົກປ້ອງສັງຄົມ ໃນລະດັບສາກົນ, ພາກພື້ນ ແລະ ສປປ ລາວ

### 1. ສະພາບວຽກປົກປ້ອງສັງຄົມ ໃນລະດັບສາກົນ

#### 1.1. ບັນດານິຕິກຳ ແລະ ມາດຕະຖານສາກົນ

ສປປ ລາວ ໄດ້ເປັນພາຄີກັບປະຊາຄົມສາກົນ ໃນການຮັບຮອງ ແລະ ຈັດຕັ້ງປະຕິບັດບັນດາສົນທິສັນຍາ ແລະ ຂໍ້ແນະນຳທີ່ສຸມໃສ່ສິດທິໃນການເຂົ້າເຖິງການປົກປ້ອງສັງຄົມ ແລະ ການພັດທະນາລະບົບປົກປ້ອງສັງຄົມເປັນຕົ້ນ:

**ຖະແຫຼງການສາກົນວ່າດ້ວຍສິດທິມະນຸດ** ປີ 1984 ໄດ້ລະບຸການປົກປ້ອງສັງຄົມເປັນສິດທິທາງສັງຄົມ ແລະເສດຖະກິດ ຊຶ່ງໃນມາດຕາ 22 ແລະ ມາດຕາ 25 ລະບົບປົກປ້ອງສັງຄົມເປັນສິດທິສຳລັບທຸກຄົນໃນການເຂົ້າເຖິງການປິ່ນປົວສຸຂະພາບ, ການສຶກສາ, ວຽກທີ່ມີຄຸນຄ່າ ແລະ ເປັນທຳ, ມາດຕະຖານການດຳລົງຊີວິດທີ່ພຽງພໍຕະຫຼອດໄລຍະຮອບວຽນໃນການດຳລົງຊີວິດ.

**ສົນທິສັນຍາສາກົນວ່າດ້ວຍສິດທິດ້ານເສດຖະກິດ, ສັງຄົມ ແລະ ວັດທະນາທຳ** ປີ 1966 ໄດ້ລະບຸສິດທິໄດ້ຮັບການປົກປ້ອງສັງຄົມ ຊຶ່ງມາດຕາ 19 ໄດ້ກຳນົດການປະກັນສັງຄົມ ແລະ ມາດຕາອື່ນ ໄດ້ກຳນົດທຸກຄົນຕ້ອງດຳລົງຊີວິດຢູ່ໃນເກນບໍ່ໃຫ້ຕໍ່າກ່ວາມາດຕະຖານໃນການດຳລົງຊີວິດ ແລະ ທຸກຄົນຕ້ອງສາມາດເຂົ້າເຖິງການບໍລິການສັງຄົມທີ່ຈຳເປັນ.

**ສົນທິສັນຍາ ວ່າດ້ວຍມາດຕະຖານປະກັນສັງຄົມຂັ້ນພື້ນຖານ** ສະບັບເລກທີ 102 ປີ 1952 ແລະ **ຂໍ້ແນະນຳຂອງອົງການແຮງງານສາກົນ ວ່າດ້ວຍການປົກປ້ອງສັງຄົມຂັ້ນພື້ນຖານ** ສະບັບເລກທີ 202 ປີ 2012 ໄດ້ເປັນແນວທາງໃຫ້ກັບປະເທດສະມາຊິກສາມາດກຳນົດການປົກປ້ອງສັງຄົມຂັ້ນພື້ນຖານໃນປະເທດຂອງຕົນ ແລະ ຢໍ້າໃຫ້ເຫັນວ່າປະເທດໃດກໍ່ສາມາດສະໜອງການປົກປ້ອງສັງຄົມຂັ້ນພື້ນຖານໄດ້ ໂດຍສາມາດນຳສະເໜີ, ພັດທະນາ ແລະ ສືບຕໍ່ດຳເນີນການປົກປ້ອງສັງຄົມຂັ້ນພື້ນຖານໃນປະເທດຕົນ ໂດຍອີງຕາມຄວາມສາມາດ ແລະ ສະພາບຂອງແຕ່ລະປະເທດ.

**ເປົ້າໝາຍການພັດທະນາແບບຍືນຍົງ ຫຼື SDGs** ມີຈຸດປະສົງເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ເພື່ອຄວາມຍືນຍົງຂອງການພັດທະນາ ແລະ ຮັກສາສິ່ງແວດລ້ອມໃນສັງຄົມ ທີ່ມີຄວາມກົມກຽວກັນ, ເຊື່ອມໂຍງໂດຍກົງກັບການປົກປ້ອງສັງຄົມໃນຫຼາຍເປົ້າໝາຍ ແລະ ຫຼາຍຄາດໝາຍ. ເປົ້າໝາຍການພັດທະນາແບບຍືນຍົງ ໄດ້ຮັບການຈັດຕັ້ງຜັນຂະຫຍາຍເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ຊຶ່ງມີຫຼາຍຄາດໝາຍເປັນບູລິມະສິດທີ່ລັດຖະບານຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດໃຫ້ບັນລຸ ຮອດປີ 2030 ແລະ ຍຸດທະສາດວຽກປົກປ້ອງສັງຄົມແຫ່ງຊາດສະບັບນີ້ ກໍສະທ້ອນໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງລັດຖະບານໃນການບັນລຸເປົ້າໝາຍດັ່ງກ່າວນີ້.
ເປົ້າໝາຍການພັດທະນາແບບຍືນຍົງ ແລະ ຄາດໝາຍສະເພາະທີ່ຕິດພັນກັບຍຸດທະສາດແຫ່ງຊາດສະບັບນີ້ ປະກອບມີຄື: ເປົ້າໝາຍທີ 1 ການລຶບລ້າງຄວາມທຸກຍາກໃນທຸກຮູບແບບ, ຄາດໝາຍ 1.3 ຈັດຕັ້ງປະຕິບັດລະບົບ ແລະ ມາດຕະການກ່ຽວກັບການປົກປ້ອງສັງຄົມສຳລັບໝົດທຸກຄົນ ຕາມຄວາມເໝາະສົມຂອງປະເທດ ລວມທັງການບໍລິການສັງຄົມຂັ້ນພື້ນຖານ ແລະ ພາຍໃນປີ 2030 ສາມາດບັນລຸການປົກປ້ອງສັງຄົມ ທີ່ກວມເອົາຄົນທຸກຍາກ ແລະ ມີຄວາມສ່ຽງຈຳນວນຫຼາຍ; ເປົ້າໝາຍທີ 8 ສົ່ງເສີມການຂະຫຍາຍຕົວດ້ານເສດຖະກິດໃຫ້ມີຄວາມຍືນຍົງ, ມີສ່ວນຮ່ວມ, ມີຄວາມໝັ້ນຄົງ, ມີການຈ້າງງານທີ່ມີຄຸນນະພາບ, ມີຜະລິດຕະພາບ, ເປັນວຽກທີ່ມີຄຸນຄ່າ ແລະ ເປັນທຳສຳລັບທຸກຄົນ;

ຄາດໝາຍທີ 8.5 ຮອດປີ 2030 ບັນລຸການມີວຽກເຮັດງານທຳທີ່ມີປະສິດທິພາບ ຢ່າງເຕັມສ່ວນ, ມີອາຊີບທີ່ເປັນທຳ ແລະ ໄດ້ຮັບຄ່າແຮງງານ ທີ່ເທົ່າທຽມກັນໃນການເຮັດວຽກທີ່ສ້າງມູນຄ່າເທົ່າກັນ ສຳລັບທຸກຄົນທັງຍິງ-ຊາຍ ລວມທັງໄວໜຸ່ມ ແລະ ຜູ້ພິການ; ຄາດໝາຍ 8.6 ຮອດປີ 2020 ຫຼຸດຜ່ອນອັດຕາສ່ວນຂອງໄວໜຸ່ມທີ່ບໍ່ມີວຽກເຮັດງານທຳ, ບໍ່ໄດ້ເຂົ້າສຶກສາຮ່ຳຮຽນ ຫຼື ຮັບການຝຶກອົບຮົມ ໃຫ້ໜ້ອຍລົງ ຢ່າງຫຼວງຫຼາຍ; ຄາດໝາຍທີ 10.4 ຮັບຮອງນະໂຍບາຍ ໂດຍສະເພາະດ້ານງົບປະມານລັດ, ຄ່າແຮງງານ ແລະ ການປົກປ້ອງສັງຄົມ ແລະ ບັນລຸຄວາມສະເໝີພາບໃຫ້ຫຼາຍກ່ວາເກົ່າເປັນກ້າວໆ; ຄາດໝາຍທີ 18.3 ຮອດປີ 2030, ຮັບປະກັນໃຫ້ຜູ້ລອດຊີວິດທັງໝົດ ແລະ ຜູ້ເຄາະຮ້າຍຈາກອຸປະເທດລະເບີດບໍ່ທັນແຕກທີ່ຕົກຄ້າງ ໄດ້ຮັບການຊ່ວຍເຫຼືອຕາມຄວາມຈຳເປັນຂັ້ນພື້ນຖານໃນການປິ່ນປົວສຸຂະພາບ, ຊີວິດການເປັນຢູ່, ການມີວຽກເຮັດເພື່ອບໍ່ໃຫ້ຕົກຢູ່ໃນຄວາມທຸກຍາກ.

### 1.2. ລະບົບການປົກປ້ອງສັງຄົມ

ລະບົບ ແລະ ນະໂຍບາຍການປົກປ້ອງສັງຄົມໄດ້ຮັບການຈັດຕັ້ງປະຕິບັດຢູ່ຫຼາຍປະເທດໃນໂລກ ລວມທັງໃນບັນດາປະເທດທີ່ກຳລັງພັດທະນາ ເຖິງແມ່ນວ່າ ແຕ່ລະປະເທດຈະມີການຈັດຕັ້ງປະຕິບັດທີ່ແຕກຕ່າງກັນ, ແຕ່ກໍສາມາດຈັດເປັນຮູບແບບດັ່ງນີ້:

**ລະບົບປະກັນສັງຄົມແບບປະກອບເງິນສົມທົບ** ເປັນລະບົບທີ່ໄດ້ຮັບສິດອຸດໜູນ ຕາມເງື່ອນໄຂທີ່ຕ້ອງປະກອບທຶນສົມທົບ (ຈາກຜູ້ປະກັນຕົນ ແລະ ລັດຖະບານ ຫຼື ຜູ້ໃຊ້ແຮງງານ) ຊຶ່ງຄະນະສະພາບໍລິຫານກອງທຶນປະກັນສັງຄົມ ຫຼື ກອງທຶນປະກັນສຸຂະພາບ ເປັນຜູ້ບໍລິຫານ. ເງື່ອນໄຂໃນການເກີດສິດໄດ້ຮັບອຸດໜູນຈາກລະບົບປະກັນສັງຄົມ ແລະ ປະກັນສຸຂະພາບ ແມ່ນກຳນົດພາຍໃຕ້ກົດໝາຍວ່າດ້ວຍປະກັນສັງຄົມ ແລະ ກົດໝາຍວ່າດ້ວຍການປະກັນສຸຂະພາບ. ການປະກອບທຶນສົມທົບ ແລະ ການອຸດໜູນສ່ວນໃຫຍ່ ແມ່ນອີງຕາມລາຍຮັບທີ່ສາມາດປະກັນຕົນໄດ້ຂອງຜູ້ອອກແຮງງານ ຊຶ່ງການອຸດໜູນແມ່ນການປົກປ້ອງແຮງງານຈາກຄວາມສ່ຽງໃນຕະຫຼອດໄລຍະດຳລົງຊີວິດ ເຊັ່ນ: ການອຸດໜູນປິ່ນປົວສຸຂະພາບ, ອຸດໜູນເກີດລູກ, ບຳນານ, ເສຍອົງຄະ, ເສຍຊີວິດ, ວ່າງງານ ແລະ ອື່ນໆ. ໃນຫຼາຍປະເທດ ສ່ວນຫຼາຍແມ່ນອີງໃສ່ທຶນສົມທົບຈາກຜູ້ປະກັນຕົນ, ແຕ່ກໍ່ປະກອບດ້ວຍແຫຼ່ງທຶນຈາກງົບປະມານຂອງລັດ.

**ລະບົບສະຫວັດດີການແບບບໍ່ປະກອບເງິນສົມທົບ** ເປັນລະບົບທີ່ບໍ່ໄດ້ປະກອບທຶນສົມທົບໂດຍກົງຈາກຜູ້ໄດ້ຮັບການອຸດໜູນ ຫຼື ຜູ້ອອກແຮງງານ ເພື່ອການຮັບການອຸດໜູນ, ແຕ່ອີງໃສ່ບັນທັດຖານດ້ານປະຊາກອນ ເຊັ່ນ: ທີ່ຢູ່ອາໃສ, ກຸ່ມອາຍຸໃດໜຶ່ງ (ກຸ່ມເດັກ, ຜູ້ພິການ ແລະ ຜູ້ອາຍຸສູງ), ຄວາມທຸກຍາກ ຫຼື ຄວາມດ້ອຍໂອກາດ ຊຶ່ງລະບົບແບບບໍ່ປະກອບທຶນສົມທົບນີ້ ຖືເປັນພາກສ່ວນໜຶ່ງຂອງການປົກປ້ອງສັງຄົມທີ່ປະກອບສ່ວນອັນສຳຄັນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ. ລະບົບແບບບໍ່ປະກອບທຶນສົມທົບ ຍັງປະກອບດ້ວຍການອຸດໜູນຜູ້ອາຍຸສູງ, ອຸດໜູນເດັກ, ອຸດໜູນຜູ້ພິການ, ອຸດໜູນວຽກສາທາລະນະ ຫຼືອຸດໜູນວ່າງງານ ລວມທັງການໃຫ້ບໍລິການປິ່ນປົວສຸຂະພາບ. ລະບົບແບບບໍ່ປະກອບທຶນສົມທົບ ແມ່ນນຳໃຊ້ແຫຼ່ງທຶນຈາກການເກັບພາສີຂອງລັດ ແລະ ອາດສາມາດນຳໃຊ້ທຶນຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ ຫຼື ທຶນກູ້ຢືມຈາກອົງການຈັດຕັ້ງສາກົນ.

## 2. ສະພາບການປົກປ້ອງສັງຄົມໃນພາກພື້ນ

ໃນເດືອນຕຸລາປີ 2013, ບັນດາປະເທດສະມາຊິກອາຊຽນໄດ້ຮັບຮອງຖະແຫຼງການວ່າດ້ວຍການສ້າງຄວາມເຂັ້ມແຂງວຽກປົກປ້ອງສັງຄົມ ຊຶ່ງໄດ້ຖືເອົາກົດບັດອາຊຽນເປັນບ່ອນອີງໃນການສ້າງຖະແຫຼງການສະບັບດັ່ງກ່າວ ໂດຍສະເພາະແມ່ນການກຳນົດເປົ້າໝາຍ ເພື່ອໃຫ້ປະຊາຊົນທຸກຄົນເຂົ້າເຖິງໂອກາດໃນການພັດທະນາຊັບພະຍາກອນມະນຸດ, ສະຫວັດ ດີການສັງຄົມ ແລະ ຄວາມຍຸຕິທຳ ໂດຍໄດ້ຮຽກຮ້ອງໃຫ້ບັນດາປະເທດສະມາຊິກອາຊຽນ ເພີ່ມທະວີການຂະຫຍາຍ, ປັບປຸງດ້ານປະລິມານ ແລະຄຸນນະພາບຂອງລະບົບປົກປ້ອງສັງຄົມຢູ່ພາຍໃນປະເທດຂອງຕົນ ຊຶ່ງເນື້ອໃນຖະແຫຼງການ ຍັງໄດ້ຮັບຮູ້ວ່າທຸກຄົນມີສິດສະເໝີພາບໃນການເຂົ້າເຖິງການປົກປ້ອງສັງຄົມ ໂດຍສະເພາະແມ່ນຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດ ເປັນຕົ້ນ ເດັກນ້ອຍ, ຜູ້ພິການ, ຜູ້ອາຍຸສູງ ແລະ ກຸ່ມຄົນທີ່ມີຄວາມສ່ຽງ ຊຶ່ງເປັນສິດທິມະນຸດ

ຂັ້ນພື້ນຖານ ທີ່ທຸກຄົນຄວນໄດ້ຮັບ ໂດຍຕ້ອງສົ່ງເສີມການພັດທະນາແບບມີສ່ວນຮ່ວມ, ການຫຼຸດຜ່ອນຄວາມທຸກຍາກ, ການພັດທະນາຊັບພະຍາກອນມະນຸດ ແລະ ການພັດທະນາເສດຖະກິດ-ສັງຄົມໃຫ້ມີປະສິດທິຜົນ.

ນອກຈາກນັ້ນ, ຍັງມີຖະແຫຼງການອື່ນທີ່ຕິດພັນກັບວຽກງານປົກປ້ອງສັງຄົມ ເປັນຕົ້ນ ຖະແຫຼງການຮ່າໂນຍວ່າດ້ວຍການສົ່ງເສີມສະຫວັດດີການ ແລະ ການພັດທະນາແມ່ຍິງ ແລະ ເດັກໃນອາຊຽນ ປີ2010, ຖະແຫຼງການບຣູໄນດາຣູຊາຮາມວ່າດ້ວຍການສົ່ງເສີມສະຖາບັນຄອບຄົວ: ການດູແລຜູ້ອາຍຸສູງ ປີ 2010, ຖະແຫຼງການບາຫຼີວ່າດ້ວຍການສົ່ງເສີມບົດບາດ ແລະ ການມີສ່ວນຮ່ວມຂອງຄົນພິການໃນປະຊາຄົມອາຊຽນ ປີ 2011 ແລະ ຖະແຫຼງການອາຊຽນວ່າດ້ວຍສິດທິມະນຸດ ປີ 2012.

**ບາງບົດຮຽນໃນການອຸດໜູນລະບົບປົກປ້ອງສັງຄົມທີ່ບໍ່ໄດ້ປະກອບເງິນສົມທົບ ຂອງ ສສ ຫວຽດນາມ**

ສສ ຫວຽດນາມ ໄດ້ຮັບຮູ້ເຖິງຄວາມຈຳເປັນຕ້ອງປ່ຽນແປງວິທີການອຸດໜູນປະກັນສັງຄົມ ທີ່ບໍ່ລວມສູນຈາກທີ່ເລັງໃສ່ສະພາບຄວາມຕ້ອງການສະເພາະຂອງບຸກຄົນສູ່ລະບົບການປົກປ້ອງຕະຫຼອດໄລຍະການດຳລົງຊີວິດ ທີ່ຮັບຮູ້ເຖິງຄວາມສ່ຽງ ແລະ ຄວາມບອບບາງ ທີ່ກະທົບຕໍ່ກັບກຸ່ມອາຍຸສະເພາະໃດໜຶ່ງ. ສສ ຫວຽດນາມ ຍັງໄດ້ຫັນປ່ຽນຄວາມເຂົ້າໃຈກ່ຽວກັບລະບົບການປົກປ້ອງສັງຄົມຈາກການສະໜອງການອຸດໜູນໄປສູ່ການເປັນແຫຼ່ງສະໜັບສະໜູນ.

ອີງໃສ່ເງື່ອນໄຂດັ່ງກ່າວ, ໃນບໍ່ດົນຜ່ານມານີ້ ສສ ຫວຽດນາມ ໄດ້ພັດທະນາແຜນແມ່ບົດກ່ຽວກັບການປັບປຸງວຽກປະກັນສັງຄົມດ້ານລະບົບການປະກອບທຶນສົມທົບ ແລະ ແຜນແມ່ບົດກ່ຽວກັບການປັບປຸງ ແລະ ການພັດທະນາການຊ່ວຍເຫຼືອສັງຄົມ ດ້ານລະບົບແບບບໍ່ປະກອບທຶນສົມທົບ.

ແຜນແມ່ບົດກ່ຽວກັບການປັບປຸງວຽກປະກັນສັງຄົມດ້ານລະບົບການປະກອບທຶນສົມທົບ ມີຈຸດປະສົງເພື່ອຂະຫຍາຍການປະກັນສັງຄົມໃຫ້ກ້າວສູ່ການປົກຄຸມປະຊາກອນທຸກຄົນ. ອີງໃສ່ເປົ້າໝາຍດັ່ງກ່າວນີ້, ສສ ຫວຽດນາມ ໄດ້ຕັ້ງໜ້າຂະຫຍາຍການປົກຄຸມລະບົບປະກັນສັງຄົມໃຫ້ກວມເອົາແຮງງານໃນລະບົບໃຫ້ກ້ວາງຂວາງທີ່ສຸດ ໂດຍມີການປະກອບທຶນສົມທົບ ແລະແຮງງານນອກລະບົບແບບສະໝັກໃຈ. ພ້ອມກັນນັ້ນ, ແຜນດັ່ງກ່າວຍັງມີເປົ້າໝາຍຂະຫຍາຍການອຸດໜູນປະກັນວ່າງງານ ແລະ ການອຸດໜູນບຳນານ ເພື່ອໃຫ້ກວມເອົາຈຳນວນຜູ້ອອກແຮງງານໃຫ້ກ້ວາງຂວາງກ່ວາເກົ່າ ແລະມີເປົ້າໝາຍເພື່ອເພີ່ມຄວາມເພິ່ງພໍໃຈໃຫ້ກັບຜູ້ເຂົ້າປະກັນສັງຄົມໂດຍອັດແທກຈາກ “ດັດສະນີຄວາມເພິ່ງພໍໃຈການປະກັນສັງຄົມ” ແລະ ຮັບປະກັນໃຫ້ມີຄວາມຍືນຍົງດ້ານກອງທຶນປະກັນສັງຄົມ.

ປະຈຸບັນ, ສສ ຫວຽດນາມ ໄດ້ມີລະບົບສະຫວັດດີການສັງຄົມ ໂດຍການໃຫ້ເງິນອຸດໜູນຜູ້ອາຍຸສູງທີ່ໂດດດ່ຽວ ແລະ ບໍ່ມີຍາດພີ່ນ້ອງດູແລ, ຜູ້ທີ່ຢູ່ໃນຄົວເຮືອນທຸກຍາກ ແລະ ຜູ້ມີອາຍຸລະຫວ່າງ 60 ຫາ 80 ປີ, ຜູ້ອາຍຸສູງທີ່ມີອາຍຸ 80 ປີຂຶ້ນໄປທີ່ບໍ່ມີບຳນານ ແລະ ບໍ່ມີປະກັນສັງຄົມ, ຜູ້ພິການ, ພໍ່ ຫຼື ແມ່ ແລະ ເດັກກຳພ້າທີ່ທຸກຍາກ. ນອກຈາກນີ້, ຍັງມີລະບົບສະຫວັດດີການອື່ນເຊັ່ນ: ອຸດໜູນຊາປະນະກິດສົບ, ການປິ່ນປົວສຸຂະພາບ, ນະໂຍບາຍສະໜັບສະໜູນດ້ານການສຶກສາ, ອຸດໜູນຄ່າໄຟຟ້າໃຫ້ກັບຄົວເຮືອນທຸກຍາກ ແລະ ການຊ່ວຍເຫຼືອສຸກເສີນ.

ສ່ວນການປັບປຸງ ແລະ ພັດທະນາລະບົບສະຫວັດດີການສັງຄົມນັ້ນ, ສສ ຫວຽດນາມ ມີເປົ້າໝາຍຂະຫຍາຍການໃຫ້ເງິນອຸດໜູນໃຫ້ກັບຜູ້ອາຍຸສູງທຸກຄົນທີ່ບໍ່ມີບຳນານ ຫຼື ຜູ້ທີ່ບໍ່ໄດ້ຮັບເບ້ຍລ້ຽງໃດຈາກລັດຖະບານ ແລະ ເດັກນ້ອຍທຸກຄົນທີ່ມີອາຍຸຕໍ່າກ່ວາ 36 ເດືອນ. ພ້ອມກັນນີ້, ລັດຖະບານ ກໍ່ມີແຜນຈະເຊື່ອມສານລະບົບສະຫວັດດີການສັງຄົມທັງໝົດໃຫ້ເປັນລະບົບດຽວໃຫ້ສຳເລັດພາຍໃນປີ 2030.

## 3. ສະພາບການປົກປ້ອງສັງຄົມໃນ ສປປ ລາວ

### 3.1. ການສະເໜີ

ໃນໄລຍະ 25 ປີຜ່ານມາ, ການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ ຫຼື GDP ຂອງ ສປປ ລາວ ໄດ້ເຕີບໂຕຢູ່ໃນລະດັບ 4 ສ່ວນຮ້ອຍ ຫາ 8 ສ່ວນຮ້ອຍ ນັບແຕ່ສົກປີ 1992-1993 ເປັນຕົ້ນມາ ຊຶ່ງເປັນໄລຍະທຳອິດທີ່ມີການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ ຂອງ ສປປ ລາວ, ອັດຕາຄວາມທຸກຍາກຂອງປະຊາກອນຫຼຸດລົງຈາກ 46% ຫາ 23%, ໃນຂະນະດຽວກັນອັດຕາການພັດທະນາມະນຸດເພີ່ມຂຶ້ນຈາກ 0.340 ໃນປີ 1980 ຫາ 0.575 ໃນປີ

2014, ການຈັດຕັ້ງປະຕິບັດເປົ້າໝາຍສະຫະສະວັດເພື່ອການພັດທະນາມີຄວາມຄືບໜ້າ ແລະ ມາຮອດປະຈຸບັນ ແມ່ນກຳລັງຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ.

ເຖິງວ່າເສດຖະກິດມີການຂະຫຍາຍຕົວ, ແຕ່ກໍບໍ່ໄດ້ໝາຍຄວາມວ່າທຸກຄົນໄດ້ຮັບໝາກຜົນຈາກການເຕີບໂຕດ້ານເສດຖະກິດຂອງປະເທດແບບເທົ່າທຽມກັນ, ປະຊາຊົນຈຳນວນໜຶ່ງຍັງມີຄວາມທຸກຍາກ, ການບໍລິການຂັ້ນພື້ນຖານຍັງບໍ່ທັນທົ່ວເຖິງໃນທຸກເມືອງ ແລະ ຄວາມບໍ່ເທົ່າທຽມກັນຍັງເພີ່ມຂຶ້ນພາຍໃນຕົວເມືອງ, ລະຫວ່າງຕົວເມືອງ ແລະ ຊົນນະບົດ, ລະຫວ່າງແຂວງຕໍ່ແຂວງ. ປັດໃຈເຫຼົ່ານີ້ ໄດ້ສືບຕໍ່ເປັນອຸປະສັກທີ່ສຳຄັນສຳລັບການພັດທະນາເສດຖະກິດ-ສັງຄົມຂອງປະເທດ ແລະ ການນຳພາປະເທດໃຫ້ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ.

ອັດຕາການຂະຫຍາຍຕົວດ້ານເສດຖະກິດສູງ, ແຕ່ການປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນ ຍັງບໍ່ທັນໄດ້ຢູ່ໃນລະດັບສູງ. ໃນແຕ່ລະ 1% ຂອງການເພີ່ມຂຶ້ນຂອງລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ, ຄວາມ ທຸກຍາກຫຼຸດລົງພຽງແຕ່ 0.47% ເທົ່ານັ້ນ, ຖ້າສົມທຽບກັບປະເທດເພື່ອນບ້ານຄື: ປະເທດກຳປູເຈຍ ແລະ ຫວຽດນາມ ເຫັນໄດ້ວ່າ ສປປ ລາວ ຍັງບໍ່ທັນສາມາດນຳໝາກຜົນຈາກການເຕີບໂຕຂອງເສດຖະກິດມາປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກໃຫ້ໄດ້ດີເທົ່າທີ່ຄວນ.

ອັດຕາຄວາມທຸກຍາກຂອງປະຊາຊົນຍັງມີສູງ ໂດຍສະເພາະອັດຕາຄວາມທຸກຍາກໃນເຂດຊົນນະບົດ 29% ທຽບກັບຄວາມທຸກຍາກຂອງປະຊາຊົນໃນຕົວເມືອງ 10%, ຄວາມແຕກໂຕນນີ້ ຍັງສືບຕໍ່ສູງຂຶ້ນ ຍ້ອນລະດັບການຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນຍັງມີຄວາມແຕກຕ່າງກັນ ໂດຍສະເພາະໃນບັນດາຊົນເຜົ່າ ແລະ ໃນບັນດາຄົວເຮືອນທີ່ການສຶກສາຂອງຫົວໜ້າຄອບຄົວຍັງບໍ່ທັນສູງ ຊຶ່ງຄົວເຮືອນທີ່ມີການສຶກສາໃນລະດັບຕໍ່າຫຼາຍ ແມ່ນໃນກຸ່ມຊົນເຜົ່າ ຫຼື ໃນຄົວເຮືອນທີ່ອາໃສກະສິກຳພໍກຸ້ມຕົນເອງ ຫຼື ຜູ້ທີ່ໄດ້ຮັບຜົນກະທົບຈາກການວ່າງງານ.

ຜູ້ທຸກຍາກທີ່ດຳລົງຊີວິດໃນເຂດຊົນນະບົດຍັງບໍ່ທັນໄດ້ຮັບໝາກຜົນຈາກການຂະຫຍາຍຕົວດ້ານເສດຖະກິດ ແລະ ການຂະຫຍາຍຕົວຂອງເສດຖະກິດກໍຍັງບໍ່ທັນປະກອບສ່ວນເຂົ້າໃນການເພີ່ມຂຶ້ນຂອງການຊົມໃຊ້ ຊຶ່ງເປັນສັນຍານຊີ້ໃຫ້ເຫັນວ່າການຂະຫຍາຍຕົວດ້ານເສດຖະກິດຈະມີຄວາມຊັກຊ້າໃນອະນາຄົດ. ຮູບແບບການຊົມໃຊ້ຍັງບໍ່ທັນກະຈາຍຢ່າງກ້ວາງຂວາງ ແລະ ບໍ່ມີຄວາມເທົ່າທຽມກັນ, ມີພຽງແຕ່ຜູ້ຮັ່ງມີເທົ່ານັ້ນທີ່ມີກຳລັງການໃຊ້ຈ່າຍເພີ່ມຂຶ້ນໃນແຕ່ລະປີແບບຕໍ່ເນື່ອງສ່ວນຜູ້ທຸກຍາກ ແລະ ປະຊາຊົນທີ່ດຳລົງຊີວິດໃນຊົນນະບົດຍັງບໍ່ທັນໄດ້ຮັບໝາກຜົນຈາກການຂະຫຍາຍຕົວຂອງເສດຖະກິດເທົ່າທີ່ຄວນ, ລະດັບການຊົມໃຊ້ຍັງຢູ່ໃນລະດັບຕໍ່າ ແລະ ຍັງບໍ່ທັນສາມາດຂັບເຄື່ອນການພັດທະນາເສດຖະກິດໄດ້. ຖ້າຫາກສາມາດກະຈາຍໝາກຜົນຈາກລວມຍອດຜະລິດຕະພັນພາຍໃນໃຫ້ທົ່ວເຖິງ ຈະເຮັດໃຫ້ອັດຕາການຊົມໃຊ້ຂອງປະຊາຊົນສູງຂຶ້ນ ລວມທັງການຊົມໃຊ້ຂອງຜູ້ທຸກຍາກກໍເປັນການປະກອບສ່ວນເຮັດໃຫ້ລວມຍອດຜະລິດຕະພັນພາຍໃນມີການຂະຫຍາຍຕົວເພີ່ມຂຶ້ນ ແລະ ຄວາມທຸກຍາກຫຼຸດລົງ ຊຶ່ງເປັນວົງຈອນການສ້າງຜົນດີໃຫ້ກັບການພັດທະນາປະເທດ.

ໃນຂະນະດຽວກັນ, ເຖິງແມ່ນອັດຕາສຸດທິການເຂົ້າໂຮງຮຽນເພີ່ມຂຶ້ນໃນຊຸມປີທີ່ຜ່ານມາ, ແຕ່ອັດຕາສຸດທິຜູ້ທຸກຍາກເຂົ້າໂຮງຮຽນຍັງຢູ່ໃນລະດັບຕໍ່າຫຼາຍ ໂດຍສະເພາະການສຶກສາຂັ້ນເໜືອຂັ້ນປະຖົມ. ອັດຕາການເຂົ້າຮຽນຂອງປະຊາກອນທີ່ສາມາດເຂົ້າເຖິງການສຶກສາສ່ວນຫຼາຍຍັງເປັນສິ່ງທ້າທາຍຫຼາຍເຮັດໃຫ້ເປັນອຸປະສັກສຳຄັນໃນການບັນລຸການພັດທະນາທ່າແຮງຂອງທຶນປະຊາກອນ ແລະ ກຳລັງແຮງງານຂອງປະເທດ ຈຶ່ງເຮັດໃຫ້ ສປປ ລາວ ເປັນປະເທດທີ່ມີປະຊາກອນຮູ້ ໜັງສື ແລະ ການຄິດໄລ່ຄະນິດສາດໜ້ອຍທີ່ສຸດໃນອາຊີຕາເວັນອອກສ່ຽງໃຕ້.

ໃນຊຸມປີຜ່ານມາ, ຜົນການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ໄດ້ສະແດງໃຫ້ເຫັນຊິ່ງເຂດ ແລະ ຄົວເຮືອນຈຳນວນໜຶ່ງທີ່ມີສະພາບຄວາມເປັນຢູ່ດີຂຶ້ນ, ແຕ່ກໍຕ້ອງຕົກໄປຢູ່ໃນສະພາບທີ່ທຸກຍາກຄືນອີກ ຍ້ອນໄດ້ຮັບຜົນກະທົບຈາກບັນຫາເສດຖະກິດແບບກະທັນຫັນ ແລະ ບໍ່ມີລະບົບການປົກປ້ອງພຽງພໍ ເພື່ອປົກປ້ອງເຂົາເຈົ້າຈາກການຕົກສູ່ຄວາມທຸກຍາກຄືນອີກ. ຖ້າຫາກມີມາດຕະການຈັດຕັ້ງປະຕິບັດຕໍ່ໄປໃນອະນາຄົດໃນການກະຈາຍໝາກຜົນຈາກການຂະຫຍາຍຕົວເສດຖະກິດໃຫ້ມີຄວາມເທົ່າທຽມກັນ ແລະ ມີການປົກປ້ອງປະຊາຊົນໃນລະດັບທີ່ດີ ເພື່ອຮັບມືກັບຜົນ

ກະທົບແບບກະທັນຫັນຈາກເສດຖະກິດ-ສັງຄົມ ກໍຈະມີຄວາມອາດສາມາດພຽງພໍໃນການຫຼຸດພົ້ນອອກຈາກບັນຫາສິ່ງທ້າທາຍທີ່ມີໃນປະຈຸບັນ ແລະ ສາມາດສ້າງອະນາຄົດທີ່ດີໃຫ້ກັບປະຊາຊົນໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນ.

ສປປ ລາວ ສາມາດນຳໃຊ້ຊັບພະຍາກອນທີ່ອຸດົມສົມບູນຂອງຕົນຈາກຜົນຂອງການພັດທະນາເສດຖະກິດ-ສັງຄົມເຂົ້າໃນການປັບປຸງການເຂົ້າເຖິງການບໍລິການຂອງລັດແບບທີ່ມີຄຸນນະພາບ, ສ້າງໂອກາດໃຫ້ກັບປະຊາຊົນໄດ້ເຂົ້າຮ່ວມໃນຂະ ບວນການພັດທະນາໃຫ້ຂະຫຍາຍຕົວ, ການລົງທຶນເຂົ້າໃນລະບົບປົກປ້ອງສັງຄົມສຳລັບທຸກຄົນ ແລະ ໃຫ້ການຊ່ວຍເຫຼືອໃນເວລາທີ່ມີຄວາມຈຳເປັນໃນເຫດການສຸກເສີນ ໂດຍນຳໃຊ້ຜົນໄດ້ຮັບຈາກການພັດທະນາປະເທດ.

## 3.2. ກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ

ລັດຖະທຳມະນູນ ແຫ່ງ ສປປ ລາວ ຮັບຮູ້ເຖິງຄວາມເອົາໃຈໃສ່ຂອງລັດໃນການຕັ້ງໜ້າພັດທະນາການສຶກສາແຫ່ງຊາດໃຫ້ມີຄຸນນະພາບ, ສ້າງໂອກາດ ແລະ ເງື່ອນໄຂໃຫ້ປະຊາຊົນໄດ້ຮັບການສຶກສາ ຢ່າງທົ່ວເຖິງ ໂດຍສະເພາະປະຊາຊົນທີ່ຢູ່ເຂດຫ່າງໄກສອກຫຼີກ, ຊົນເຜົ່າ, ແມ່ຍິງ, ເດັກນ້ອຍ, ຜູ້ດ້ອຍໂອກາດ ແລະ ຜູ້ພິການຕາມມາດຕາ 22; ການພັດທະນາຊັບພະຍາກອນມະນຸດ, ລັດເອົາໃຈໃສ່ພັດທະນາສີມືແຮງງານ, ຍົກສູງວິໄນແຮງງານ, ສົ່ງເສີມວິຊາຊີບ ແລະ ວຽກເຮັດງານທຳຂອງປະຊາຊົນພ້ອມທັງປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານ ຕາມມາດຕາ 27; ລັດເອົາໃຈໃສ່ປະຕິບັດນະໂຍບາຍປະກັນສັງຄົມຕາມມາດຕາ 28 ແລະ ກຳນົດໃຫ້ເຫັນເຖິງການສະໜັບສະໜູນສິດທິການປົກປ້ອງສັງຄົມຫຼາຍຮູບແບບ ເປັນຕົ້ນ ມາດຕາ 25 ໄດ້ລະບຸລັດເອົາໃຈໃສ່ປັບປຸງ ແລະ ຂະຫຍາຍວຽກງານສາທາລະນະສຸກ ເພື່ອຮັກສາ ແລະ ສົ່ງເສີມສຸຂະພາບຂອງປະຊາຊົນ, ຕັ້ງໜ້າກໍ່ສ້າງ, ປັບປຸງລະບົບການກັນພະຍາດ, ປິ່ນປົວຄົນເຈັບຢ່າງທົ່ວເຖິງ ແລະ ມີຄຸນນະພາບ, ສ້າງເງື່ອນໄຂໃຫ້ປະຊາຊົນທຸກຄົນໄດ້ຮັບການເບິ່ງແຍງດ້ານສຸຂະພາບ ໂດຍສະເພາະແມ່ ແລະ ເດັກນ້ອຍ, ປະຊາຊົນຜູ້ທຸກຍາກ ແລະ ຜູ້ຢູ່ເຂດຫ່າງໄກສອກຫຼີກ ເພື່ອໃຫ້ທຸກຄົນມີສຸຂະພາບດີ, ມາດຕາ 38 ໄດ້ກຳນົດໄວ້ວ່າ “ພົນລະເມືອງລາວມີສິດໃນການໄດ້ຮັບການສຶກສາ” ແລະ ”ເຮັດວຽກ ແລະ ປະກອບອາຊີບທີ່ບໍ່ຜິດຕໍ່ກົດ ໝາຍ”, ມາດຕາ 39 ໄດ້ລະບຸພົນລະເມືອງລາວມີສິດເຮັດວຽກ ແລະ ປະກອບອາຊີບທີ່ບໍ່ຂັດກັບກົດໝາຍ, ຜູ້ອອກແຮງງານມີສິດໄດ້ຮັບການພັກຜ່ອນ, ໄດ້ຮັບການປິ່ນປົວໃນເວລາເຈັບເປັນ, ໄດ້ຮັບການຊ່ວຍເຫຼືອໃນກໍລະນີໝົດຄວາມສາມາດອອກແຮງງານ, ເສຍອົງຄະ, ໃນເວລາເຖົ້າແກ່ ແລະ ໃນກໍລະນີອື່ນ.

ກົດໝາຍວ່າດ້ວຍສາທາລະນະສຸກ ແລະ ຍຸດທະສາດປະກັນສຸຂະພາບແຫ່ງຊາດໄລຍະແຕ່ 2017-2020 ໄດ້ກຳນົດປະຊາຊົນທຸກຄົນມີສິດສະເໝີພາບໃນການໄດ້ຮັບການປິ່ນປົວສຸຂະພາບ ໂດຍບໍ່ຈຳແນກເພດ, ອາຍຸ, ຊົນເຜົ່າ, ເຊື້ອຊາດ , ສາສະໜາ ຫຼື ສະຖານະພາບທາງສັງຄົມກ່ຽວກັບການພັດທະນາປະກັນສຸຂະພາບແຫ່ງຊາດ, ປັບປຸງສະຖານະພາບດ້ານນິຕິກຳ ແລະ ພັດທະນາກອງທຶນປະກັນສຸຂະພາບແຫ່ງຊາດ.

ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍອາຊີວະສຶກສາ ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາໄລຍະແຕ່ 2016-2020 ໄດ້ກຳນົດເປົ້າໝາຍໃນການບັນລຸການສຶກສາຂັ້ນປະຖົມແບບບັງຄັບ ແລະ ຂະຫຍາຍໄປສູ່ການສຶກສາແບບບັງຄັບໃນຂັ້ນມັດທະຍົມ, ຮອດປີ 2030 ປະຊາຊົນທຸກຄົນມີຄວາມສະເໝີພາບ ແລະ ຄວາມເທົ່າທຽມໃນການເຂົ້າເຖິງການສຶກສາທີ່ມີຄຸນນະພາບ, ດຳລັດວ່າດ້ວຍການສົ່ງເສີມອາຫານທ່ຽງໃນໂຮງຮຽນ ຊຶ່ງມີເປົ້າໝາຍເພື່ອຫຼຸດຜ່ອນບັນຫາການຂາດໂພຊະນາການ ແລະ ເພີ່ມການເຂົ້າໂຮງຮຽນ ແລະ ຍົກລະດັບອັດຕາການຮຽນຈົບ.

ກົດໝາຍວ່າດ້ວຍປະກັນສັງຄົມ ໄດ້ກຳນົດລະບົບປະກັນສັງຄົມແບບບັງຄັບພາຍໃຕ້ກອງທຶນປະກັນສັງຄົມແຫ່ງຊາດໂດຍການໂຮມຕົວຂອງລະບົບປະກັນສັງຄົມພາກລັດ ແລະ ພາກເອກກະຊົນເຂົ້າກັນ ແລະ ຂະຫຍາຍອັດຕາປົກຄຸມປະກັນສັງຄົມໄປສູ່ຜູ້ອອກແຮງງານນອກລະບົບ ໃຫ້ສາມາດເຂົ້າເປັນສະມາຊິກແບບສະໝັກໃຈໄດ້.

ກົດໝາຍວ່າດ້ວຍແຮງງານ ໄດ້ກຳນົດການອຸດໜູນແຮງງານໃນລະບົບ ໂດຍການສືບຕໍ່ໄດ້ຮັບຄ່າແຮງງານຊົ່ວຄາວໃນເວລາເຈັບປ່ວຍ, ເກີດລູກ, ອຸປະຕິເຫດແຮງງານ ແລະ ພະຍາດອາຊີບ, ການອຸດໜູນອື່ນໃນໄລຍະສັ້ນ ແລະ ໄລຍະຍາວລວມທັງການອຸດໜູນປິ່ນປົວສຸຂະພາບທີ່ເປັນລະບົບປະກັນສັງຄົມແບບປະກອບທຶນສົມທົບພາຍໃຕ້ກອງທຶນປະກັນສັງຄົມແຫ່ງຊາດ.

ກົດໝາຍວ່າດ້ວຍຄົນພິການ ໄດ້ກຳນົດການອຸດໜູນສຳລັບຜູ້ພິການທີ່ທຸກຍາກ ແລະ ກຳນົດໃຫ້ສ້າງກອງທຶນສະຫວັດດີການສຳລັບຜູ້ພິການ, ດຳລັດວ່າດ້ວຍສັງຄົມສົງເຄາະ ໄດ້ກຳນົດການຊ່ວຍເຫຼືອດ້ານວັດຖຸ ແລະ ຈິດໃຈໃຫ້ກຸ່ມຄົນທີ່ທຸກຍາກ, ດ້ອຍໂອກາດ ແລະ ມີຄວາມສ່ຽງ ເປັນຕົ້ນ ເດັກທີ່ຕ້ອງການປົກປ້ອງພິເສດ, ຜູ້ພິການ, ຜູ້ອາຍຸສູງ, ຜູ້ປະສົບເຄາະຮ້າຍຈາກການຄ້າມະນຸດ ແລະ ໄພພິບັດຕ່າງໆ.

ດຳລັດວ່າດ້ວຍກອງທຶນປະກັນສຸຂະພາບແຫ່ງຊາດ ໄດ້ກຳນົດການໂຮມບັນດາລະບົບປະກັນສຸຂະພາບເຂົ້າກັນ ເພື່ອສ້າງຄວາມເຂັ້ມແຂງໃນການບໍລິການສຸຂະພາບສຳລັບທຸກຄົນ; ດຳລັດວ່າດ້ວຍນະໂຍບາຍແຫ່ງຊາດເພື່ອການປິ່ນປົວແມ່ ແລະ ເດັກລຸ່ມອາຍຸ 5 ປີ ແບບບໍ່ເສຍຄ່າ.

ດຳລັດວ່າດ້ວຍການສົ່ງເສີມອາຫານໃນໂຮງຮຽນມີເປົ້າໝາຍເພື່ອຫຼຸດຜ່ອນການຂາດສານອາຫານ, ເພີ່ມການເຂົ້າໂຮງຮຽນ ແລະ ປັບປຸງອັດຕາການເຂົ້າໂຮງຮຽນຈົນຈົບ.

ດຳລັດວ່າດ້ວຍນະໂຍບາຍປະຊາກອນແຫ່ງຊາດ ແລະ ການພັດທະນາໄດ້ກຳນົດບຸລິມະສິດໃນການຂະຫຍາຍການບໍລິການສຸຂະພາບໄວຈະເລີນພັນສຳລັບເດັກ.

ດຳລັດວ່າກອງທຶນຫຼຸດຜ່ອນຄວາທຸກຍາກ ສະໜັບສະໜູນ ແລະ ພັດທະນາຄວາມອາດສາມາດຍືນຍົງ, ຂັ້ນຕອນ ແລະ ລະບົບທີ່ສອດຄ່ອງກັບນະໂຍບາຍຂອງການພັດທະນາການປົກຄອງທ້ອງຖິ່ນ ແລະ ເປົ້າໝາຍການຫຼຸດຄວາມທຸກຍາກ.

ລັດຖະບານ ແຫ່ງ ສປປ ລາວ ມີຄວາມພະຍາຍາມໃນການຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຂອງສົນທິສັນຍາ ແລະ ຂໍ້ແນະນຳທີ່ກ່ຽວຂ້ອງຂອງພາກພື້ນ ແລະ ສາກົນ ເຂົ້າໃນນະໂຍບາຍຂອງພັກ ຊຶ່ງສະແດງອອກໃນມະຕິກອງປະຊຸມໃຫຍ່ຂອງພັກປະຊາຊົນປະຕິວັດລາວ ໄດ້ກຳນົດທິດນຳວ່າ, "ສ້າງຄວາມກົມກຽວລະຫວ່າງການພັດທະນາໃນຂົງເຂດເສດຖະກິດກັບການພັດທະນາໃນຂົງເຂດວັດທະນະທຳ-ສັງຄົມ ເພື່ອຮັບປະກັນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາ ເຜົ່າໃຫ້ດີຂຶ້ນຕາມລຳດັບ ແລະ ຮັບປະກັນການພັດທະນາໃຫ້ມີຄວາມຍືນຍົງ.

ຢ່າງໃດກໍຕາມ, ສປປລາວຍັງມີປະຊາກອນຈຳນວນຫຼາຍ ທີ່ຍັງບໍ່ໄດ້ຮັບການປົກປ້ອງ ຢ່າງພຽງພໍຈາກຄວາມສ່ຽງດ້ານຕ່າງໆເປັນຕົ້ນ ແມ່ນການວ່າງງານ, ຍັງບໍ່ມີອຸດໜູນເດັກດ້ອຍໂອກາດ, ຜູ້ພິການ ແລະ ຜູ້ອາຍຸສູງທີ່ປ່ຽວພອຍ ແລະ ອື່ນໆທີ່ເປັນສາເຫດທີ່ສາມາດນຳໄປສູ່ຄວາມທຸກຍາກ ແລະ ບັນຫາສັງຄົມ.

ເພື່ອພັດທະນາລະບົບປົກປ້ອງສັງຄົມໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ສາມາດກວມເອົາກຸ່ມເປົ້າໝາຍຕ່າງໆໃນສັງຄົມ, ຈຶ່ງມີຄວາມຈຳເປັນໃນການສ້າງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ເພື່ອກຳນົດເປົ້າໝາຍໃນການສືບຕໍ່ຈັດຕັ້ງປະຕິບັດວຽກປະກັນສຸຂະພາບ, ວຽກປະກັນສັງຄົມ ແລະ ວຽກສະຫວັດດີການສັງຄົມໃຫ້ເປັນລະບົບ ແລະ ມີປະສິດທິພາບດີຂຶ້ນກ່ວາເກົ່າ.

### 3.3 ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ໄດ້ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ເພື່ອເຮັດໃຫ້ການພັດທະນາປະເທດສາມາດບັນລຸຕາມຈຸດປະສົງທີ່ກຳນົດໄວ້ໃນຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຮອດປີ 2025 ແລະ ວິໄສທັດ 2030.

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ໄດ້ຕັ້ງເປົ້າໝາຍນຳພາປະເທດໃຫ້ກາຍເປັນປະເທດທີ່ມີລາຍຮັບປານກາງ ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ສ້າງສັງຄົມໃຫ້ມີຄວາມຍຸຕິທຳ, ຄວາມສາມັກຄີ ແລະ ທຸກຄົນເຂົ້າເຖິງການບໍລິການສັງຄົມທີ່ມີຄຸນນະພາບ.

ເພື່ອບັນລຸເປົ້າໝາຍນີ້, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄດ້ກຳນົດທິດທາງໃນການພັດທະນາໃຫ້ມີຄວາມກົມກຽວກັນດ້ານການພັດທະນາເສດຖະກິດ, ສັງຄົມ ແລະ ວັດທະນາທຳ ຕິດພັນກັບການພັດທະນາຊົນນະບົດ ແລະ ການຫຼຸດຜ່ອນຄວາມທຸກຍາກ, ຍົກລະດັບຄວາມອາດສາມາດຂອງຊັບພະຍາກອນມະນຸດ ໂດຍການພັດທະນາສີມືແຮງງານ, ການສ້າງວຽກເຮັດງານທຳ ແລະສ້າງຄວາມສາມັກຄີໃນສັງຄົມ.

ຈຸດປະສົງລວມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄດ້ກຳນົດຄາດໝາຍ ເພື່ອຫຼຸດຜ່ອນຄວາທຸກຍາກ ແລະບັນລຸການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ຊຶ່ງມີ 2 ຈຸດສຸມດັ່ງນີ້:

**ຈຸດສຸມທີ 1**: ໃຫ້ຂະຫຍາຍການປົກປ້ອງສັງຄົມໃຫ້ປະຊາຊົນທຸກທົ່ວໜ້າ ໂດຍສະເພາະແມ່ນຜູ້ທຸກຍາກ ແລະ ຜູ້ເຮັດວຽກໃນຂະແໜງນອກລະບົບ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະກັນສັງຄົມ".

**ຈຸດສຸມທີ 2**: ສຸມໃສ່ການພັດທະນາຊັບພະຍາກອນມະນຸດ, ການຫຼຸດຜ່ອນຄວາມທຸກຍາກ ແລະ ການເຂົ້າເຖິງການສຶກສາທີ່ມີຄຸນນະພາບ ແລະ ການບໍລິການສຸຂະພາບ. ໝາກຜົນນີ້ ໄດ້ກຳນົດ 7 ໝາກຜົນ, ໃນນັ້ນ 5 ໝາກຜົນມີຄວາມສຳຄັນໃນການພັດທະນາວຽກປົກປ້ອງສັງຄົມ.

**ໝາກຜົນທີ 1**: ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງໜັກແໜ້ນ ແລະ ກວ້າງຂວາງຕາມທິດ 3 ສ້າງ ໂດຍສຸມໃສ່ແກ້ໄຂຄວາມດ້ອຍໂອກາດຂອງຄົວເຮືອນ ໂດຍການສ້າງຕາໜ່າງປົກປ້ອງສັງຄົມເພື່ອແກ້ໄຂຜົນປະທົບຕໍ່ເຫດສຸກເສີນ, ເພື່ອສົ່ງເສີມໃຫ້ທຸກຄົນໃນສັງຄົມປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ, ເພື່ອປັບປຸງນະໂຍບາຍໃນການສະໜອງການສຶກສາ ແລະ ສາທາລະນະສຸກໃນເຂດຊົນນະບົດ, ເພື່ອພັດທະນາການຝຶກອົບຮົມຍົກລະດັບສີມືແຮງງານໃນເຂດຊົນນະບົດ.

**ໝາກຜົນທີ 2**: ຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ໂດຍສຸມໃສ່ຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ການບໍລິໂພກທີ່ມີໂພຊະນາການຄົບຖ້ວນ ແລະ ປອດໄພຕໍ່ສຸຂະພາບ, ສະໜອງການຝຶກອົບຮົມຕົວຈິງໃຫ້ກັບຊາວກະສິກອນເປັນປະຈຳ.

**ໝາກຜົນທີ 3**: ທຸກຄົນເຂົ້າເຖິງການສຶກສາທີ່ມີຄຸນນະພາບ ໂດຍສຸມໃສ່ຂະຫຍາຍໂອກາດດ້ານການສຶກສາເລີ່ມແຕ່ລະດັບອະນຸບານຈົນເຖິງອະຊີວະສຶກສາ ແລະ ມະຫາວິທະຍາໄລ, ຮັບປະກັນໃຫ້ມີນະໂຍບາຍດຶງດູດໃຫ້ນັກຮຽນເຂົ້າຮຽນໃນສາຍອາຊີວະສຶກສາໃຫ້ຫຼາຍຂຶ້ນ ແລະ ນະໂຍບາຍສົ່ງເສີມອາຫານໃນໂຮງຮຽນ.

**ໝາກຜົນທີ 4**: ຮັບປະກັນການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບ ໂດຍຂະຫຍາຍ ແລະ ຍົກລະດັບຄຸນນະພາບຂອງການບໍລິການ ເພື່ອຮັບປະກັນໃຫ້ທຸກຄົນໄດ້ເຂົ້າເຖິງການບໍລິການຮັກສາສຸຂະພາບ ແລະ ໄດ້ຮັບການບໍລິການດ້ານການແພດທີ່ມີຄຸນນະພາບ, ຂະຫຍາຍການບໍລິການສາທາລະນະສຸກໃຫ້ໄປເຖິງຊົນນະບົດບ່ອນຫ່າງໄກສອກຫຼີກ, ຮັບປະ ກັນໃຫ້ເດັກໄດ້ຮັບໂພຊະນາການພຽງພໍ, ຈັດຕັ້ງປະຕິບັດນະໂຍບາຍປິ່ນປົວສຸຂະພາບບໍ່ເສຍຄ່າ, ພັດທະນານະໂຍບາຍຍົກລະດັບຄຸນນະພາບຂອງການບໍລິການສາທາລະນະສຸກ.

**ໝາກຜົນທີ 5**: ການບໍລິການດ້ານການປົກປ້ອງສັງຄົມໄດ້ຮັບການຍົກລະດັບ ແລະ ທຸກຄົນໄດ້ເຂົ້າເຖິງຢ່າງກ້ວາງຂວາງ, ພັດທະນາລະບົບປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບ ພ້ອມທັງຂະຫຍາຍອັດຕາປົກຄຸມຂອງລະບົບປະກັນສັງຄົມ ຢ່າງກ້ວາງຂວາງ ແລະ ໃຫ້ການບໍລິການທີ່ມີປະສິດທິພາບເພື່ອໃຫ້ຜູ້ອອກແຮງງານ ແລະ ຜູ້ປະກອບອາຊີບສ່ວນບຸກຄົນໄດ້ຮັບການປົກປ້ອງສິດຜົນປະໂຫຍດ ແລະ ຮັບປະກັນການພັດທະນາທີ່ສົມດູນ ແລະ ຍືນຍົງ ໂດຍຂະຫຍາຍຂອບເຂດປົກຄຸມປະກັນສັງຄົມ ແລະ ປະກັນສຸຂະພາບໃຫ້ກວມເອົາ 80 ສ່ວນຮ້ອຍໃນປີ 2020, ສ້າງຕັ້ງກອງທຶນສັງຄົມສົງເຄາະເພື່ອຊ່ວຍເຫຼືອ ແລະ ພັດທະນາຄຸນນະພາບຊີວິດຂອງຜູ້ດ້ອຍໂອກາດ, ຜູ້ປະສົບໄພພິບັດ ແລະ ຜູ້ຕົກເປັນເຫຍື່ອຂອງການຄ້າມະນຸດ, ດຳເນີນການສຳຫລວດສະຖິຕິຄົນພິການ ແລະ ຜູ້ອາຍຸສູງໃນຂອບເຂດທົ່ວປະເທດ, ດູແລສຸຂະພາບຂັ້ນພື້ນຖານໃຫ້ແກ່ຄົນພິການ ແລະ ຜູ້ອາຍຸສູງ, ປັບປຸງການບໍລິການໃຫ້ຄຳປຶກສາ, ການປົກປ້ອງເດັກ ແລະ ຄອບຄົວທີ່ມີຄວາມສ່ຽງ, ເສີມຂະຫຍາຍການຊ່ວຍເຫຼືອສຸກເສີນ ຢ່າງກ້ວາງຂວາງ ເພື່ອຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກໄພພິບັດ ໂດຍມີການສ່ວນຮ່ວມຈາກທຸກພາກສ່ວນໃນສັງຄົມ.

### 3.4 ບັນດາແຜນພັດທະນາຂອງຂະແໜງການທີ່ຕິດພັນກັບວຽກງານປົກປ້ອງສັງຄົມ

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໄດ້ຮັບການສ້າງຂຶ້ນໂດຍຕິດພັນກັບການຈັດຕັ້ງປະຕິບັດບັນດາຍຸດທະສາດຂອງຂະແໜງການທີ່ກ່ຽວຂ້ອງດັ່ງນີ້:

ນະໂຍບາຍການອຸດໜູນປິ່ນປົວສຸຂະພາບ ຊຶ່ງປະກອບດ້ວຍນະໂຍບາຍການອອກລູກໂດຍບໍ່ເສຍຄ່າ, ການປິ່ນປົວສຸຂະພາບແມ່ ແລະ ເດັກ ໂດຍບໍ່ເສຍຄ່າໃຊ້ຈ່າຍ, ນະໂຍບາຍກອງທຶນປິ່ນປົວສຸຂະພາບສຳລັບຜູ້ທຸກຍາກ ມີຈຸດປະສົງເພື່ອປິ່ນປົວສຸຂະພາບໃຫ້ຜູ້ທຸກຍາກ ໂດຍບໍ່ເສຍຄ່າໃຊ້ຈ່າຍ ພ້ອມທັງຮັບຮອງດຳລັດປະກັນສຸຂະພາບແຫ່ງຊາດ ເພື່ອໂຮມລະບົບປິ່ນປົວສຸຂະພາບທີ່ມີໃນປະຈຸບັນໃຫ້ເປັນລະບົບດຽວ ແລະ ເພື່ອສາມາດຂະຫຍາຍການບໍລິການປິ່ນປົວສຸຂະພາບແບບທຸກທົ່ວໜ້າໃນໄລຍະຍາວ.

ແຜນຍຸດທະສາດເພື່ອການຂະຫຍາຍຕົວແຫ່ງຊາດ ແລະ ການຫຼຸດຜ່ອນຄວາມທຸກຍາກ ຊຶ່ງເປັນຂອບການຈັດຕັ້ງປະຕິບັດທີ່ຄົບຖ້ວນຮອດປີ 2020 ໃນການສົ່ງເສີມການຂະຫຍາຍຕົວ, ການພັດທະນາ ແລະ ການຫຼຸດຜ່ອນຄວາມທຸກຍາກ ໂດຍເນັ້ນໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງລັດຖະບານໃນການຫຼຸດຜ່ອນການອີງໃສ່ການຊ່ວຍເຫຼືອລ້າຈາກຕ່າງປະເທດລົງເທື່ອລະກ້າວ, ປັບປຸງຊີວິດການເປັນຢູ່ທີ່ດີຂອງປະຊາຊົນໃນການຄ້ຳປະກັນສະບຽງອາຫານ ແລະ ການຂະຫຍາຍການບໍລິການສັງຄົມ.

ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໄລຍະແຕ່ 2011-2015 ໄດ້ຮັບຮູ້ເຖິງຄວາມຕ້ອງການໃນການສະໜອງສະຫວັດດີການສັງຄົມໃຫ້ກັບຜູ້ທີ່ທຸກຍາກ, ດ້ອຍໂອກາດ ແລະ ບໍ່ມີລາຍຮັບພຽງພໍ ຫຼື ວ່າງງານ. ດຳລັດວ່າດ້ວຍກອງທຶນຫຼຸດຜ່ອນຄວາມທຸກຍາກເປັນກອງທຶນສະໜັບສະໜູນ ແລະ ສ້າງຄວາມອາດສາມາດ, ຂັ້ນຕອນ ແລະ ຄວາມຍືນຍົງໃຫ້ກັບທ້ອງຖິ່ນ, ສອດຄ່ອງກັບນະໂຍບາຍສາມສ້າງຂອງລັດຖະບານ ແລະ ເປົ້າໝາຍຫຼຸດຜ່ອນຄວາມທຸກຍາກ.

ນະໂຍບາຍປະຊາກອນ ແລະ ການພັດທະນາ ໄດ້ກຳນົດບູລິມາສິດເພື່ອຂະຫຍາຍການບໍລິການປິ່ນປົວສຸຂະພາບໄວຈະເລີນພັນໃນ ສປປ ລາວ, ການໃຫ້ການຊ່ວຍເຫຼືອເດັກ ແລະ ຜູ້ອາຍຸສູງ.

ແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດຮອດປີ 2025 ໄດ້ກຳນົດສະເພາະເປົ້າໝາຍໃນການເພີ່ມອັດຕາຕົວຊີ້ວັດການພັດທະນາມະນຸດເຖິງ 66 ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະ ຮັບປະກັນໃຫ້ປະຊາຊົນລາວທຸກຄົນສຳເລັດການສຶກສາຂັ້ນມັດທະຍົມຕອນຕົ້ນ.

### 3.5 ຜົນສຳເລັດການຈັດຕັ້ງປະຕິບັດວຽກງານການປົກປ້ອງສັງຄົມໃນ ສປປ ລາວ

ຜົນສຳເລັດການຈັດຕັ້ງປະຕິບັດວຽກປົກປ້ອງສັງຄົມໃນໄລຍະຜ່ານມາ ໄດ້ສັງລວມມີດັ່ງນີ້:

**1). ວຽກປະກັນສຸຂະພາບ** ໄດ້ຮັບການປັບປຸງໃຫ້ມີການບໍລິການປິ່ນປົວສຸຂະພາບທີ່ມີຄຸນນະພາບດີຂຶ້ນ ໂດຍກວມເອົາຜູ້ປະກັນຕົນທີ່ເປັນພະນັກງານ-ລັດຖະກອນ, ຜູ້ອອກແຮງງານໃນຫົວໜ່ວຍແຮງງານ ແລະ ສະມາຊິກຄອບຄົວຕາມລະບົບປະກັນສັງຄົມ, ຜູ້ທຸກຍາກ, ແຮງງານນອກລະບົບ, ການອອກລູກ, ສຸຂະພາບແມ່ ແລະ ເດັກແບບບໍ່ເສຍຄ່າຕາມລະບົບປະກັນສຸຂະພາບ.

**2). ວຽກປະກັນສັງຄົມ** ໄດ້ຮັບການປັບປຸງໃຫ້ເປັນລະບົບ, ເຂັ້ມແຂງ ແລະ ມີປະສິດທິພາບດີຂຶ້ນ ໂດຍໄດ້ໃຫ້ການບໍລິການອຸດໜູນປະກັນສັງຄົມ 8 ປະເພດ ເຊັ່ນ: ການອຸດໜູນປິ່ນປົວສຸຂະພາບ, ອຸດໜູນອອກລູກ, ອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ, ອຸດໜູນເສຍອົງຄະ, ອຸດໜູນປ່ອຍການ, ອຸດໜູນບຳນານ, ອຸດໜູນເສຍຊີວິດ, ອຸດໜູນສະມາຊິກຄອບຄົວຂອງຜູ້ປະກັນຕົນ ແລະ ອຸດໜູນວ່າງງານ ໃຫ້ຜູ້ປະກັນຕົນທີ່ເປັນພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ຜູ້ອອກແຮງງານໃນຫົວໜ່ວຍແຮງງານ, ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ສະມາຊິກຄອບຄົວທີ່ເກີດສິດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະກັນສັງຄົມ, ໄດ້ຂະຫຍາຍຂອບເຂດປົກຄຸມໄປສູ່ຜູ້ອອກແຮງງານໃນຫົວໜ່ວຍແຮງງານ ແລະ ຜູ້ປະກອບອາຊີບສ່ວນບຸກຄົນຫຼາຍຂຶ້ນ, ຄຸ້ມຄອງບໍລິຫານກອງທຶນປະກັນສັງຄົມແຫ່ງຊາດໃຫ້ມີຄວາມໂປ່ງໃສ, ວ່ອງໄວ ແລະຍືນຍົງ.

**3). ວຽກສະຫວັດດີການສັງຄົມ** ໄດ້ສະໜັບສະໜູນການສຶກສາບໍ່ເສຍຄ່າໃຫ້ເດັກ ໂດຍໄດ້ໃຫ້ທຶນບໍລິຫານໂຮງຮຽນເພື່ອລຶບລ້າງການເກັບເງິນຂອງໂຮງຮຽນສຳລັບນັກຮຽນທຸກຄົນ, ໃຫ້ທຶນການສຶກສາຂັ້ນມັດທະຍົມສຳລັບນັກຮຽນຈາກຄອບຄົວທຸກຍາກ, ປະຕິບັດໂຄງການອາຫານໂຮງຮຽນແຫ່ງຊາດສຳລັບນັກຮຽນຂັ້ນປະຖົມ ແລະ ມັດທະຍົມໃນບັນດາ

ເມືອງທຸກຍາກທີ່ສະໜັບສະໜູນໂດຍອົງການອາຫານໂລກ, ອົງການບັນເທົາທຸກ ແລະ ກອງທຶນພັດທະນາການສຶກສາ, ປະຕິບັດໂຄງການໃຫ້ເບ້ຍລ້ຽງນັກຮຽນຂັ້ນມັດທະຍົມສຳລັບນັກຮຽນມັດທະຍົມຕອນຕົ້ນ ແລະ ຕອນປາຍໃນຄອບຄົວທີ່ທຸກຍາກທີ່ສະໜັບສະໜູນໂດຍທະນາຄານເອດີບີ, ໃຫ້ທຶນການຮຽນອາຊີວະສຶກສາສຳລັບນັກຮຽນຈາກຄອບຄົວທຸກຍາກ ແລະ ດ້ອຍໂອກາດ; ວຽກສະໜັບສະໜູນການປັບປຸງຊີວິດການເປັນຢູ່ ແລະ ການບໍລິການທີ່ຈຳເປັນຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ໂດຍການສ້າງຊັບສິນຊຸມຊົນໃຫ້ຊຸມຊົນໃນເປົ້າໝາຍເມືອງທຸກຍາກ; ວຽກສະຫວັດດີການສັງຄົມໄດ້ໃຫ້ການຊ່ວຍເຫຼືອບັນເທົາທຸກສຸກເສີນ ແລະ ຟື້ນຟູຊີວິດການເປັນຢູ່ໃຫ້ຄືນສູ່ສະພາບປົກກະຕິໃຫ້ຜູ້ປະສົບໄພພິບັດຕ່າງໆ, ໃຫ້ການຊ່ວຍເຫຼືອເດັກທີ່ຕ້ອງການປົກປ້ອງພິເສດ, ຜູ້ພິການ ແລະ ຜູ້ອາຍຸສູງ ລວມທັງຜູ້ປະສົບເຄາະຮ້າຍຍ້ອນລະເບີດຕົກຄ້າງທີ່ສະໜັບສະໜູນດ້ວຍແຫຼ່ງທຶນຈາກອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ຄູ່ຮ່ວມພັດທະນາ.

### 3.6 ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດ

ໃນທົດສະວັດຜ່ານມາ, ສປປ ລາວ ໄດ້ມີການປັບປຸງຕົວຊີ້ວັດໃນການປະກັນສຸຂະພາບ, ໂພຊະນາການ ແລະ ການສຶກສາ. ໃນການຈັດຕັ້ງປະຕິບັດໄດ້ມີຄວາມຄືບໜ້າທີ່ສຳຄັນໃນຫຼາຍດ້ານທີ່ຕິດພັນກັບລະບົບປົກປ້ອງສັງຄົມ ທີ່ຍັງຢູ່ໃນລະດັບ ເລີ່ມພັດທະນາ. ຢ່າງໃດກໍຕາມ, ໃນການປະເມີນສະພາບການປົກປ້ອງສັງຄົມໂດຍການປຶກສາຫາລືຮ່ວມກັນຢູ່ ສປປ ລາວ ໄດ້ສະແດງໃຫ້ເຫັນວ່າ ລະບົບທີ່ຈັດຕັ້ງປະຕິບັດໃນປະຈຸບັນ ຍັງມີສິ່ງທ້າທາຍຫຼາຍດ້ານ ລວມທັງການສະໜັບສະ ໜູນ ແລະຄວາມຍືນຍົງດ້ານການເງິນຍັງບໍ່ພຽງພໍກັບຄວາມຕ້ອງການ ຊຶ່ງສັງລວມມີດັ່ງນີ້:

**1). ດ້ານການປະກັນສຸຂະພາບ:** ທຶນສະໜັບສະໜູນວຽກປະກັນສຸຂະພາບ ຍັງບໍ່ພຽງພໍ ໂດຍສະເພາະງົບປະມານຂອງລັດ, ຄວາມອາດສາມາດຂອງຊັບພະຍາກອນມະນຸດຍັງບໍ່ທັນສູງ; ການບໍລິຫານ, ການວາງແຜນ, ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນວຽກປະກັນສຸຂະພາບ ຍັງບໍ່ມີປະສິດທິພາບເທົ່າທີ່ຄວນ; ການໂຮມຕົວບັນດາລະບົບປະກັນສຸຂະພາບຂອງກອງທຶນປະກັນສັງຄົມແຫ່ງຊາດເຂົ້າກັນ ຍັງບໍ່ທັນເປັນລະບົບ ແລະ ເຂັ້ມແຂງ; ຫ້ອງການປະກັນສຸຂະພາບແຫ່ງຊາດ ຍັງບໍ່ທັນເປັນຫ້ອງການເອກກະລາດຕາມຂໍ້ກຳນົດໃນລະບຽບການ, ຍັງຂາດເຂີນພະນັກງານໃນວຽກປະກັນສຸຂະພາບ ໂດຍສະເພາະຊ່ຽວຊານລະດັບກາງ ແລະ ພະນັກງານປະຈຳໃນເຂດຊົນນະບົດ, ຍັງຂາດເຂີນສິ່ງອຳນວຍຄວາມສະດວກ ແລະ ອຸປະກອນການແພດຮັບໃຊ້ການປິ່ນປົວ, ການສ້າງສິ່ງອຳນວຍຄວາມສະດວກ ແລະ ການແຕ່ງຕັ້ງແພດໝໍປະຈຳ ຍັງບໍ່ທັນເທົ່າທຽມກັນລະຫວ່າງໃນເຂດຕົວເມືອງ ແລະ ຊົນນະບົດ, ຊ່ອງວ່າງໃນການຝຶກອົບຮົມພະນັກງານ, ປະຊາຊົນຍັງບໍ່ທັນຮັບຮູ້ກ່ຽວກັບເງື່ອນໄຂໃນການເຂົ້າເປັນສະມາຊິກ, ການບໍລິການ, ສິດທິ ແລະ ພັນທະໃນການເຂົ້າເປັນສະມາຊິກປະກັນສຸຂະພາບ.

**2). ດ້ານປະກັນສັງຄົມ:** ການເຂົ້າຮ່ວມລະບົບປະກັນສັງຄົມຂອງບັນດາຫົວໜ່ວຍທຸລະກິດ ຍັງກວມຈຳນວນໜ້ອຍ, ບັນຫາຄວາມສ່ຽງໃນການສະສົມທຶນ ແລະ ຄວາມຍືນຍົງດ້ານການເງິນຂອງກອງທຶນປະກັນສັງຄົມແຫ່ງຊາດ, ການຂະຫຍາຍປະກັນສັງຄົມສຳລັບຜູ້ອອກແຮງງານໃນຂະແໜງນອກລະບົບຍັງມີຈຳກັດ, ແຮງງານໃນເຂດຊົນນະບົດ ແລະ ໃນຂົງເຂດກະສິກຳຍັງມີລາຍຮັບຕໍ່າ ແລະ ຍັງບໍ່ສາມາດເຂົ້າປະກັນສັງຄົມ ແລະ ບໍ່ມີການອຸດໜູນປະກັນສັງຄົມທີ່ເປັນປົກກະຕິ.

**3). ດ້ານສະຫວັດດີການສັງຄົມ:** ການສົງເຄາະ ຫຼື ການອຸດໜູນໃຫ້ເດັກກຸ່ມອາຍຸ 3 ປີທີ່ທຸກຍາກ, ເດັກທີ່ຕ້ອງການປົກປ້ອງພິເສດ, ຜູ້ພິການທີ່ທຸກຍາກ, ຜູ້ອາຍຸສູງທີ່ປ່ຽວພອຍ ແລະ ຜູ້ອອກແຮງງານທີ່ທຸກຍາກທີ່ບໍ່ມີວຽກເຮັດງານທຳ ແລະ ອື່ນໆ ຍັງບໍ່ທັນເປັນລະບົບປົກກະຕິ, ຍັງບໍ່ມີງົບປະມານສຳລັບການບໍລິຫານໂຮງຮຽນເພື່ອປົກຄຸມນັກຮຽນທຸກຍາກ, ທຶນການສຶກສາສຳລັບນັກຮຽນໃນຂັ້ນມັດທະຍົມຍັງບໍ່ພຽງພໍ, ຍັງບໍ່ມີຫໍພັກພຽງພໍໃຫ້ນັກຮຽນ, ອຸປະກອນການຮຽນ ແລະ ຄ່າໃຊ້ຈ່າຍອື່ນໆ, ທຶນການສຶກສາໃນລະດັບອະຊີວະສຶກສາ, ການຝຶກວິຊາຊີບ ແລະ ສີມືແຮງງານໃຫ້ຜູ້ທຸກຍາກຍັງບໍ່ທັນສະໜອງທຶນໃຫ້ພຽງພໍກັບຄວາມຕ້ອງການທີ່ຈຳເປັນ, ໂຄງການໂພຊະນາການຍັງບໍ່ພຽງພໍໃຫ້ໂພຊະນາການສຳລັບເດັກໃນເກນອາຍຸເຂົ້າໂຮງຮຽນ ແລະ ໂຄງການກໍ່ຍັງຢູ່ພາຍໃຕ້ການສະໜັບສະໜູນທຶນຈາກຜູ້ໃຫ້ທຶນ, ການຈັດສັນງົບປະມານເພື່ອແກ້ໄຂສິ່ງທ້າທາຍເຫຼົ່ານີ້ຍັງມີຄວາມຈຳກັດ ແລະ ຍັງເປັນສິ່ງທ້າທາຍໃນສັງຄົມໃນອະນາຄົດ.

### 3.7 ຂໍ້ແນະນຳ ແລະ ວິທີການແກ້ໄຂ

ເພື່ອສືບຕໍ່ພັດທະນາວຽກປົກປ້ອງສັງຄົມໃຫ້ເປັນລະບົບ, ເຂັ້ມແຂງ ແລະ ມີປະສິດທິພາບດີຂຶ້ນ ຈຶ່ງໄດ້ກຳນົດຂໍ້ແນະນຳ ແລະ ວິທີການແກ້ໄຂດັ່ງນີ້:

**1). ດ້ານວຽກປະກັນສຸຂະພາບ:** ສະເໜີໃຫ້ພັດທະນາໂຄງສ້າງການຄຸ້ມຄອງວຽກປະກັນສຸຂະພາບ ແລະ ກອງທຶນປະກັນສຸຂະພາບ, ພັດທະນາຄວາມອາດສາມາດໃນທຸກລະດັບ ແລະ ເກັບກຳຂໍ້ມູນວຽກປະກັນສຸຂະພາບ ເພື່ອປັບປຸງການບໍລິການ ແລະ ການໃຊ້ການບໍລິການປະກັນສຸຂະພາບ ໃຫ້ມີປະສິດທິພາບດີຂຶ້ນ; ເພີ່ມງົບປະມານຂອງລັດເຂົ້າໃນວຽກປະກັນສຸຂະພາບເພື່ອປັບປຸງຄຸນນະພາບຂອງການບໍລິການປິ່ນປົວ ແລະ ການຂະຫຍາຍບໍລິການໃຫ້ກ້ວາງຂວາງ ແລະ ປັບປຸງຄວາມໂປ່ງໃສໃນການບໍລິຫານງົບປະມານ; ຮັບປະກັນຄຸນນະພາບໃນການບໍລິການຂັ້ນພື້ນຖານຂອງບັນດາໂຮງໝໍ ແລະ ສຸກສາລາ ໂດຍສະເພາະໃນເຂດຊົນນະບົດ; ເພີ່ມທະວີການໂຄສະນາເຜີຍແຜ່ໃຫ້ສັງຄົມໄດ້ຮັບຮູ້ເຖິງການປະກັນສຸຂະພາບ ຢ່າງກ້ວາງຂວາງ ແລະ ສະເໜີໃຫ້ມີກົນໄກໃນການຮັບຄຳຄິດເຫັນ ແລະ ຄຳຕຳນິຕິຊົມ.

**2). ດ້ານວຽກປະກັນສັງຄົມ:** ສະເໜີໃຫ້ຈັດຕັ້ງປະຕິບັດການກວດກາເປັນປົກກະຕິໃນບັນຫາຫົວໜ່ວຍທຸລະກິດທີ່ລົງທະບຽນ; ຈັດຕັ້ງປະຕິບັດມາດຕະການປັບໄໝສຳລັບຫົວໜ່ວຍວິສາຫະກິດ ແລະ ຜູ້ອອກແຮງງານທີ່ບໍ່ປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກປະກັນສັງຄົມ; ຄົ້ນຄ້ວາ ແລະ ວິໄຈຄະນິດສາດປະກັນສັງຄົມ ເພື່ອຮັບປະກັນໃຫ້ມີການສະສົມທຶນ ແລະ ຄວາມຍືນຍົງຂອງກອງທຶນປະກັນສັງຄົມແຫ່ງຊາດ.

**3). ດ້ານວຽກສະຫວັດດີການສັງຄົມ:** ສ້າງຕັ້ງລະບົບການສົງເຄາະ ຫຼື ການອຸດໜູນໃຫ້ຜູ້ທຸກຍາກ ແລະ ດ້ອຍໂອກາດຕາມກຸ່ມເປົ້າໝາຍ ເປັນຕົ້ນ ເດັກລຸ່ມອາຍຸ 5 ປີທີ່ທຸກຍາກ, ເດັກທີ່ຕ້ອງການປົກປ້ອງພິເສດ, ຜູ້ພິການທີ່ທຸກຍາກ ແລະ ຜູ້ອາຍຸສູງທີ່ປ່ຽວພອຍ ແລະ ອື່ນໆ; ເພີ່ມງົບປະມານ ແລະ ສ້າງຄວາມຍືນຍົງໃນການຈັດສັນງົບປະມານເຂົ້າໃນໂຮງຮຽນຕາມກຳນົດເວລາໃນອານາຄົດ; ເພີ່ມຈຳນວນ ແລະ ຂະໜາດທຶນການສຶກສາຂັ້ນມັດທະຍົມ, ຈັດສັນງົບປະມານເຂົ້າໃນການສົ່ງເສີມໂພຊະນາການໃຫ້ກັບນັກຮຽນ, ການສຶກສາ ແລະ ການປິ່ນປົວສຸຂະພາບ; ພັດທະນາການສະໜັບສະໜູນເດັກເພື່ອແກ້ໄຂບັນຫາດ້ານໂພຊະນາການ ແລະ ຄວາມທຸກຍາກ ແລະ ພັດທະນາຊັບພະຍາກອນມະນຸດ; ສະໜອງທຶນການຝຶກວິຊາຊີບ ແລະ ສີມືແຮງງານໃຫ້ຜູ້ອອກແຮງງານທີ່ທຸກຍາກໃຫ້ສາມາດປ່ຽນອາຊີບ, ປະກອບການ ແລະ ສ້າງລາຍຮັບໃຫ້ຫຼາຍຂຶ້ນເພື່ອຫຼຸດຜ່ອນຄວາມທຸກຍາກ; ສ້າງວຽກເຮັດງານທຳໃຫ້ຜູ້ອອກແຮງງານທີ່ທຸກຍາກທີ່ບໍ່ມີວຽກເຮັດງານທຳ ຫຼື ເຮັດວຽກເພື່ອການຊົມໃຊ້ຄົວເຮືອນ ໂດຍສ້າງກຸ່ມການຜະລິດ ແລະ ສະຫະກອນການຜະລິດຕ່າງໆ, ສ້າງຕັ້ງກຸ່ມກອງທຶນປະຈຳບ້ານ ເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

## III. ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ

ເພື່ອສືບຕໍ່ເສີມຂະຫຍາຍຜົນສຳເລັດທີ່ເປັນພື້ນຖານ ແລະ ປັບປຸງແກ້ໄຂສິ່ງຄົງຄ້າງໃນການຈັດຕັ້ງປະຕິບັດວຽກປົກປ້ອງສັງຄົມໃນໄລຍະຜ່ານມາ ລວມທັງຮັບມືກັບສິ່ງທ້າທາຍໃນຕໍ່ໜ້າ, ຈຶ່ງໄດ້ກຳນົດວິໄສທັດ, ເປົ້າໝາຍ, ຈຸດປະສົງ ແລະ ບັນດາກິດຈະກຳເຂົ້າໃນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ ແລະ ປະສິດທິພາບ ຊຶ່ງມີເນື້ອໃນດັ່ງນີ້:

### 1. ວິໄສທັດ

ຮອດປີ 2030, ປະຊາຊົນລາວຕາມກຸ່ມເປົ້າໝາຍຕ່າງໆໄດ້ຮັບການເຂົ້າເຖິງການບໍລິການລະບົບປົກປ້ອງສັງຄົມດ້ານການປະກັນສຸຂະພາບ, ການປະກັນສັງຄົມ ແລະ ສະຫວັດດີການສັງຄົມຂັ້ນພື້ນຖານ ຢ່າງກ້ວາງຂວາງ, ສະເໝີພາບ, ມີປະສິດທິພາບ ແລະ ຄວາມຍືນຍົງ.

## 2. ຫຼັກການລວມ

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແມ່ນອີງໃສ່ຫຼັກການຄວາມສະເໝີພາບ, ຄວາມພຽງພໍ, ປະສິດທິພາບ, ໃຫ້ກວມເອົາທຸກຄົນ, ຄວາມຄືບໜ້າ ແລະ ຄວາມຍືນຍົງ ພາຍໃຕ້ເງື່ອນໄຂໃຫ້ປະຊາຊົນລາວ ຕາມກຸ່ມເປົ້າໝາຍຕ່າງໆ ໄດ້ເຂົ້າເຖິງການບໍລິການປົກປ້ອງສັງຄົມໃນເງື່ອນໄຂດຽວກັນ ໂດຍບໍ່ຈໍາແນກອາຍຸ, ເພດ, ພູມລໍາເນົາ, ສະຖານະທາງເສດຖະກິດ-ສັງຄົມ ຫຼື ອື່ນໆ.

## 3. ເປົ້າໝາຍລວມ

ຮອດປີ 2025, ລະບົບປົກປ້ອງສັງຄົມ ໄດ້ຮັບການພັດທະນາໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບດີຂຶ້ນ ໂດຍມີເປົ້າໝາຍ ໃນການໃຫ້ບໍລິການປົກປ້ອງສັງຄົມ ໃຫ້ກວມເອົາກຸ່ມເປົ້າໝາຍ ຢ່າງກ້ວາງຂວາງກ່ວາເກົ່າ ແລະ ມີມາດຕະຖານດ້ານການບໍລິການທີ່ມີຄຸນນະພາບທີ່ດີຂຶ້ນ.

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດສະບັບນີ້ ໄດ້ກໍານົດ 3 ເປົ້າໝາຍຫຼັກ ເພື່ອຂະຫຍາຍການປົກຄຸມຕາມກຸ່ມເປົ້າໝາຍໃນການເຂົ້າເຖິງການບໍລິການປົກປ້ອງສັງຄົມ ໃຫ້ມີປະສິດທິຜົນ ຊຶ່ງມີດັ່ງນີ້:

**ເປົ້າໝາຍ 1: ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນສຸຂະພາບ**

ພັດທະນາວຽກປະກັນສຸຂະພາບໃຫ້ມີຄວາມເຂັ້ມແຂງ ເພື່ອຮັບປະກັນການເຂົ້າເຖິງການບໍລິການປິ່ນປົວສຸຂະພາບທີ່ມີຄຸນນະພາບ ໂດຍບໍ່ສ້າງຄວາມຫຍຸ້ງຍາກດ້ານການເງິນ ໃຫ້ມີປະສິດທິພາບສໍາລັບທຸກຄົນ ດ້ວຍການສະໜັບສະໜູນງົບປະມານໃຫ້ພຽງພໍ ແລະ ການຂະຫຍາຍການປະກັນສຸຂະພາບສໍາລັບທຸກຄົນພາຍໃນປີ 2025.

**ເປົ້າໝາຍ 2: ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນສັງຄົມ**

ພັດທະນາວຽກປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ, ເປັນລະບົບ ແລະ ມີປະສິດທິພາບ ເພື່ອໃຫ້ສາມາດເກັບແຫຼ່ງເງິນສົມທົບເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ແລະ ໃຫ້ການບໍລິການອຸດໜູນປະກັນສັງຄົມປະເພດຕ່າງໆສໍາລັບຜູ້ປະກັນຕົນທີ່ເປັນພະນັກງານ-ລັດຖະກອນ, ຜູ້ອອກແຮງງານໃນຫົວໜ່ວຍແຮງງານ, ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ສະມາຊິກຄອບຄົວທີ່ເກີດສິດ ຢ່າງກ້ວາງຂວາງ ລວມທັງການຄຸ້ມຄອງກອງທຶນປະກັນສັງຄົມແຫ່ງຊາດ ໃຫ້ມີຄວາມໂປ່ງໃສ, ການສະສົມທຶນ ແລະ ຄວາມຍືນຍົງ.

**ເປົ້າໝາຍ 3: ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບສະຫວັດດີການສັງຄົມ**

ພັດທະນາວຽກສະຫວັດດີການສັງຄົມໃຫ້ມີຄວາມເຂັ້ມແຂງ, ເປັນລະບົບ ແລະ ມີປະສິດທິພາບ ເພື່ອໃຫ້ການບໍລິການໃນການສົງເຄາະ ຫຼື ການອຸດໜູນໃຫ້ເດັກທີ່ຕ້ອງການປົກປ້ອງພິເສດ ຫຼື ດ້ອຍໂອກາດ, ຜູ້ພິການ, ຜູ້ອາຍຸສູງທີ່ປ່ຽວພອຍ ແລະ ຜູ້ອອກແຮງງານທີ່ທຸກຍາກບໍ່ສາມາດຊ່ວຍເຫຼືອຕົນເອງ ຢ່າງກ້ວາງຂວາງ, ສະໜອງການສົງເຄາະບັນເທົາທຸກສຸກເສີນຜູ້ປະສົບໄພພິບັດຕ່າງໆ ໃຫ້ມີປະສິດທິຜົນ, ສະໜອງທຶນການບໍລິຫານໂຮງຮຽນ, ທຶນສໍາລັບນັກຮຽນທີ່ທຸກຍາກໃນຊັ້ນຮຽນຕ່າງໆ ແລະ ທຶນອາຫານທ່ຽງໃນໂຮງຮຽນ ເພື່ອປະກອບສ່ວນອັນສໍາຄັນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ, ການພັດທະນາຊັບພະຍາກອນມະນຸດ ແລະ ການພັດທະນາເສດຖະກິດ-ສັງຄົມ.

## 4. ຈຸດປະສົງ

ຈຸດປະສົງຂອງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດໄດ້ກໍານົດ 3 ຈຸດປະສົງຕົ້ນຕໍ ຄື: ຈຸດປະສົງວຽກປະກັນສຸຂະພາບວຽກປະກັນສັງຄົມ ແລະ ວຽກສະຫວັດດີການສັງຄົມ ໂດຍໄດ້ຈັດວາງບັນດາກິດຈະກໍາທີ່ຈະຈັດຕັ້ງປະຕິບັດຕາມຕົວຊີ້ວັດຕ່າງໆຂອງແຕ່ລະຈຸດປະສົງ ເພື່ອໃຫ້ບັນລຸຜົນສໍາເລັດຕາມເປົ້າໝາຍ ແລະ ວິໄສທັດທີ່ໄດ້ກໍານົດໄວ້ ຊຶ່ງມີເນື້ອໃນດັ່ງນີ້:

## 4.1. ຈຸດປະສົງວຽກປະກັນສຸຂະພາບ

ເພື່ອພັດທະນາວຽກປະກັນສຸຂະພາບໃຫ້ທຸກຄົນສາມາດເຂົ້າເຖິງການບໍລິການປິ່ນປົວສຸຂະພາບ ລວມທັງການສົ່ງເສີມ, ການປ້ອງກັນ, ການຮັກສາ, ການຟື້ນຟູ, ການດູແລທີ່ມີຄຸນນະພາບດີ ແລະ ການເຂົ້າເຖິງການບໍລິການປິ່ນປົວ ທີ່ບໍ່ມີຜົນກະທົບໃນການສ້າງຄວາມຫຍຸ້ງຍາກດ້ານການເງິນໃຫ້ກັບບຸກຄົນ.

**ຈຸດປະສົງ 1.1: ສ້າງຄວາມເຂັ້ມແຂງການພັດທະນາວຽກປະກັນສຸຂະພາບ ເພື່ອໃຫ້ເປັນລະບົບ ແລະ ມີປະສິດທິພາບໃຫ້ທຸກຄົນ ສາມາດເຂົ້າເຖິງການບໍລິການປິ່ນປົວສຸຂະພາບ**

**ກິດຈະກຳ 1: ພັດທະນາລະບົບນິຕິກຳກ່ຽວກັບວຽກປະກັນສຸຂະພາບສຳລັບທຸກຄົນ**

- ສ້າງ ແລະ ປັບປຸງນິຕິກຳກ່ຽວກັບວຽກປະກັນສຸຂະພາບ ໃຫ້ມີເນື້ອໃນເລິກເຊິ່ງ ແລະ ຄົບຖ້ວນ ເພື່ອແກ້ໄຂສິ່ງທ້າທາຍ ແລະ ຊ່ອງຫວ່າງທີ່ສົ່ງຜົນໃຫ້ຍັງມີຄວາມຈຳກັດໃນການຂະຫຍາຍວຽກປະກັນສຸຂະພາບແຫ່ງຊາດສຳລັບທຸກຄົນ;
- ເຜີຍແຜ່, ສ້າງຄວາມເຂົ້າໃຈ, ຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ກົດໝາຍ ແລະ ນິຕິກຳ ທີ່ກ່ຽວຂ້ອງ;
- ທົບທວນຄືນບັນດາອຸດໜູນປະກັນສຸຂະພາບ ໂດຍມີຈຸດປະສົງເພື່ອຮັບປະກັນໃຫ້ການອຸດໜູນພຽງພໍ ແລະ ສາມາດປົກປ້ອງດ້ານການເງິນໄດ້.

**ກິດຈະກຳ 2: ພັດທະນາລະບົບ ແລະ ສ້າງຄວາມອາດສາມາດໃຫ້ກັບອົງການຈັດຕັ້ງບໍລິຫານລະບົບປະກັນສຸຂະພາບແຫ່ງຊາດ ໃຫ້ມີປະສິດທິຜົນ**

- ສ້າງຄວາມເຂັ້ມແຂງໃຫ້ຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດໃນທຸກຂັ້ນ;
- ພັດທະນາລະບົບການບໍລິຫານກອງທຶນປະກັນສຸຂະພາບແຫ່ງຊາດໃຫ້ມີຄວາມພຽງພໍ ແລະ ມີຄວາມຍືນຍົງ;
- ພັດທະນາ ແລະ ຈັດຕັ້ງປະຕິບັດລະບົບການຕິດຕາມ ແລະ ຂໍ້ມູນຂ່າວສານໃຫ້ມີຄວາມປະສົມປະສານດີຂຶ້ນ;
- ຄົ້ນຄ້ວາ ແລະ ຖອດຖອນບົດຮຽນທີ່ດີຈາກຕ່າງປະເທດ ແລະ ສາກົນ.

**ກິດຈະກຳ 3: ພັດທະນາ ແລະ ກຳນົດມາດຕະຖານຂັ້ນພື້ນຖານສຳລັບສະຖານທີ່ໃຫ້ບໍລິການປິ່ນປົວສຸຂະພາບ**

- ກຳນົດ ແລະ ຈັດຕັ້ງປະຕິບັດມາດຕະຖານຄຸນນະພາບຂັ້ນພື້ນຖານໃນການໃຫ້ບໍລິການປິ່ນປົວສຸຂະພາບ ໂດຍສຸມໃສ່ອັດຕາມສ່ວນແພດໝໍຕໍ່ຈຳນວນປະຊາກອນ, ການສະໜອງການບໍລິການ ແລະ ຄຸນນະພາບຂອງສະຖານທີ່ການບໍລິການ, ອຸປະກອນການແພດ ແລະ ຢາປິ່ນປົວພະຍາດ;
- ປັບປຸງ ແລະ ຄວບຄຸມການປະຕິບັດຕາມຄູ່ມືການປິ່ນປົວແຫ່ງຊາດ;
- ປັບປຸງຄຸນນະພາບຂອງສະຖານທີ່ໃຫ້ການບໍລິການປິ່ນປົວສຸຂະພາບ, ເພີ່ມຈຳນວນແພດໝໍ ແລະ ຮັບປະກັນໃຫ້ສະຖານທີ່ປິ່ນປົວສຸຂະພາບມີຢາທີ່ຈຳເປັນ ແລະ ເຄື່ອງມືການແພດທີ່ຈຳເປັນພຽງພໍ.

**ກິດຈະກຳ 4: ຂະຫຍາຍການເຂົ້າເຖິງການບໍລິການປິ່ນປົວສຸຂະພາບຂອງປະຊາຊົນໃນເຂດຊົນນະບົດ**

- ຂະຫຍາຍສະຖານທີ່ ແລະ ການເຂົ້າເຖິງການປິ່ນປົວສຸຂະພາບ, ອຸປະກອນການແພດ, ແພດໝໍ ແລະ ຢາປິ່ນປົວສຸຂະພາບທີ່ຈຳເປັນໃນເຂດຊົນນະບົດທີ່ທຸກຍາກຫ່າງໄກສອກຫຼີກ;
- ຂະຫຍາຍການປົກຄຸມການປະກັນສຸຂະພາບໃຫ້ປະຊາຊົນ ທີ່ທຸກຍາກໃນຊົນນະບົດ ໂດຍອອກບັດຢັ້ງຢືນການປະກັນສຸຂະພາບ ແລະໃຫ້ການບໍລິການປິ່ນປົວສຸຂະພາບ ຢ່າງທົ່ວເຖິງ.

**ກິດຈະກຳ 5: ຈັດສັນງົບປະມານລັດ ແລະ ການລະດົມແຫຼ່ງທຶນໃຫ້ພຽງພໍກັບວຽກປະກັນສຸຂະພາບ**

- ສະເໜີການຈັດສັນງົບປະມານລັດ ເພື່ອເປັນທຶນສົມທົບ ແລະ ເກັບແຫຼ່ງເງິນສົມທົບຈາກຜູ້ປະກັນຕົນໃຫ້ພຽງພໍກັບການຈັດຕັ້ງປະຕິບັດວຽກປະກັນສຸຂະພາບ;
- ລະດົມແຫຼ່ງທຶນຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ເພື່ອຮັບປະກັນໃນການໃຫ້ບໍລິການປິ່ນປົວສຸຂະພາບສຳລັບຜູ້ທຸກຍາກ.

ພາກສ່ວນຮັບຜິດຊອບຫຼັກ: ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງການເງິນ , ກະຊວງແຜນການ ແລະ ການລົງທຶນ, ກະຊວງພາຍໃນ ແລະ ອົງການປົກຄອງທ້ອງຖິ່ນ.

## 4.2. ຈຸດປະສົງວຽກປະກັນສັງຄົມ

ເພື່ອພັດທະນາວຽກປະກັນສັງຄົມໃຫ້ຜູ້ອອກແຮງງານສາມາດເຂົ້າເຖິງການປະກັນຕົນ ຢ່າງກ້ວາງຂວາງ ແລະ ເຂົ້າເຖິງການບໍລິການປະກັນສັງຄົມ ທີ່ບໍ່ມີຜົນກະທົບດ້ານການເງິນໃຫ້ກັບຜູ້ປະກັນຕົນ ແລະ ສະມາຊິກຄອບຄົວ ທີ່ເກີດສິດດ້ວຍຮູບແບບປະກອບທຶນສົມທົບ.

**ຈຸດປະສົງ 2.1: ຜູ້ອອກແຮງງານທຸກຄົນ ແລະ ແຮງງານທີ່ປະກອບອາຊີບສ່ວນບຸກຄົນຂອງຂະແໜງໃນລະບົບໄດ້ຮັບການປົກຄຸມປະກັນສັງຄົມ**

**ກິດຈະກໍາ 1: ຂະຫຍາຍການປົກຄຸມປະກັນສັງຄົມສໍາລັບຜູ້ອອກແຮງງານໃຫ້ກວມເອົາກຸ່ມເປົ້າໝາຍຕ່າງໆ**

- ຂະຫຍາຍອັດຕາປົກຄຸມປະກັນສັງຄົມສໍາລັບຜູ້ອອກແຮງງານໃນຫົວໜ່ວຍວິສາຫະກິດທີ່ຈົດທະບຽນວິສະຫະກິດກັບກະຊວງອຸດສະຫະກໍາ ແລະ ການຄ້າໃນຂັ້ນສູນກາງ ແລະ ທ້ອງຖິ່ນຢ່າງກວ້າງຂວາງ;
- ຂະຫຍາຍອັດຕາປົກຄຸມປະກັນສັງຄົມສໍາລັບຜູ້ອອກແຮງງານທີ່ປະກອບອາຊີບສ່ວນບຸກຄົນໃນຂະແໜງເສດຖະກິດໃນລະບົບຢ່າງກວ້າງຂວາງ.

**ກິດຈະກໍາ 2: ຈັດຕັ້ງປະຕິບັດການກວດກາຫົວໜ່ວຍວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດ**

- ສ້າງໜ່ວຍງານວິຊາການໃນການກວດກາການເຂົ້າຮ່ວມປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ ແລະ ສາມາດປະຕິບັດຕາມກົດໝາຍວ່າດ້ວຍການປະກັນສັງຄົມ ແລະ ນິຕິກໍາອື່ນທີ່ກ່ຽວຂ້ອງ;
- ສ້າງ ແລະ ປັບປຸງນິຕິກໍາສໍາລັບການກວດກາການເຂົ້າປະກັນສັງຄົມ ແລະ ແຕ່ງຕັ້ງບຸກຄະລາກອນ ແລະ ຈັດສັນງົບປະມານທີ່ຈໍາເປັນ;
- ສະເໜີໃຫ້ມີການພິຈາລະນາລົງໂທດຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ທີ່ບໍ່ປະຕິບັດກົດໝາຍ ແລະ ນິຕິກໍາກ່ຽວກັບວຽກປະກັນສັງຄົມ;
- ແລກປ່ຽນຂໍ້ມູນຂ່າວສານລະຫວ່າງການກວດກາແຮງງານ ແລະ ການກວດກາວຽກປະກັນສັງຄົມ;
- ດັດແກ້ ແລະ ປັບປຸງລາຍຊື່ການຂຶ້ນທະບຽນວິສະຫະກິດເອກກະຊົນກັບກະຊວງອຸດສະຫະກໍາ ແລະ ການຄ້າເພື່ອກວກກາເບິ່ງການຈັດຕັ້ງປະຕິບັດກົດໝາຍປະກັນສັງຄົມ ແລະ ນິຕິກໍາທີ່ກ່ຽວຂ້ອງດ້ານແຮງງານ;
- ສ້າງໜ່ວຍງານວິຊາການໃນການກວດກາການເຂົ້າຮ່ວມປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ ແລະ ສາມາດປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວກັບວຽກປະກັນສັງຄົມ.

**ກິດຈະກໍາ 3: ສົ່ງເສີມການເຂົ້າຮ່ວມປະກັນສັງຄົມ**

- ດໍາເນີນການປະຊາສໍາພັນວຽກປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ ແລະ ກ້ວາງຂວາງເຮັດໃຫ້ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ ແລະ ຜູ້ປະກອບອາຊີບສ່ວນບຸກຄົນມີຄວາມຮັບຮູ້ເຂົ້າໃຈກ່ຽວກັບສິດ ແລະ ຜົນປະໂຫຍດຂອງວຽກປະກັນສັງຄົມ;
- ຊຸກຍູ້ໃຫ້ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ ແລະ ຜູ້ປະກອບອາຊີບສ່ວນບຸກຄົນເຂົ້າຮ່ວມລະບົບປະກັນສັງຄົມຕາມກົດໝາຍ ແລະ ລະບຽບການກ່ຽວກັບວຽກປະກັນສັງຄົມ ຢ່າງເຂັ້ມງວດ.

**ກິດຈະກໍາ 4: ຄົ້ນຄ້ວາ ແລະ ວິໄຈຄະນິດສາດປະກັນສັງຄົມ**

- ຄົ້ນຄ້ວາ ແລະ ວິໄຈຄະນິດສາດປະກັນສັງຄົມ ເພື່ອຮັບປະກັນໃຫ້ມີຖານການເງິນທີ່ມີການສະສົມທຶນ ແລະ ຍືນຍົງຂອງກອງທຶນປະກັນສັງຄົມແຫ່ງຊາດໃນໄລຍະສັ້ນ ແລະ ໄລຍະຍາວ;
- ດໍາເນີນການປັບປຸງລະບົບການອຸດໜູນປະກັນສັງຄົມ ອີງຕາມຜົນການປະເມີນ ແລະ ວິໄຈຄະນິດສາດປະກັນສັງຄົມເພື່ອຮັບປະກັນຄວາມຍືນຍົງຂອງກອງທຶນປະກັນສັງຄົມແຫ່ງຊາດ.

**ກິດຈະກໍາ 5: ປັບປຸງລະບົບການເກັບເງິນສົມທົບຂອງປະກັນສັງຄົມ**

- ປັບປຸງເງື່ອນໄຂທີ່ຈໍາເປັນເພື່ອອໍານວຍຄວາມສະດວກໃນການປະກອບທຶນສົມທົບເຂົ້າປະກັນສັງຄົມ ໂດຍຜ່ານລະບົບການໂອນຜ່ານທະນາຄານ ເພື່ອຮັບປະກັນການເກັບທຶນສົມທົບ ແລະ ຄວາມຍືນຍົງຂອງກອງທຶນປະກັນສັງຄົມແຫ່ງຊາດ.

**ຈຸດປະສົງ 2.2: ປະກັນສັງຄົມປົກຄຸມຈໍານວນແຮງງານນອກລະບົບເພີ່ມຂຶ້ນ**

**ກິດຈະກຳ 6: ສ້າງກົນໄກການບໍລິການໃນການເຂົ້າຮ່ວມລະບົບປະກັນສັງຄົມສຳລັບຜູ້ອອກແຮງງານນອກລະບົບຕາມກຸ່ມອາຊີບຕ່າງໆ ແລະ ການຮັບອຸດໜູນແບບເໝາະສົມ**

- ປະສານສົມທົບການສ້າງສິ່ງອຳນວຍຄວາມສະດວກໃຫ້ຜູ້ອອກແຮງງານນອກລະບົບຕາມກຸ່ມອາຊີບຕ່າງໆໃນຂັ້ນທ້ອງຖິ່ນໄດ້ເຂົ້າຮ່ວມລະບົບປະກັນສັງຄົມແບບສະໝັກໃຈ ຢ່າງກ້ວາງຂວາງ ແລະ ໃຫ້ອຸດໜູນທີ່ເໝາະສົມກັບຄວາມຕ້ອງການສະເພາະຂອງແຕ່ລະກຸ່ມເປົ້າໝາຍ;
- ໂຄສະນາ ແລະ ເຜີຍແຜ່ໃຫ້ກັບແຮງງານນອກລະບົບຮັບຮູ້ເຖິງຄວາມສຳຄັນຂອງການເຂົ້າລະບົບປະກັນສັງຄົມຂອງແຮງງານນອກລະບົບແບບສະໝັກໃຈ ໂດຍມີການໃຫ້ໂອກາດປະກອບທຶນສົມທົບໃນອັດຕາຕ່ຳກ່ວາປົກກະຕິ.

ພາກສ່ວນຮັບຜິດຊອບຫຼັກ: ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສາທາລະນະສຸກ, ກະຊວງອຸດສາຫະກຳແລະ ການຄ້າ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງພາຍໃນ, ທະນາຄານທຸລະກິດ, ສູນກາງສະຫະພັນກຳມະບານລາວ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ.

## 4.3. ຈຸດປະສົງວຽກສະຫວັດດີການສັງຄົມ

ເພື່ອພັດທະນາວຽກສະຫວັດດີການສັງຄົມ ໃຫ້ກຸ່ມຜູ້ດ້ອຍໂອກາດ, ກຸ່ມຜູ້ທຸກຍາກ ແລະ ປະສົບໄພພິບັດຕ່າງໆ ສາມາດເຂົ້າເຖິງການບໍລິການໃນການຊ່ວຍເຫຼືອສົງເຄາະ ຫຼື ການອຸໜູນຕ່າງໆ ໃຫ້ມີຊີວິດການເປັນຢູ່ດີຂຶ້ນ, ສາມາດຢູ່ຮ່ວມກັບສັງຄົມ ແລະ ປະກອບສ່ວນໃນການພັດທະນາຊັບພະຍາກອນມະນຸດ.

**ຈຸດປະສົງ 3.1: ຂະຫຍາຍການປົກຄຸມ ແລະ ການບໍລິການໃຫ້ກຸ່ມເປົ້າໝາຍ**

**ກິດຈະກຳ 1: ການບໍລິການອຸດໜູນ ແລະ ການສົງເຄາະແມ່ຍິງຖືພາ ແລະ ເດັກ**

- ເກັບກຳ ແລະ ສັງລວມຂໍ້ມູນແມ່ຍິງຖືພາ ແລະ ເດັກ ໂດຍສະເພາະຜູ້ທຸກຍາກ ຫຼື ຜູ້ຢູ່ໃນກຸ່ມທີ່ບອບບາງ;
- ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການສົງເຄາະ ຫຼື ການອຸດໜູນແມ່ຍິງຖືພາ ແລະ ເດັກອາຍຸຕ່ຳກວ່າ 3 ປີ ໃນຄອບຄົວທຸກຍາກທີ່ສຸດ ແລະ ເດັກທີ່ຕ້ອງການປົກປ້ອງພິເສດໃນສັງຄົມ ຕາມເງື່ອນໄຂຕົວຈິງ;
- ໃຫ້ອຸດໜູນເດັກອາຍຸຕ່ຳກ່ວາ 3 ປີ ໃນເມືອງທຸກຍາກທີ່ສຸດ ເພື່ອໃຫ້ເດັກໄດ້ຮັບໂພຊະນາການທີ່ຈຳເປັນໃນໄວອາຍຸ 2 ປີທຳອິດຂອງຊີວິດ;
- ໃຫ້ການບໍລິການສົງເຄາະດ້ານວັດຖຸ ແລະ ຈິດໃຈ ທີ່ຈຳເປັນຕໍ່ແມ່ຍິງຖືພາ ທີ່ມີລາຍຮັບຕ່ຳ ແລະ ເດັກທີ່ຕ້ອງການປົກປ້ອງພິເສດ ຄື: ເດັກກຳພ້າ-ກຳພອຍທີ່ທຸກຍາກ, ເດັກທີ່ຖືກປະຖິ້ມ, ເດັກທີ່ຖືກທຳຮ້າຍຮ່າງກາຍ, ເດັກທີ່ຖືກຂູດຮີດ ແລະ ທາລຸນທາງເພດ, ເດັກທີ່ຕົກເປັນເຫຍື່ອຂອງການຄ້າມະນຸດ, ເດັກທີ່ເຮັດວຽກໃນສະພາບອັນຕະລາຍຕໍ່ສຸຂະພາບ ຫຼື ຖືກຂູດຮີດແຮງງານ ແລະ ເດັກທີ່ຕິດຢາເສບຕິດ ເພື່ອໃຫ້ສາມາດຢູ່ຮ່ວມກັບສັງຄົມ.

**ກິດຈະກຳ 2: ການບໍລິການອຸດໜູນ ຫຼື ການສົງເຄາະໃຫ້ຜູ້ພິການ ແລະ ຜູ້ທີ່ລອດຊີວິດຈາກອຸປະຕິເຫດລະເບີດຕົກຄ້າງ**

- ເກັບກຳ ແລະ ສັງລວມຂໍ້ມູນຜູ້ພິການເພື່ອໃຫ້ການສົງເຄາະ ຫຼື ການອຸດໜູນທີ່ເໝາະສົມ;
- ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການສົງເຄາະ ຫຼື ການອຸດໜູນຜູ້ພິການ ລວມທັງຜູ້ພິການເຄາະຮ້າຍຈາກລະເບີດຕົກຄ້າງ ແລະ ຈາກການຖືກໃຊ້ຄວາມຮຸນແຮງ ທີ່ຜູ້ທຸກຍາກ ຕາມເງື່ອນໄຂຕົວຈິງ;
- ໃຫ້ບໍລິການອຸດໜູນ ແລະ ການສົງເຄາະຕໍ່ຜູ້ພິການປະເພດຕ່າງໆທີ່ບໍ່ສາມາດອອກແຮງງານ, ບໍ່ສາມາດຊ່ວຍເຫຼືອຕົນເອງ ແລະ ຢູ່ໃນຄອບຄົວທີ່ທຸກຍາກມີລາຍຮັບຕ່ຳ ລວມທັງຜູ້ພິການທີ່ລອດຊີວິດຈາກອຸປະຕິເຫດລະເບີດຕົກຄ້າງແລະ ຈາກການຖືກໃຊ້ຄວາມຮຸນແຮງ ເພື່ອສະໜອງຄວາມຕ້ອງການທີ່ຈຳເປັນຂັ້ນພື້ນຖານ ແລະ ສາມາດຢູ່ຮ່ວມກັບສັງຄົມ;
- ສົ່ງເສີມການສ້າງ ແລະ ພັດທະນາຄວາມອາດສາມາດຂອງສະມາຄົມການຊ່ວຍເຫຼືອຜູ້ພິການ ໂດຍການຝຶກອົບຮົມການບໍລິການຕ່າງໆ ຕາມຄວາມສາມາດ ແລະ ເງື່ອນໄຂຕົວຈິງ;
- ເຊື່ອມສານວຽກສະໜັບສະໜູນຜູ້ພິການເຂົ້າໃນແຜນການຂອງຂະແໜງການ ທີ່ກ່ຽວຂ້ອງ.

**ກິດຈະກຳ 3: ການບໍລິການອຸດໜູນ ຫຼື ການສົງເຄາະໃຫ້ຜູ້ອາຍຸສູງ**

- ເກັບກຳ ແລະ ສັງລວມຂໍ້ມູນຜູ້ອາຍຸສູງ ໂດຍສະເພາະຜູ້ທີ່ທຸກຍາກ, ປ່ຽວພອຍ ແລະ ບອບບາງໃນສັງຄົມເພື່ອໃຫ້ການການອຸດໜູນ ແລະ ການສົງເຄາະທີ່ເໝາະສົມ ໂດຍໃຫ້ຜູ້ອາຍຸສູງສາມາດຢູ່ຮ່ວມກັບສັງຄົມ;
- ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການອຸດໜູນ ແລະ ການສົງເຄາະຜູ້ອາຍຸສູງ ໂດຍສະເພາະຜູ້ທີ່ທຸກຍາກ ແລະ ປ່ຽວພອຍໃນສັງຄົມ ຕາມເງື່ອນໄຂຕົວຈິງ ເພື່ອເປັນເຄື່ອງມືທີ່ສຳຄັນໃນການບໍລິການໃຫ້ມີປະສິດທິຜົນ.
- ດຳເນີນການປະເມີນຄວາມເປັນໄປໄດ້ໃນການຈັດຕັ້ງປະຕິບັດອຸດໜູນຜູ້ອາຍຸສູງທີ່ບໍ່ໄດ້ຮັບອຸດໜູນຈາກປະກັນສັງຄົມ;
- ໃຫ້ບໍລິການການອຸດໜູນ ແລະ ການສົງເຄາະດ້ານວັດຖຸ ແລະ ຈິດໃຈຕໍ່ຜູ້ອາຍຸສູງທີ່ທຸກຍາກ ແລະ ປ່ຽວພອຍໃນສັງຄົມ ເພື່ອສະໜອງຄວາມຕ້ອງການທີ່ຈຳເປັນຂັ້ນພື້ນຖານ ແລະ ສາມາດຢູ່ຮ່ວມກັບສັງຄົມ;
- ສະໜັບສະໜູນການສ້າງ ແລະ ພັດທະນາຄວາມອາດສາມາດຂອງສະມາຄົມຜູ້ອາຍຸສູງ.

**ກິດຈະກຳ 4: ການບໍລິການສົງເຄາະໃຫ້ຜູ້ປະສົບເຄາະຮ້າຍຈາກໄພພິບັດຕ່າງໆ**

- ເກັບກຳ ແລະ ສັງລວມຂໍ້ມູນຜູ້ປະສົບເຄາະຮ້າຍຈາກໄພພິບັດຕ່າງໆໃນສັງຄົມ ເພື່ອໃຫ້ການສົງເຄາະ ແລະ ການອຸດໜູນທີ່ເໝາະສົມກັບຄວາມຕ້ອງການທີ່ຈຳເປັນ;
- ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການບໍລິການສົງເຄາະຜູ້ປະສົບເຄາະຮ້າຍຈາກໄພພິບັດຕ່າງໆໃນສັງຄົມ ຕາມເງື່ອນໄຂຕົວຈິງ ເພື່ອເປັນເຄື່ອງມືທີ່ສຳຄັນໃນການບໍລິຫານໃຫ້ມີປະສິດທິຜົນ.
- ໃຫ້ບໍລິການສົງເຄາະ ແລະ ອຸດໜູນທີ່ຈຳເປັນໃຫ້ຜູ້ປະສົບເຄາະຮ້າຍຈາກໄພພິບັດຕ່າງໆ ເພື່ອບັນເທົາທຸກສຸກເສີນ ແລະ ຟື້ນຟູຊີວິດການເປັນຢູ່ໃຫ້ຄືນສູ່ສະພາບປົກກະຕິ;
- ໃຫ້ບໍລິການສົງເຄາະ ແລະ ການອຸດໜູນທີ່ຈຳເປັນໃຫ້ຜູ້ປະສົບເຄາະຮ້າຍຈາກການໃຊ້ຄວາມຮຸນແຮງເພື່ອບັນເທົາທຸກສຸກເສີນ ແລະ ຟື້ນຟູຊີວິດການເປັນຢູ່ໃຫ້ຄືນສູ່ສະພາບປົກກະຕິ;

**ກິດຈະກຳ 5: ຂະຫຍາຍໂຄງການອາຫານສຳລັບເດັກນັກຮຽນທຸກຄົນໃນໂຮງຮຽນຂັ້ນອະນຸບານ, ຂັ້ນກຽມປະຖົມ, ຂັ້ນປະຖົມ ແລະ ຂັ້ນມັດທະຍົມຕອນຕົ້ນຂອງລັດຢູ່ບັນດາບ້ານ ແລະ ເມືອງທີ່ທຸກຍາກໃນທົ່ວປະເທດ**

- ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການບໍລິການອາຫານກາງວັນສຳລັບເດັກນັກຮຽນໃນຊັ້ນຮຽນຕ່າງໆ ຕາມເງື່ອນໄຂຕົວຈິງ ເພື່ອເປັນເຄື່ອງມືທີ່ສຳຄັນໃນການບໍລິຫານໃຫ້ມີປະສິດທິຜົນ.
- ໃຫ້ການບໍລິການອາຫານກາງວັນສຳລັບເດັກນັກຮຽນທຸກຄົນໃນໂຮງຮຽນອະນຸບານ, ໂຮງຮຽນກຽມປະຖົມ, ໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມຕອນຕົ້ນຂອງລັດ ໂດຍໃຫ້ອາຫານໜຶ່ງຄາບຕໍ່ມື້ ຊຶ່ງລາຍການອາຫານແຕ່ລະອາທິດຈະຖືກກຳນົດຕາມຄວາມຕ້ອງການສະເພາະດ້ານໂພຊະນາການຂອງເດັກ.

**ກິດຈະກຳ 6: ເພີ່ມການສະໜອງທຶນການສຶກສາ ແລະ ເບ້ຍລ້ຽງອຸດໜູນສຳລັບນັກຮຽນຂັ້ນມັດທະຍົມຕອນຕົ້ນ ໂດຍໃຫ້ ບຸລິມະສິດກັບນັກຮຽນຈາກຄອບຄົວທຸກຍາກ ແລະ ດ້ອຍໂອກາດ**

- ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການສະໜອງທຶນການສຶກສາ ແລະ ເບ້ຍລ້ຽງອຸດໜູນສຳລັບນັກຮຽນຂັ້ນມັດທະຍົມຕອນຕົ້ນ ຕາມເງື່ອນໄຂຕົວຈິງ ເພື່ອເປັນເຄື່ອງມືທີ່ສຳຄັນໃນການບໍລິຫານໃຫ້ມີປະສິດທິຜົນ.
- ສະໜອງທຶນການສຶກສາ ແລະ ເບ້ຍລ້ຽງສຳລັບນັກຮຽນຂັ້ນມັດທະຍົມຕອນຕົ້ນທີ່ທຸກຍາກ ແລະ ຜູ້ດ້ອຍໂອກາດທີ່ເປັນພິການ ແລະ ຊົນເຜົ່າໃຫ້ສາມາດຈ່າຍຄ່າລົງທະບຽນຮຽນ, ຄ່າຮຽນ, ຄ່າອຸປະກອນຮຽນ, ຄ່າຫໍພັກ
  ແລະ ຄ່າເດີນທາງທີ່ຈຳເປັນໃນຂອບເຂດທົ່ວປະເທດ.

**ກິດຈະກຳ 7: ເພີ່ມການສະໜອງງົບປະມານບໍລິຫານໂຮງຮຽນໃຫ້ທັນຕາມກຳນົດເວລາໂດຍຂະຫຍາຍຂອບເຂດການປົກຄຸມບັນດາໂຮງຮຽນລະບົບສາມັນໃນທົ່ວປະເທດ**

- ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການສະໜອງງົບປະມານບໍລິຫານໂຮງຮຽນຕ່າງໆໃນລະບົບສາມັນ ຕາມເງື່ອນໄຂຕົວຈິງ ເພື່ອເປັນເຄື່ອງມືທີ່ສຳຄັນໃນການບໍລິຫານໃຫ້ມີປະສິດທິຜົນ.
- ປັບປຸງກົນໄກການປະສານງານລະຫວ່າງກະຊວງສຶກສາທິການ ແລະ ກິລາ ແລະ ກະຊວງການເງິນກ່ຽວກັບແຜນງົບປະມານ;

- ຮັບປະກັນໃນການສະໜອງງົບປະມານບໍລິຫານໂຮງຮຽນໃນລະດັບພຽງພໍ ແລະ ທັນເວລາ ເພື່ອລຶບລ້າງບໍ່ໃຫ້ຄອບຄົວນັກຮຽນເສຍຄ່າໂຮງຮຽນໃນໂຮງຮຽນອະນຸບານ, ໂຮງຮຽນກຽມປະຖົມ, ໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມຕອນຕົ້ນໃນຂອບເຂດທົ່ວປະເທດ.

**ກິດຈະກໍາ 8: ໃຫ້ການສະໜອງທຶນອາຊີວະສຶກສາ, ຝຶກວິຊາຊີບ ຫຼື ສີມືແຮງງານໃຫ້ຜູ້ຢູ່ໃນໄວອອກແຮງງານທີ່ທຸກຍາກ ແລະ ດ້ອຍໂອກາດໃຫ້ເຂົ້າເຖິງການມີວຽກເຮັດທີ່ມີຄຸນຄ່າ ແລະ ເປັນທໍາ**

- ສ້າງ ແລະ ປັບປຸງນິຕິກໍາກ່ຽວກັບການສະໜອງທຶນການສຶກສາຂັ້ນອາຊີວະສຶກສາ, ຝຶກວິຊາຊີບ ຫຼື ພັດທະນາສີມືແຮງງານໃຫ້ຜູ້ຢູ່ໃນໄວອອກແຮງງານທີ່ທຸກຍາກ ແລະ ດ້ອຍໂອກາດໃນເຂດຊົນນະບົດ ຕາມເງື່ອນໄຂຕົວຈິງ ເພື່ອເປັນເຄື່ອງມືທີ່ສໍາຄັນໃນການບໍລິຫານໃຫ້ມີປະສິດທິຜົນ.
- ສະໜອງເບ້ຍລ້ຽງ ແລະ ທຶນການສຶກສາຂັ້ນອາຊີວະສຶກສາ, ຝຶກວິຊາຊີບ ຫຼື ສີມືແຮງງານໃຫ້ຜູ້ຢູ່ໃນໄວອອກແຮງງານທີ່ທຸກຍາກ ແລະ ດ້ອຍໂອກາດໃນເຂດຊົນນະບົດ ເພື່ອສົ່ງເສີມການມີວຽກເຮັດງານທໍາ, ການປະກອບການ, ການເຂົ້າຮ່ວມກຸ່ມການຜະລິດ, ສະຫະກອນ, ວິສາຫະກິດຂະໜາດໜ້ອຍ ແລະ ກາງ ໃນທ້ອງຖິ່ນ ເພື່ອສ້າງລາຍຮັບໃຫ້ຫຼາຍຂຶ້ນ, ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນແລະກ້າວສູ່ການລຶບລ້າງຄວາມທຸກຍາກ.

**ກິດຈະກໍາ 9: ສົ່ງເສີມການຈັດຕັ້ງກຸ່ມຮ່ວມມືການຜະລິດ, ສະຫະກອນ ແລະ ການບໍລິການ ດ້ວຍຮູບແບບຕ່າງໆ ເພື່ອການສ້າງວຽກເຮັດງານທໍາທີ່ມີຄຸນຄ່າ ແລະ ເປັນທໍາ**

- ສ້າງ ແລະ ປັບປຸງນິຕິກໍາກ່ຽວກັບການຈັດຕັ້ງກຸ່ມຮ່ວມມືການຜະລິດ, ກຸ່ມການບໍລິການ, ສະຫະກອນ, ວິສາຫະກິດຂະໜາດໜ້ອຍ ແລະ ກາງ ດ້ວຍຮູບແບບຕ່າງໆ ເພື່ອໃຫ້ແຮງງານໃນຊົນນະບົດທີ່ທຸກຍາກໄດ້ເຂົ້າເຖິງການມີວຽກເຮັດງານທໍາທີ່ມີຄຸນຄ່າ ແລະ ເປັນທໍາ ຕາມເງື່ອນໄຂຕົວຈິງ ເພື່ອເປັນເຄື່ອງມືທີ່ສໍາຄັນໃນການບໍລິຫານໃຫ້ມີປະສິດທິຜົນ.
- ພັດທະນາສະຫະກອນຕົວແບບ ໂດຍການຮ່ວມມືກັບຄູ່ຮ່ວມພັດທະນາຕ່າງໆ ໃຫ້ມີການນໍາໃຊ້ແຮງງານ ຢ່າງກ້ວາງຂວາງ;
- ຊຸກຍູ້ການຈັດຕັ້ງກຸ່ມຮ່ວມມືການຜະລິດ ແລະ ການບໍລິການດ້ວຍຮູບແບບຕ່າງໆ ເພື່ອໃຫ້ແຮງງານໃນຊົນນະບົດທີ່ທຸກຍາກໄດ້ເຂົ້າເຖິງການມີວຽກເຮັດງານທໍາທີ່ມີຄຸນຄ່າ ແລະ ເປັນທໍາ, ມີການຫັນປ່ຽນອາຊີບຕາມຄວາມຕ້ອງການຂອງກຸ່ມການຜະລິດ, ກຸ່ມການບໍລິການ, ສະຫະກອນ, ໂຄງການສາທາລະນະ, ວິສາຫະກິດຂະໜາດໜ້ອຍ ແລະ ກາງໃນທ້ອງຖິ່ນ ເພື່ອເພີ່ມລາຍໄດ້ໃຫ້ສູງຂຶ້ນ ແລະ ຫຼຸດຜ່ອນຄວາມທຸກຍາກ.

ພາກສ່ວນຮັບຜິດຊອບຫຼັກ: ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກິລາ, ກະຊວງກະສິກໍາ ແລະ ປ່າໄມ້, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ທະນາຄານແຫ່ງສປປລາວ ແລະ ອື່ນໆ.

## IV. ມາດຕະການຈັດຕັ້ງປະຕິບັດ

ເພື່ອຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ສະບັບນີ້ ໃຫ້ບັນລຸຜົນສໍາເລັດ ຈະໄດ້ສຸມໃສ່ປະຕິບັດບັນດາມາດຕະການ ທີ່ສໍາຄັນ ດັ່ງນີ້:

### 1. ກົນໄກການປະສານງານ ແລະ ການຮ່ວມມືກັບຂະແໜງການ ທີ່ກ່ຽວຂ້ອງ

ຄະນະກໍາມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມ ແມ່ນຮັບຜິດຊອບຊີ້ນໍາການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໂດຍມີການປະສານງານກັບຂະແໜງການຕ່າງໆ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງ ໂດຍມີການຕິດຕາມ ແລະ ປະເມີນຜົນ ໃນການຈັດຕັ້ງປະຕິບັດວຽກປົກປ້ອງສັງຄົມ ໃນຂອບເຂດທົ່ວປະເທດ.

ຄະນະກໍາມາທິການແຫ່ງຊາດທີ່ຖືກສ້າງຕັ້ງຂຶ້ນ ເປັນອົງກອນທີ່ເຄື່ອນໄຫວບໍ່ປະຈໍາການ ແລະ ປະກອບດ້ວຍຕາງໜ້າຈາກ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງກະສິກໍາ ແລະ ປ່າໄມ້, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງແຜນການ ແລະ ການລົງທຶນ, ກະຊວງ

ການເງິນ, ສູນກາງສະຫະພັນກຳມະບານລາວ, ສະພາອຸດສາຫະກຳ ແລະ ການຄ້າ ແຫ່ງຊາດລາວ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ.

ຄະນະກຳມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມ ເປັນອົງການຈັດຕັ້ງຂອງລັດຖະບານ ທີ່ເຄື່ອນໄຫວບໍ່ປະຈຳການ, ມີພາລະບົດບາດ ເປັນເສນາທິການໃຫ້ລັດຖະບານ ກ່ຽວກັບວຽກປົກປ້ອງສັງຄົມ ໃນຂອບເຂດທົ່ວປະເທດ ໂດຍມີຈຸດປະສານງານລວມ ແລະ ມີກອງເລຂາປະຈຳການຂອງຄະນະກຳມາທິການແຫ່ງຊາດປະຈຳ ຢູ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສຳລັບພາລະບົດບາດ, ໜ້າທີ່ ແລະ ສິດຂອງຄະນະກຳມາທິການແຫ່ງຊາດ ແລະ ກອງເລຂາ ເພື່ອການປົກປ້ອງສັງຄົມ ຈະໄດ້ກຳນົດໄວ້ໃນລະບຽບການສະເພາະ.

ສຳລັບຂັ້ນທ້ອງຖິ່ນ ຈະໄດ້ແຕ່ງຕັ້ງຄະນະກຳມະການຮັບຜິດຊອບຂຶ້ນ ໂດຍປະກອບມີ ທ່ານຮອງເຈົ້າແຂວງ ເປັນປະທານ , ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງ ແລະ ພະແນກການທີ່ກ່ຽວຂ້ອງ ເປັນຄະນະ.

ໃນການປະສານງານການຈັດຕັ້ງປະຕິບັດແຕ່ລະຈຸດປະສົງຂອງຍຸດທະສາດ ໄດ້ແບ່ງຄວາມຮັບຜິດຊອບໃຫ້ຂະແໜງການຫຼັກເປັນໃຈກາງໃນການຈັດຕັ້ງປະຕິບັດ ຄື: ຈຸດປະສົງຍຸດທະສາດທີ 1 ວຽກປະກັນສຸຂະພາບ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງກະຊວງສາທາລະນະສຸກ ໂດຍມີກອງທຶນປະກັນສຸຂະພາບແຫ່ງຊາດຮັບຜິດຊອບໃນການຈັດຕັ້ງປະຕິບັດ; ຈຸດປະສົງຍຸດທະສາດທີ 2 ວຽກງານປະກັນສັງຄົມ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມໂດຍມີກອງທຶນປະກັນສັງຄົມແຫ່ງຊາດຮັບຜິດຊອບໃນການຈັດຕັ້ງປະຕິບັດ ແລະ ຈຸດປະສົງຍຸດທະສາດທີ 3 ວຽກສະຫວັດດີການສັງຄົມ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກິລາ, ກະຊວງກະສິກຳ ແລະ ປ່າໄມ້.

ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກຂອງຄະນະກຳມາທິການ ແລະ ກອງເລຂາໃນການວາງແຜນ, ການປະສານງານ ແລະ ການຊີ້ນຳໃນການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້ ໃຫ້ມີຄວາມຄ່ອງຕົວ ແລະ ມີປະສິດທິຜົນ ຕ້ອງໄດ້ສ້າງລະບົບຂໍ້ມູນຂ່າວສານວຽກປົກປ້ອງສັງຄົມ ໂດຍໃຫ້ລວມສູນຢູ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອໃຫ້ມີຂໍ້ມູນທີ່ຈຳເປັນໃນການພັດທະນາ ແລະ ການບໍລິຫານຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງ.

## 2. ງົບປະມານ ແລະ ການລະດົມແຫຼ່ງທຶນສະໜັບສະໜູນການຈັດຕັ້ງປະຕິບັດ

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດສະບັບນີ້ ຄາດຫວັງຈະໄດ້ຮັບການຈັດສັນງົບປະມານຂອງລັດພາຍໃຕ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ແລະ ສືບຕໍ່ການລະດົມແຫຼ່ງທຶນສະໜັບສະໜູນຈາກການຊ່ວຍເຫຼືອລ້າ ຂອງຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງ ໂດຍຜ່ານຂະບວນການໂຕະມົນ ພ້ອມທັງສະເໜີເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ເພື່ອນຳໃຊ້ທຶນກູ້ຢືມໄລຍະຍາວ ແລະ ດອກເບ້ຍຕໍ່າຈາກອົງການຈັດຕັ້ງສາກົນ ເພື່ອການພັດທະນາສັງຄົມ ແລະ ການຫຼຸດຜ່ອນຄວາມທຸກຍາກ ລວມທັງລະດົມການລົງທຶນຈາກພາກເອກະຊົນ ແລະ ການນຳໃຊ້ຊັບພະຍາກອນໃຫ້ເກີດປະໂຫຍດສູງສຸດ.

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຈະນຳໃຊ້ງົບປະມານຂອງລັດ ແລະ ການລະດົມແຫຼ່ງທຶນຈາກຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດບັນດາຈຸດປະສົງ ແລະ ກິດຈະກຳຕ່າງໆ ທີ່ໄດ້ກຳນົດໄວ້ ໃຫ້ມີປະສິດທິຜົນ ຊຶ່ງແຫຼ່ງທຶນສະໜັບສະໜູນແມ່ນມີແຫຼ່ງທຶນ ດັ່ງນີ້:

### 1) ແຫຼ່ງງົບປະມານສະໜັບສະໜູນວຽກປະກັນສຸຂະພາບ

ແຫຼ່ງງົບປະມານທີ່ຈຳເປັນໃນການສະໜັບສະໜູນການຈັດຕັ້ງປະຕິບັດບັນດາກິດຈະກຳ ຕາມຈຸດປະສົງວຽກປະກັນສຸຂະພາບ ແມ່ນໄດ້ງົບປະມານມາຈາກການປະກອບທຶນສົມທົບຂອງຜູ້ປະກັນສຸຂະພາບ ແລະ ທຶນສົມທົບຈາກລັດຖະບານ ດັ່ງທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການປະກັນສຸຂະພາບ.

### 2) ແຫຼ່ງງົບປະມານສະໜັບສະໜູນວຽກປະກັນສັງຄົມ

ແຫຼ່ງງົບປະມານທີ່ຈຳເປັນໃນການສະໜັບສະໜູນການຈັດຕັ້ງປະຕິບັດບັນດາກິດຈະກຳ ຕາມຈຸດປະສົງວຽກປະກັນສັງຄົມ ແມ່ນໄດ້ງົບປະມານມາຈາກທຶນສົມທົບຈາກຜູ້ປະກັນຕົນ, ຜູ້ໃຊ້ແຮງງານ ແລະ ລັດຖະບານ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການປະກັນສັງຄົມ.

### 3) ແຫຼ່ງງົບປະມານສະໜັບສະໜູນວຽກສະຫວັດດີການສັງຄົມ

ແຫຼ່ງງົບປະມານທີ່ຈຳເປັນໃນການສະໜັບສະໜູນວຽກສະຫວັດດີການສັງຄົມ ຈະໄດ້ສ້າງກົນໄກໃນການລະດົມ ແລະ ບໍລິຫານທຶນສະໜັບສະໜູນບັນດາກິດຈະກຳຕາມຈຸດປະສົງວຽກສະຫວັດດີການສັງຄົມຂຶ້ນ ໂດຍມີເປົ້າໝາຍເພື່ອອຳນວຍຄວາມສະດວກໃນການນຳໃຊ້ແຫຼ່ງງົບປະມານຂອງລັດ ແລະ ແຫຼ່ງທຶນທີ່ລະດົມໄດ້ຈາກການຊ່ວຍເຫຼືອລ້າ ຫຼື ກູ້ຢືມ ຈາກຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ໃຫ້ເກີດປະໂຫຍດສູງສຸດ.

ແຫຼ່ງທຶນສະໜັບສະໜູນຈາກການລະດົມຈາກພາກເອກກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງບໍ່ສັງກັດລັດຖະບານ.

ອອກແບບກົນໄກການບໍລິການແຫຼ່ງທຶນສະຫວັດດີການສັງຄົມ ດ້ວຍການສ້າງນິຕິກຳສະເພາະ ແລະ ກອບການຈັດແບ່ງງົບປະມານຂອງລັດ ລວມທັງພິຈາລະນາຮູບແບບເພື່ອໃຫ້ບັນດາຄູ່ຮ່ວມພັດທະນາໄດ້ນຳໃຊ້ເພື່ອຮັບປະກັນວ່າການຊ່ວຍເຫຼືອແຫຼ່ງທຶນ ແລະ ເຕັກນິກວິຊາການ ຈາກບັນດາຄູ່ຮ່ວມພັດທະນາສາມາດປະກອບສ່ວນເຂົ້າໃນຂະແໜງການທີ່ຕິດພັນກັບວຽກປົກປ້ອງສັງຄົມ ຢ່າງມີປະສິດທິຜົນ. ພ້ອມກັນນັ້ນ, ຈະໄດ້ຄົ້ນຄ້ວາສ້າງວິທີການໃໝ່ໃນການລະດົມແຫຼ່ງທຶນ ແລະ ບໍລິຫານແຫຼ່ງທຶນການສະໜັບສະໜູນວຽກງານປົກປ້ອງສັງຄົມ ແລະ ການສ້າງບົດສະເໜີໂຄງການເພື່ອສະເໜີລັດຖະບານ ແລະ ລະດົມແຫຼ່ງທຶນຈາກຄູ່ຮ່ວມພັດທະນາ ເພື່ອນຳໃຊ້ເຂົ້າໃນວຽກງານປົກປ້ອງສັງຄົມ.

## 3. ການຮ່ວມມືກັບບັນດາຄູ່ຮ່ວມພັດທະນາ

ບັນດາຄູ່ຮ່ວມພັດທະນາທີ່ກ່ຽວຂ້ອງມີຄວາມສຳຄັນໃນການສະໜັບສະໜູນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໂດຍສະເພາະໃນໄລຍະເລີ່ມຕົ້ນ. ດັ່ງນັ້ນ, ການຮ່ວມມື ຈຶ່ງມີຄວາມສຳຄັນໃນໄລຍະການຈັດຕັ້ງປະຕິບັດ ແລະ ປະເມີນຜົນຍຸດທະສາດສະບັບນີ້. ພ້ອມກັນນີ້, ກໍ່ສາມາດປະກອບສ່ວນເຂົ້າໃນຫຼາຍຂົງເຂດ ເປັນຕົ້ນ ການສະໜັບສະໜູນດ້ານວິຊາການ, ການສ້າງຄວາມອາດສາມາດ ແລະ ການສະໜັບສະໜູນດ້ານງົບປະມານ, ການຕິດຕາມການຈັດຕັ້ງປະຕິບັດ ແລະ ການປະເມີນຜົນ. ທີມງານວິຊາການຈາກຂະແໜງການກ່ຽວຂ້ອງ ຮັບຜິດຊອບໃນການປະສານງານຮ່ວມກັບຄູ່ຮ່ວມພັດທະນາອີງຕາມພາລະບົດບາດຂອງແຕ່ລະຂະແໜງການ.

ຄະນະກຳມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມແຫ່ງຊາດ ຈະສ້າງຕັ້ງໜ່ວຍງານປຶກສາຫາລືວຽກປົກປ້ອງສັງຄົມ ເພື່ອເປັນກົນໄກການປະສານງານ ແລະ ການຈັດກອງປະຊຸມປຶກສາຫາລືໃນລະດັບຕ່າງໆຮ່ວມກັບບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ເພື່ອລະດົມແຫຼ່ງທຶນ ແລະ ຊັບພະຍາກອນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດບັນດາກິດຈະກຳທີ່ໄດ້ກຳນົດໄວ້ໃຫ້ມີຜົນສຳເລັດໃນແຕ່ລະໄລຍະ. ໜ່ວຍງານປຶກສາຫາລືນີ້ ຈະໄດ້ຄົ້ນຄ້ວາ, ອອກແບບ ແລະ ວາງມາດຕະການຈັດຕັ້ງປະຕິບັດວຽກປົກປ້ອງສັງຄົມ ໃຫ້ມີຜົນສຳເລັດ ໃນແຕ່ລະໄລຍະ.

ການຮ່ວມມືກັບບັນດາປະເທດສະມາຊິກອາຊຽນໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຄວນສຸມໃສ່ການທັດສະນະສຶກສາ, ແລກປ່ຽນບົດຮຽນ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດຊຶ່ງກັນ ແລະ ກັນ ເພື່ອໃຫ້ມີຄວາມສອດຄ່ອງກັບຖະແຫຼງການອາຊຽນວ່າດ້ວຍການສ້າງຄວາມເຂັ້ມແຂງວຽກປົກປ້ອງສັງຄົມ.

ເກັບກຳຂໍ້ມູນການຮ່ວມມືກັບບັນດາຄູ່ຮ່ວມພັດທະນາ ໂດຍສ້າງບົດລາຍງານກ່ຽວກັບຂໍ້ມູນຂອງຄູ່ຮ່ວມພັດທະນາທີ່ໃຫ້ການສະໜັບສະໜູນວຽກປົກປ້ອງສັງຄົມ ຕາມແຕ່ລະກຸ່ມເປົ້າໝາຍ ເປັນຕົ້ນ ເດັກດ້ອຍໂອກາດ, ເດັກນັກຮຽນທີ່ທຸກຍາກ, ຜູ້ພິການ, ຜູ້ອາຍຸສູງປ່ຽວພອຍ, ພົນລະເມືອງເກນອາຍຸອອກແຮງງານ ທີ່ທຸກຍາກ ທີ່ຕ້ອງການຝຶກວິຊາຊີບ ຫຼື ສີມືແຮງງານ.

## 4. ການໂຄສະນາເຜີຍແຜ່ ແລະ ການສ້າງຄວາມອາດສາມາດໃນການຈັດຕັ້ງປະຕິບັດ

ຄະນະກໍາມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມແຫ່ງຊາດ ເປັນໃຈກາງໃນການໂຄສະນາເຜີຍແຜ່ກ່ຽວກັບເນື້ອໃນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃຫ້ບັນດາຂະແໜງການຂອງລັດ ແລະ ພາກສ່ວນຕ່າງໆໃນສັງຄົມຢູ່ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ມີຄວາມຮັບຮູ້ ເຂົ້າໃຈ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ.

ໃນຂັ້ນສູນກາງ, ບັນດາຂະແໜງການ ຈະມີຄວາມອາດສາມາດທີ່ດີໃນການສ້າງແຜນການ ແລະ ມີຄວາມເຂົ້າໃຈກ້ວາງຂວາງໃນວຽກປົກປ້ອງສັງຄົມ, ໃນຂັ້ນທ້ອງຖິ່ນ ແມ່ນຈະສຸມໃສ່ການຈັດຕັ້ງປະຕິບັດກິດຈະກໍາຕາມພາລະບົດບາດຂອງຕົນ.

ກອງເລຂາຄະນະກໍາມະການທິການເພື່ອການປົກປ້ອງສັງຄົມແຫ່ງຊາດ ທີ່ມີຜູ້ຕາງໜ້າຈາກບັນດາຂະແໜງການ ທີ່ກ່ຽວຂ້ອງ ໄດ້ຮັບການສະໜັບສະໜູນດ້ານວິຊາການເພື່ອເພີ່ມຂີດຄວາມອາດສາມາດ ແລະ ຄວາມເຂົ້າໃຈກ່ຽວກັບວຽກປົກປ້ອງສັງຄົມ. ເພື່ອຈັດຕັ້ງປະຕິບັດຍຸດທະສາດສະບັບນີ້ໃຫ້ປະສົບຜົນສໍາເລັດ, ຄະນະກໍາມາທິການການແຫ່ງຊາດ ຈະປະສານງານການຝຶກອົບຮົມສ້າງຄວາມເຂັ້ມແຂງ, ຈັດກອງປະຊຸມດ້ານວິຊາການຮ່ວມກັບບັນດາຄູ່ຮ່ວມພັດທະນາ, ບັນດາປະເທດສະມາຊິກອາຊຽນ ແລະ ເຜີຍແຜ່ບົດຮຽນຕ່າງໆ. ກິດຈະກໍາສ້າງຄວາມອາດສາມາດຈະຂະຫຍາຍໃຫ້ກວມເອົາເຖິງມະຫາວິທະຍາໄລແຫ່ງຊາດ ແລະ ສູນສະຖິຕິແຫ່ງຊາດ ແລະ ສະຖາບັນເຫຼົ່ານີ້ຈະຖືກເຊີນໃຫ້ເຂົ້າຮ່ວມໃນກອງປະຊຸມປຶກສາຫາລືຕາມຄວາມຈໍາເປັນ.

ການສຶກສາຄົ້ນຄ້ວາທີ່ອີງໃສສະພາບການຕົວຈິງກ່ຽວກັບຜົນກະທົບຂອງຄວາມທຸກຍາກ ແລະ ຄວາມບອບບາງຕໍ່ກັບປະຊາຊົນໃນແຕ່ລະກຸ່ມອາຍຸ, ເພດ, ລາຍຮັບ ແລະ ຂົງເຂດ ແມ່ນມີຄວາມສໍາຄັນຫຼາຍໃນການບັນລຸເປົ້າໝາຍຂອງຍຸດທະສາດສະບັບນີ້. ບັນດາຄູ່ຮ່ວມພັດທະນາ ແລະ ສະຖາບັນຄົ້ນຄ້ວາທີ່ກ່ຽວຂ້ອງຈະມີບົດບາດສໍາຄັນໃນການເພີ່ມທະວີຄວາມເຂົ້າໃຈເຖິງສາເຫດ ແລະ ຜົນຂອງຄວາມທຸກຍາກ ແລະ ຄວາມບອບບາງຕະຫຼອດໄລຍະຂອງຮອບວຽນຊີວິດ.

ການໂຄສະນາເຜີຍແຜ່ມີບົດບາດສໍາຄັນໃນການປັບປຸງຄວາມຮັບຮູ້ຂອງຕາງໜ້າຜູ້ອອກແຮງງານ ແລະ ຕາງໜ້າຜູ້ໃຊ້ແຮງງານກ່ຽວກັບລະບົບປະກັນສັງຄົມ, ຢໍ້າຄືນໃຫ້ເຫັນເຖິງການບັງຄັບໃຊ້ກົດໝາຍ ແລະ ການຊຸກຍູ້ໃຫ້ມີການປະກອບທຶນສົບທົບແບບສະໝັກໃຈ. ເຊັ່ນດຽວກັນກັບການໂຄສະນາໃນການປັບປຸງຄວາມຮັບຮູ້ຂອງສັງຄົມກ່ຽວກັບລະບົບປະກັນສຸຂະພາບ ແລະ ການອະທິບາຍກ່ຽວກັບຈຸດປະສົງຂອງການອຸດໜູນໃໝ່ຂອງລະບົບສະຫວັດດີການສັງຄົມສໍາລັບຜູ້ທຸກຍາກ ແລະ ດ້ອຍໂອກາດ ທີ່ຈະໃຫ້ການອຸດໜູນເດັກ, ຜູ້ພິການ ແລະ ຜູ້ອາຍຸສູງທີ່ປ່ຽວພອຍ ຕາມແບບບໍ່ປະກອບທຶນເພື່ອໃຫ້ສັງຄົມໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງກ້ວາງຂວາງ.

ການໂຄສະນາເຜີຍແຜ່ມີບົດບາດສໍາຄັນໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດນັ້ນ, ມີຄວາມຈໍາເປັນໃນການສ້າງເຄື່ອງມືໃນການໃຫ້ຄວາມຮູ້ ຄວາມເຂົ້າໃຈ ແລະ ຫຼັກຖານກ່ຽວກັບການຈັດຕັ້ງປະຕິບັດວຽກປົກປ້ອງສັງຄົມ ແລະ ສ້າງບົດຄົ້ນຄ້ວາວິໃຈດ້ານວິຊາການ ກ່ຽວກັບຄວາມບອບບາງຂອງຮອບວຽນຊີວິດ ແລະ ຜົນກະທົບຈາກການປົກປ້ອງສັງຄົມໃນ ສປປ ລາວ.

ສ້າງຄວາມອາດສາມາດວຽກປົກປ້ອງສັງຄົມ ແລະ ການທັດສະນະສຶກສາຂອງອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ໂດຍສົ່ງເສີມໃຫ້ພະນັກງານຈາກຂະແໜງການທີ່ກ່ຽວຂ້ອງ ໄດ້ມີໂອກາດເຂົ້າຮ່ວມໃນກິດຈະກໍາສ້າງຄວາມອາດສາມາດ ເປັນຕົ້ນ ການຝຶກອົບຮົມ, ການໄປທັດສະນະສຶກສາບົດຮຽນຂອງປະເທດສະມາຊິກອາຊຽນ ແລະ ປະເທດອື່ນໆ ເພື່ອສຶກສາຮຽນຮູ້ວິທີການ ແລະ ການປະຕິບັດທີ່ດີໃນການຈັດຕັ້ງປະຕິບັດກິດຈະກໍາວຽກປົກປ້ອງສັງຄົມ.

ພັດທະນາສື່ໂຄສະນາໃຫ້ເຂົ້າເຖິງປະຊາຊົນທົ່ວໄປໄດ້ຮັບຮູ້ ແລະ ເຂົ້າໃຈ ໂດຍນໍາໃຊ້ສື່ມວນຊົນ ແລະ ສື່ອອນລາຍ ເພື່ອປັບປຸງຄວາມຮັບຮູ້ ດ້ານລະບົບປະກັນສັງຄົມ, ລະບົບປະກັນສຸຂະພາບ ແລະ ລະບົບສະຫວັດດີການສັງຄົມ ຢ່າງກ້ວາງຂວາງ.

## 5. ການຕິດຕາມ ແລະ ປະເມີນຜົນ

ໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດສະບັບນີ້, ບັນດາຂະແໜງການທີ່ກ່ຽວຂ້ອງ ຈະໄດ້ຄົ້ນຄ້ວາສ້າງແຜນການ, ແຜນງານ, ໂຄງການ ແລະ ງົບປະມານປະຈຳປີ ເພື່ອກຳນົດເຂົ້າໃນແຜນພັດທະນາຕາມຂະແໜງສະເໜີຕໍ່ກະຊວງແຜນການ ແລະ ການລົງທຶນ.

ການຕິດຕາມ ແລະ ປະເມີນຜົນໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບຂອງຄະນະກຳມາທິການແຫ່ງຊາດ ແລະ ກອງເລຂາ. ກອງເລຂາຄະນະກຳມາທິການ ຈະຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ ເກັບກຳຂໍ້ມູນຕ່າງໆ ແລະ ຈັດຕັ້ງປະຕິບັດ ຕາມກຳນົດເວລາ ເພື່ອໃຫ້ສາມາດນຳໃຊ້ເຂົ້າໃນການປຶກສາຫາລືຮ່ວມກັນຂອງຄະນະກຳມາທິການ. ໃນການສະຫຼຸບຕີລາຄາ ແລະ ການປະເມີນຜົນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດໃນແຕ່ລະປີ ຕ້ອງສະແດງໃຫ້ເຫັນຜົນໄດ້ຮັບຕົວຊີ້ວັດຕ່າງໆຂອງບັນດາກິດຈະກຳ ຕາມແຕ່ລະຈຸດປະສົງທີ່ຕິດພັນກັບບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອໃຫ້ມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດຕົວຈິງ.

ການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຍັງຈະໄດ້ຮັບການປະເມີນໄລຍະກາງສະໄໝໃນປີ 2022 ເພື່ອປະເມີນຄວາມຄືບໜ້າໃນການຈັດຕັ້ງປະຕິບັດກິດຈະກຳໃນໄລຍະທີ 1 ແລະ ຖ້າຈຳເປັນຕ້ອງມີການປັບປຸງເພີ່ມເຕີມໃນການຈັດຕັ້ງປະຕິບັດເພື່ອໃຫ້ບັນລຸເປົ້າໝາຍໃນປີ 2025. ຄະນະກຳມາທິການ ຮ່ວມກັບຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ຈະໄດ້ຈັດກອງປະຊຸມປະຈຳປີ ເພື່ອປະເມີນຮ່ວມກັນເຖິງຄວາມຄືບໜ້າຂອງເປົ້າໝາຍຂະແໜງການ ແລະ ການຈັດຕັ້ງປະຕິບັດແຜນການໃຫ້ປະສົບຜົນສຳເລັດ.

ບັນດາຄູ່ຮ່ວມພັດທະນາ ຍັງຈະໄດ້ສະໜັບສະໜູນການປະເມີນໄລຍະກາງ ແລະ ໄລຍະທ້າຍຂອງການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໄລຍະ 6 ເດືອນທ້າຍປີຂອງປີ 2024 ໂດຍຈະມີກອງປະຊຸມຂອງຄະນະກຳມາທິການແຫ່ງຊາດຮ່ວມກັບບັນດາຄູ່ຮ່ວມພັດທະນາ ເພື່ອແລກປ່ຽນຜົນໄດ້ຮັບຂອງການປະເມີນໄລຍະສຸດທ້າຍ ແລະ ເລີ່ມຕົ້ນກະກຽມໄລຍະຕໍ່ໄປເພື່ອໃຫ້ບັນລຸວິໄສທັດ ຮອດປີ 2030.

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດສະບັບນີ້ ຈະປະກອບດ້ວຍແຜນຈັດຕັ້ງປະບັດທີ່ກຳນົດລາຍລາຍລະອຽດບັນດາກິດຈະກຳ ແລະ ກຳນົດເວລາໃນການຈັດຕັ້ງປະຕິບັດ ໂດຍຈະສ້າງ ແລະ ຈັດຕັ້ງປະຕິບັດຕາຕະລາງຕິດຕາມ ເພື່ອປະເມີນຄວາມຄືບໜ້າຂອງແຕ່ລະກິດຈະກຳ ແລະ ຜົນໄດ້ຮັບຕາມຕົວຊີ້ວັດທີ່ໄດ້ກຳນົດໃນແຕ່ລະຈຸດປະສົງຍຸດທະສາດ ໂດຍໃຫ້ຕິດພັນກັບຕົວຊີ້ວັດຂອງເປົ້າໝາຍການພັດທະນາແບບຍືນຍົງ.

ສ້າງເຄື່ອງມື ແລະ ວິທີການ ໃນການດຳເນີນການປະເມີນຜົນການຈັດຕັ້ງປະຕິບັດໄລຍະກາງໃນປີ 2022 ໂດຍນຳໃຊ້ວິທີການປະລິມານ ແລະ ຄຸນນະພາບ ພ້ອມທັງສ້າງບົດລາຍງານໃຫ້ກັບຄະນະກຳມາທິການແຫ່ງຊາດ ແລະ ຂະແໜງການກ່ຽວຂ້ອງ ເພື່ອນຳໃຊ້ຜົນຂອງການປະເມີນ ສຳລັບການປັບປຸງກິດຈະກຳ ແລະ ວິທີການໃຫ້ອຸດໜູນທີ່ເໝາະສົມກ່ວາເກົ່າລວມທັງສ້າງ ແລະ ພັດທະນາວິທີການໃນການປະເມີນຜົນໄລຍະສຸດທ້າຍໃນປີ 2025 ໂດຍນຳໃຊ້ວິທີການປະສົມປະສານລະຫວ່າງການປະເມີນດ້ານຄຸນນະພາບ ແລະ ປະລິມານ ເພື່ອປະເມີນຜົນສຳເລັດ, ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້ຂອງການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແລະ ເຜີຍແຜ່ຜົນການປະເມີນໃຫ້ຂະແໜງການກ່ຽວຂ້ອງຮັບຮູ້ ເພື່ອນຳໃຊ້ຜົນການປະເມີນ ສຳລັບການປັບປຸງກິດຈະກຳຕ່າງໆ ໃນແຕ່ລະຈຸດປະສົງ ຂອງວຽກປົກປ້ອງສັງຄົມໃນໄລຍະຕໍ່ໄປ.

**ເອກະສານຊ້ອນທ້າຍ 1. ການວິເຄາະສຶກສາຕົ້ນທຶນສະເພາະ ສໍາລັບການອຸດໜູນເດັກ, ຜູ້ພິການ ແລະ ຜູ້ອາຍຸສູງ ໄລຍະແຕ່ປີ 2019-2030**

ການວິເຄາະຄາດຄະເນການຈັດຕັ້ງປະຕິບັດການອຸດໜູນເດັກ ແລະ ອຸດໜູນຜູ້ພິການ ເລີ່ມແຕ່ປີ 2019 ເປັນຕົ້ນໄປ ແລະ ການອຸດໜູນຜູ້ອາຍຸສູງ ຄາດຄະເນເລີ່ມແຕ່ປີ 2025 ເປັນຕົ້ນໄປ. ການອຸດໜູນນີ້ ແມ່ນໃຫ້ອຸດໜູນຜູ້ທຸກຍາກໃນຂອບເຂດທົ່ວປະເທດ, ເລີ່ມຈາກ 100,000 ກີບ/ເດືອນ ໃນປີ 2019 ແລະ ຄ່ອຍໆປັບເພີ່ມຂຶ້ນແຕ່ລະປີ ອີງຕາມອັດຕາເງິນເຟີ້. ອັດຕາຄາດຄະເນນີ້ ແມ່ນອີງໃສ່ການໃຫ້ອຸດໜູນກັບຜູ້ທຸກຍາກເທົ່ານັ້ນ (ເຊັ່ນ: ເດັກທຸກຍາກ, ຜູ້ພິການທຸກຍາກ, ຜູ້ອາຍຸສູງປ່ຽວພອຍ ທີ່ທຸກຍາກ). ຄວາມທຸກຍາກທີ່ໃຊ້ຄາດຄະເນໃນອັດຕາ 23.2 ເປີເຊັນຂອງປະຊາກອນທັງໝົດ.

ການເລີ່ມຕົ້ນໃຫ້ອຸດໜູນເດັກ ແລະ ຜູ້ພິການຈະເລີ່ມຕົ້ນໃນປີ 2019, ການຄາດຄະເນເລີ່ມທີ່ 0.01 ເປີເຊັນຂອງລວມຍອດຜະລິດຕະພັນພາຍໃນ ຫຼື ຈີດີພີ ສໍາລັບທັງສອງອຸດໜູນໃນປີນັ້ນ (ເບິ່ງຮູບທີ 1). ຕໍ່ກັບລາຍຈ່າຍຂອງລັດ ຫຼື ຈີຈີອີ, ຄາດຄະເນທັງໝົດໃນປີ 2019 ຈະເປັນ 0.04 ເປີເຊັນ; 0.01 ເປີເຊັນ ແມ່ນສໍາລັບການລົງທຶນໃສ່ກັບອຸດໜູນເດັກ ແລະ 0.03 ເປີເຊັນ ແມ່ນສໍາລັບອຸດໜູນຜູ້ພິການ (ເບິ່ງຮູບທີ 2). ທັງສອງອຸດໜູນນີ້ ລວມກັນແລ້ວ ຄາດວ່າຈະເປັນງົບປະມານ 15 ຕື້ກີບ.

**ຮູບທີ 1. ຄ່າໃຊ້ຈ່າຍສໍາລັບອຸດໜູນປົກປ້ອງສັງຄົມ 2019 – 2030 (% GDP)**




**ຮູບທີ 2. ຄ່າໃຊ້ຈ່າຍສໍາລັບອຸດໜູນປົກປ້ອງສັງຄົມ 2019 – 2030 (% GGE).**



ຮອດປີ 2025, ພາຍຫຼັງຈັດຕັ້ງປະຕິບັດອຸດໜູນຜູ້ອາຍຸສູງ, ຄ່າໃຊ້ຈ່າຍທັງໝົດໃນການຈັດຕັ້ງປະຕິບັດການອຸດໜູນທັງ 3 ກຸ່ມນີ້ ຄາດຄະເນປະມານ 0.07 % ຂອງລວມຍອດຜະລິດຕະພັນພາຍໃນ ຫຼື ຈີດີພີ, ໃນນີ້ 0.03 %ແມ່ນສໍາລັບອຸດໜູນເດັກ; 0.03 %ສໍາລັບອຸດໜູນຜູ້ພິການ ແລະ 0.02% ແມ່ນສໍາລັບການອຸດໜູນຜູ້ອາຍຸສູງ. ລວມຍອດຄ່າໃຊ້ຈ່າຍທັງໝົດ ຫຼື ຈີຈີອີ, ຮອດປີ 2025 ຄາດຄະເນຄື: 0.06 % ສໍາລັບການອຸດໜູນເດັກ; 0.07 % ສໍາລັບການອຸດໜູນຜູ້ພິການ ແລະ 0.09 % ສໍາລັບການອຸດໜູນຜູ້ອາຍຸສູງ. ລວມຄ່າໃຊ້ຈ່າຍທັງໝົດຈາກ GGE ໃນປີ 2025 ຈະກວມປະມານ 0.33 %.

ຮອດປີ 2030, ການອຸດໜູນທັງສາມກຸ່ມນີ້ ຈະມີປະມານ 0.10% ຂອງລວມຍອດຜະລິດຕະພັນພາຍໃນ ຫຼື ຈີດີພີ, ຫຼື 0.47% ຂອງລວມຍອດລາຍຈ່າຍທັງໝົດ ຫຼື GGE. ຄິດໄລ່ລວມງົບປະມານທັງໝົດສໍາລັບປີ 2019 – 2030 ແລະ ຄ່າໃຊ້ຈ່າຍເປັນຈໍານວນເງິນ (ກີບ) (ເບິ່ງຮູບທີ 3) ໃນເອກະສານຊ້ອນທ້າຍ.

**ຮູບທີ 3.ງົບປະມານສໍາລັບອຸດໜູນປົກປ້ອງສັງຄົມ ໄລຍະປີ 2019-2030 (ຕື້ກີບ).**




ການຄາດຄະເນນີ້ ຈໍາເປັນຕ້ອງມີການທົບທວນເພີ່ມເຕີມພາຍຫຼັງກໍານົດລະອຽດແຜນຈັດຕັ້ງປະຕິບັດ ແລະ ກິດຈະກໍາ. ໃນການຄາດຄະເນະນີ້ ຍັງບໍ່ທັນລວມເອົາມູນຄ່າໃນການຈັດຕັ້ງປະຕິບັດກິດຈະກໍາຍຸດທະສາດ ເນື່ອງຈາກເງື່ອນໄຂຍັງບໍ່ທັນຄົບຖ້ວນ. ເຖິງຢ່າງໃດກໍ່ຕາມ, ກິດຈະກໍາອື່ນໆ ສາມາດລວມເຂົ້າໃນການສຶກສາຕົ້ນທຶນພາຍຫຼັງມີຂໍ້ມູນຄົບຖ້ວນ.

ກິດຈະກໍາໃນການຈັດຕັ້ງປະຕິບັດຍຸດທະສາດນີ້ ແລະ ມາດຕະການຈັດຕັ້ງປະຕິບັດອື່ນໆ ຈະມີຄ່າໃຊ້ຈ່າຍຕໍ່າກ່ວາ ແລະ ສາມາດປະເມີນໄດ້ໃນໄລຍະສ້າງແຜນຈັດຕັ້ງປະຕິບັດ.

**ເອກະສານຊ້ອນທ້າຍ 2: ຄໍາອະທິບາຍກ່ຽວກັບວິທີການນໍາໃຊ້ໃນການຄາດຄະເນຄ່າໃຊ້ຈ່າຍສໍາລັບແຕ່ລະຈໍາລອງນະໂຍບາຍຂອງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໄລຍະ 2019–2030.**

ໄດ້ສຶກສາຕົ້ນທຶນ ໃນການຄາດຄະເນງົບປະມານທີ່ຕ້ອງການສໍາລັບການປະຕິບັດ 3 ການອຸດໜູນໃນຍຸດທະສາດນີ້ ເຊັ່ນ: ການໃຫ້ເງິນອຸດໜູນເດັກ, ເງິນອຸດໜູນຜູ້ພິການ ແລະ ເງິນອຸດໜູນຜູ້ອາຍຸສູງແບບບໍ່ປະກອບທຶນສົມທົບ ໂດຍນໍາໃຊ້ວິທີການປະເມີນທີ່ອົງການແຮງງານສາກົນພັດທະນາຂຶ້ນ. ການປະເມີນຕົ້ນທຶນ ເປັນວິທີການຄິດໄລ່ບໍ່ຍາກໃນການຄາດຄະເນເບິ່ງຕົ້ນທຶນເພື່ອກໍານົດນະໂນບາຍອຸດໜູນປົກປ້ອງສັງຄົມ ໂດຍອີງຕາມຄາດຄະເນທີ່ເປັນທາງການຂອງຈໍານວນປະຊາກອນ, ດ້ານເສດຖະກິດ, ກໍາລັງແຮງງານ, ລາຍຮັບ ແລະ ລາຍຈ່າຍຂອງລັດຖະບານ.
ສໍາຄັນແມ່ນການຄິດໄລ່ຕົ້ນທຶນທີ່ເປັນຕົວເລກໂດຍລວມ ແລະ ສະແດງໃຫ້ເຫັນວ່ານະໂຍບາຍ ຫຼື ມາດຕະການປົກປ້ອງສັງຄົມເປັນນະໂຍບາຍທີ່ສາມາດຈັດຕັ້ງປະຕິບັດໄດ້ອີງຕາມງົບປະມານທີ່ຈໍາເປັນ.

**ຂໍ້ມູນສໍາຄັນທີ່ນໍາໃຊ້ໃນການຄາດຄະເນ**

- **ອີງຕາມການຄາດຄະເນດ້ານປະຊາກອນ[1]**

ການຄາດຄະເນປະຊາກອນຮອດປີ 2030 ໂດຍອີງຕາມເພດ ແລະ ອາຍຸ ແມ່ນອີງຕາມການຄາດຄະເນຂອງອົງການສະຫະປະຊາຊາດດ້ານປະຊາກອນທີ່ໄດ້ຄາດຄະເນທີ່ໃກ້ຄຽງກັບການສໍາຫຼວດປະຊາກອນໄລຍະ 2005-2015 ແລະການຂະຫຍາຍໂຕຂອງປະຊາກອນແມ່ນຄືກັບທ່າອ່ຽງຂອງການສໍາຫຼວດປະຊາກອນໄລຍະ 2005-2015.

- **ອີງຕາມການຄາດຄະເນກໍາລັງແຮງງານແລະການຈ້າງງານ[2]**

ການຄາດຄະເນປີ 2030 ໂດຍອີງຕາມເພດ ແລະ ກຸ່ມອາຍຸ 5 ປີ ແມ່ນຈາກຂໍ້ມູນສະຖິຕິຂອງອົງການແຮງງານສາກົນ.
ອັດຕາການຈ້າງງານນອກລະບົບ (ແຮງງານອິດສະລະ ແລະ ແຮງງານຄອບຄົວບໍ່ມີຄ່າແຮງງານ) ຄາດວ່າຈະຫຼຸດລົງຕາມແນວໂນ້ມຂອງການສັງເກດຜົນການສໍາຫຼວດໃນລະຫວ່າງປີ 2005 ແລະ 2010, ລຸດລົງຮອດ 76.1% ໃນປີ 2020.
ຜະລິດຕະພາບແຮງງານຍັງສືບຕໍ່ຂະຫຍາຍຕົວໃນໄລຍະ 2005 ຫາ 2015 ຕະຫຼອດໄລຍະການຄາດຄະເນ.
ຄ່າແຮງງານຕໍ່າສຸດ ເລີ່ມຕົ້ນໃນເດືອນເມສາ 2015 ທີ່ 900,000 ກີບຕໍ່ເດືອນ ຈະສືບຕໍ່ສູງຂຶ້ນຍ້ອນອັດຕາເງິນເຟີ້.

- **ອີງຕາມຄວາມທຸກຍາກ ແລະ ປະຊາຊົນຜູ້ທຸກຍາກ**

ຂໍ້ມູນກ່ຽວກັບຜູ້ທຸກຍາກຕາມຈໍານວນເມືອງ, ແຂວງ ແລະ ສູນກາງ ແມ່ນນໍາໃຊ້ເປັນຂໍ້ມູນໃນການຄິດໄລ່ວ່າ "ຜູ້ທຸກຍາກຢູ່ໃສ?" ແຜນທີຄວາມທຸກຍາກທີ່ອີງໃສ່ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສ: ຜົນໃນລະດັບຂັ້ນແຂວງ ແລະ ຂັ້ນເມືອງ*[3]*

- **ອີງໃສ່ໂຄງສ້າງເສດຖະກິດມະຫາພາກ ແລະ ໂຄງສ້າງງົບປະມານລັດ[4]**

ສໍາລັບການຄາດຄະເນເສດຖະກິດມະຫາພາກ, ຮູບແບບຂອງການສຶກສາຕົ້ນທຶນ ແມ່ນນໍາໃຊ້ຂໍ້ມູນຮອດປີ 2016 ຈາກ

ທະນາຄານແຫ່ງ ສປປ ລາວ. ການຄາດຄະເນການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ ຫຼື GDP, ອັດຕາເງິນເຟີ້ຮອດປີ 2022 ທີ່ຖານຂໍ້ມູນດ້ານເສດຖະກິດໂລກຂອງກອງທຶນການເງິນສາກົນ ຫຼື IMF ໄດ້ຄາດຄະເນໄວ້. ສໍາລັບໄລຍະ 2022-2030, ຕົວຊີ້ວັດເຫຼົ່ານີ້ ຍັງຈະສືບຕໍ່ໃນລະດັບປີ 2022.

ໂຄງສ້າງດ້ານລາຍຮັບ ແລະ ລາຍຈ່າຍຂອງລັດຖະບານ ແມ່ນນໍາໃຊ້ຂໍ້ມູນໃນໄລຍະ 2015-16 ຈາກທະນາຄານ ແຫ່ງ ສປປ ລາວ. ການຄາດຄະເນຈາກປີ 2016-17 ຫາ 2020-21 ແມ່ນອີງຕາມຖານຂໍ້ມູນດ້ານເສດຖະກິດໂລກຂອງກອງ

---

[1]Sources: Lao PDR, 2005. Population and Housing Census 2005; Lao PDR, 2016. Population and Housing Census 2015; UNDESA, 2015. UN World Population Prospects 2015 Revision (medium variant).
[2] Sources: ILO, 2017. ILOSTAT Database; Lao PDR, 2005. Population and Housing Census 2005; Lao PDR, 2011. Labour Force Survey 2010; World Bank, 2013. Enterprise Survey 2013.
[3] Coulombe, Harold; Epprecht, Michael; Pimhidzai, Obert; Sisoulath, Vilaysouk. 2016. Where are the poor? Lao PDR 2015 census-based poverty map : province and district level results (English). Washington, D.C. : World Bank Group.
[4] Sources: Bank of the Lao PDR, 2016. Annual Economic Report 2016; IMF, 2017. World Economic Outlook, September 2017 Edition; IMF, 2017. Lao DPR - 2016 Article IV Consultation - IMF Country Report No. 17/53; World Bank, 2016. World Bank Lao Economic Monitor, May 2016 Edition.

ທຶນການເງິນສາກົນ ຫຼື IMF ແລະ ຂໍ້ມູນຕິດຕາມເສດຖະກິດ ສປປ ລາວ ຂອງທະນາຄານໂລກ ພ້ອມທັງການວິເຄາະຂອງຊ່ຽວຊານຂອງທະນາຄານໂລກ. ສຳລັບໄລຍະ 2022-2030, ຕົວຊີ້ວັດອື່ນໆ ແມ່ນວິເຄາະຍັງຈະສືບຕໍ່ໃນລະດັບປີ 2022.

**ການວິເຄາະສຶກສາຕົ້ນທຶນສະເພາະຂອງແຕ່ລະຈຳລອງນະໂຍບາຍ**

- **ອັດຕາການປົກຄຸມ ແລະ ອັດຕາສະໜັບສະໜູນ**

ການວິເຄາະຄາດຄະເນໃຫ້ການຈັດຕັ້ງປະຕິບັດການອຸດໜູນເດັກ, ການອຸດໜູນຜູ້ພິການ ແລະ ການອຸດໜູນຜູ້ອາຍຸສູງ ແມ່ນຄາດຄະເນວ່າ ອັດຕາການອຸດໜູນຈະເພີ່ມຂຶ້ນພາຍຫຼັງຈັດຕັ້ງປະຕິບັດ. ອີງຕາມປະສົບການຈາກສາກົນໄດ້ສະແດງໃຫ້ເຫັນວ່າອັດຕາການອຸດໜູນຈະເພີ່ມຂຶ້ນເປັນກ້າວໆ, ເນື່ອງຈາກຜູ້ທີ່ໄດ້ຕາມເງື່ອນໄຂຮັບອຸດໜູນໄດ້ຮັບຮູ້ເພີ່ມຂຶ້ນກ່ຽວກັບອຸດໜູນດັ່ງກ່າວ ແລະ ເລີ່ມຕົ້ນສະເໜີຂໍອຸດໜູນ ແລະ ອົງການຈັດຕັ້ງທີ່ຮັບຜິດຊອບ ກໍ່ຈັດຕັ້ງປະຕິບັດການອຸດໜູນ ແລະ ສືບຕໍ່ມີຄວາມໝັ້ນຄົງ.
ດັ່ງນັ້ນ, ການຄາດຄະເນນີ້ ຈຶ່ງສົມມຸດຖານວ່າ ການປົກຄຸມຈະເພີ່ມຂຶ້ນໄວກ່ວາປີທຳອິດຂອງການຈັດຕັ້ງປະຕິບັດ ແລະ ຈະມີການຊະລໍຕົວ ເນື່ອງຈາກອັດຕາຜູ້ໄດ້ຮັບອຸດໜູນນັ້ນແມ່ນສູງແລ້ວ ແລະ ໄດ້ເຂົ້າເຖິງຜູ້ດ້ອຍໂອກາດເກືອບທັງໝົດແມ່ນຕ້ອງການຄວາມພະຍາຍາມ ແລະ ງົບປະມານເພີ່ມເຕີມ. ເນື່ອງຈາກເງື່ອນໄຂໃນການໄດ້ຮັບອຸດໜູນແມ່ນອີງໃສ່ລັກສະນະທີ່ສາມາດພິສູດໄດ້ ແລະ ມີເປົ້າໝາຍ, ອັດຕາການໄດ້ຮັບອຸດໜູນພາຍຫຼັງ 12 ປີຂອງການຈັດຕັ້ງປະຕິບັດ ຄື: ຈາກ 2019-2030 ແມ່ນຄາດວ່າ ຈະຮອດປະມານ 100 ເປີເຊັນ ຂອງກຸ່ມເປົ້າໝາຍທັງໝົດ. ຮູບທີ 4 ສະແດງໃຫ້ເຫັນເຖິງອັດຕາໄດ້ຮັບອຸດໜູນຂອງແຕ່ລະປີອີງຕາມການຈັດຕັ້ງປະຕິບັດຍຸດທະສາດ.

**ຮູບທີ 4. ຄາດຄະເນອັດຕາໄດ້ຮັບອຸດໜູນ**




ໃນກໍລະນີອຸດໜູນຜູ້ພິການ, ຄາດວ່າການຈັດຕັ້ງປະຕິບັດອຸດໜູນເຕັມຮູບແບບ ແລະ ອັດຕາການປົກຄຸມປະຊາກອນເປົ້າໝາຍທັງໝົດເລີ່ມແຕ່ໄລຍະເລີ່ມຈັດຕັ້ງປະຕິບັດ.

- **ໃຫ້ອຸດໜູນເດັກທຸກຄົນສຳລັບແມ່ຍິງຖືພາ ແລະ ເດັກອາຍຸ 0-2 ປີ**

ປະຊາກອນເດັກນ້ອຍ ມີເປົ້າໝາຍປະກອບດ້ວຍເດັກຕັ້ງແຕ່ມື້ເກີດຮອດ 3 ປີ ອີງຕາມການຄາດຄະເນປະຊາກອນ. ຈຳນວນກໍລະນີແມ່ຍິງຖືພາຕໍ່ປີອາດເທົ່າກັບຈຳນວນເດັກຕໍ່າກ່ວາ 1 ປີໃນປີຕໍ່ໄປ, ອີງຕາມການຄາດຄະເນປະຊາກອນຄາດຄະເນວ່າ ຈະມີການໃຫ້ອຸດໜູນໃນໄລຍະນີ້. ໃນປີທີ 1, ການອຸດໜູນຈະກວມເອົາເດັກທີ່ເກີດໃນປີນັ້ນ, ໃນປີທີ 2, ແມ່ນກວມເອົາເດັກທີ່ເກີດໃນປີນັ້ນ ແລະ ໃນປີທີ 1. ກວມເອົາທັງໝົດໃນປີທີ 3 ຂອງການຈັດຕັ້ງປະຕິບັດເປັນໄລຍະທີ່ກຸ່ມເປົ້າໝາຍທັງໝົດໄດ້ຮັບອຸດໜູນ.

- **ໃຫ້ອຸດໜູນຜູ້ພິການ**

ກຸ່ມເປົ້າໝາຍ ແມ່ນຜູ້ພິການທີ່ບໍ່ມີການອຸດໜູນຈາກລະບົບກອງທຶນປະກັນສັງຄົມແຫ່ງຊາດ, ອີງຕາມການຄາດຄະເນປະຊາກອນຈຳນວນຜູ້ພິການທີ່ໄດ້ຮັບອຸດໜູນຈາກລະບົບກອງທຶນປະກັນສັງຄົມແຫ່ງຊາດ, ອີງຕາມການຄຳນວນຄະນິດສາດປະກັນສັງຄົມຂອງການອຸດໜູນບຳນານຂອງກອງທຶນປະກັນສັງຄົມແຫ່ງຊາດ ໂດຍອົງການແຮງງານສາກົນ.

ອັດຕາຜູ້ພິການ[5]ຕໍ່ຈຳນວນປະຊາກອນທັງໝົດ ໂດຍພິຈາລະນາຜູ້ພິການທີ່ໄດ້ຮັບຜົນກະທົບບໍ່ສາມາດເຮັດວຽກໄດ້, ບໍ່ສາມາດໄປໂຮງຮຽນໄດ້ ຫຼື ບໍ່ສາມາດປະຕິບັດກິດຈະກຳປະຈຳວັນ ແມ່ນຢູ່ທີ່ 1.46% ໃນປີ 2013. ການວິເຄາະນີ້ ຍັງສືບຕໍ່ໃນໄລຍະການຄາດຄະເນ.

- **ໃຫ້ອຸດໜູນຜູ້ອາຍຸສູງທີ່ປ່ຽວພອຍທຸກຄົນ ເລີ່ມຕົ້ນຈາກອາຍຸ 65+ ປີ ໃນປີ 2025**

ກຸ່ມເປົ້າໝາຍ ແມ່ນເລີ່ມແຕ່ອາຍຸ 65+ ເປັນຕົ້ນໄປ ບໍ່ລວມຜູ້ທີ່ໄດ້ຮັບອຸດໜູນບຳນານຈາກກອງທຶນປະກັນສັງຄົມແຫ່ງຊາດ, ອີງຕາມການຄາດຄະເນດ້ານປະຊາກອນ.

ຈຳນວນຜູ້ອາຍຸສູງ ທີ່ໄດ້ຮັບອຸດໜູນບຳນານຈາກກອງທຶນປະກັນສັງຄົມແຫ່ງຊາດ ແມ່ນອີງຕາມການຄາດຄະເນຂອງອົງການແຮງງານສາກົນໃນການຄຳນວນຄະນິດສາດປະກັນສັງຄົມຂອງການອຸດໜູນບຳນານຂອງກອງທຶນປະກັນສັງຄົມແຫ່ງຊາດ.

ອັດຕາເພີ່ມຂຶ້ນຂອງການອຸດໜູນ ແມ່ນຄາດຄະເນໂດຍລວມ, ແຕ່ອີງໃສ່ການເລີ່ມຕົ້ນໃຫ້ອຸດໜູນໃນປີ 2025, ອັດຕາການປົກຄຸມຈະຮອດ 100 ເປີເຊັນ ໃນປີ 2030.

[5]Source: Lao PDR, 2014. Lao Expenditure and Consumption Survey 2012-2013

## ເອກະສານຊ້ອນທ້າຍ 3. ຄາດຄະເນຕົ້ນທຶນຕາມການອຸດໜູນ (% GDP, % GGE, ຕື້ກີບ)

| % GDP | 2019 | 2020 | 2021 | 2022 | 2023 | 2024 | 2025 | 2026 | 2027 | 2028 | 2029 | 2030 |
|---|---|---|---|---|---|---|---|---|---|---|---|---|
| ອຸດໜູນເດັກ | 0.00% | 0.02% | 0.03% | 0.03% | 0.03% | 0.03% | 0.03% | 0.03% | 0.03% | 0.03% | 0.03% | 0.03% |
| ອຸດໜູນຜູ້ພິການ | 0.01% | 0.01% | 0.01% | 0.02% | 0.02% | 0.02% | 0.02% | 0.02% | 0.02% | 0.02% | 0.02% | 0.02% |
| ອຸດໜູນຜູ້ອາຍຸສູງ | 0.00% | 0.00% | 0.00% | 0.00% | 0.00% | 0.00% | 0.02% | 0.04% | 0.04% | 0.05% | 0.05% | 0.05% |
| ລວມທັງໝົດ | 0.01% | 0.04% | 0.05% | 0.05% | 0.05% | 0.05% | 0.07% | 0.08% | 0.09% | 0.09% | 0.09% | 0.10% |
| | | | | | | | | | | | | |
| | | | | | | | | | | | | |
| % ລາຍຈ່າຍຂອງລັດຖະບານ GGE | 2019 | 2020 | 2021 | 2022 | 2023 | 2024 | 2025 | 2026 | 2027 | 2028 | 2029 | 2030 |
| ອຸດໜູນເດັກ | 0.01% | 0.11% | 0.16% | 0.17% | 0.16% | 0.17% | 0.16% | 0.17% | 0.17% | 0.17% | 0.16% | 0.16% |
| ອຸດໜູນຜູ້ພິການ | 0.03% | 0.06% | 0.06% | 0.07% | 0.07% | 0.07% | 0.07% | 0.07% | 0.07% | 0.07% | 0.07% | 0.08% |
| ອຸດໜູນຜູ້ອາຍຸສູງ | 0.00% | 0.00% | 0.00% | 0.00% | 0.00% | 0.00% | 0.09% | 0.17% | 0.20% | 0.21% | 0.22% | 0.23% |
| ລວມທັງໝົດ | 0.04% | 0.17% | 0.22% | 0.23% | 0.23% | 0.23% | 0.33% | 0.41% | 0.44% | 0.45% | 0.46% | 0.47% |
| | | | | | | | | | | | | |
| | | | | | | | | | | | | |
| ຕື້ກີບ | 2019 | 2020 | 2021 | 2022 | 2023 | 2024 | 2025 | 2026 | 2027 | 2028 | 2029 | 2030 |
| ອຸດໜູນເດັກ | 3 | 44 | 71 | 80 | 87 | 94 | 105 | 118 | 120 | 131 | 142 | 155 |
| ອຸດໜູນພິການ | 12 | 24 | 30 | 35 | 39 | 43 | 47 | 52 | 58 | 64 | 71 | 80 |
| ອຸດໜູນຜູ້ອາຍຸສູງ | - | - | - | - | - | - | 58 | 123 | 156 | 186 | 214 | 243 |
| ລວມທັງໝົດ | 15 | 68 | 101 | 115 | 126 | 137 | 207 | 285 | 334 | 381 | 427 | 478 |

## ເອກະສານອ້າງອີງ

**International legislation, standards, and commitments**

Convention on the Elimination of All Forms of Discrimination Against Women (1979)
Convention on the Rights of the Child (1989)
Convention on the Rights of Persons with Disabilities (2006)
ILO Recommendation No. 202 on Social Protection Floors (2012)
ILO Social Security (Minimum Standards) Convention, 1952 (No. 102)
ILO Recommendation No. 204 concerning the Transition from Informal to the Formal Economy (2015)
International Covenant on Economic, Social and Cultural Rights (General Comment 19 on the right to social security) (1966)
Political Declaration and Madrid International Plan of Action on Ageing (2002)
Universal Declaration of Human Rights (1948)

**Regional standards and commitments**

ASEAN Declaration on Strengthening Social Protection (2013)
ASEAN Human Rights Declaration (2012)
Bali Declaration on the Enhancement of the Role and Participation of the Persons with Disabilities in ASEAN Community (2011)
Brunei Darussalam Declaration on Strengthening Family Institution: Caring for the Elderly (2010).
Ha Noi Declaration on the Enhancement of Welfare and Development of ASEAN Women and Children (2010)

**Lao PDR’s legislation, plans and regulations**

Decrees No. 073/PM (2002), No. 222/PM, and No.10/PM (2012), about the Poverty Reduction Fund (PRF)
Decree on People with Disabilities No. 137/GOV (2014)
Decree on Social Welfare No. 169/PM (2013)
Decree 273/PM (2014) on the National Policy for Free Maternity for All and Free Health Services for Children Under 5
Decree No. 470 on National Health Insurance
Decree No.1679/Ministry of Education and Sports (MoES) (2014) on Promoting School Lunch
Constitution of the Lao People’s Democratic Republic (2015)
Education Law No. 133 (2015)
Education and Sports Sector Development Plan (2016-2020)
Health Sector Reform Strategy (2013-2025)
Health Sector Financing Strategy (2016-2020)
Labour Law No. 43/NA (2013)
Law No. 01/NA (2001) on Hygiene, Disease Prevention, and Health Promotion
Law on Healthcare (2005)
National Growth and Poverty Eradication Strategy
National Health Insurance Strategy (2017-2020)

National Human Resources Development Strategy to 2025
National Population and Development Policy (revised in 2006)
Rural Development and Poverty Eradication Plan for 2011-2015
Social Security Law No. 34/NA (2013)
Strategy and Planning Framework for the Integrated Package of Maternal, Neonatal, and Child Health (MNCH) Services (2009-2015)
Vocational Education Law (2014)
8th Health Sector Development Plan (2016-2020)
8th Lao National Socio-Economic Development Plan (2016-2020)

**Other references**

Asian Development Bank (2011). *The Revised Social Protection Index Methodology and Handbook*. Manila: ADB.

International Labour Organization (2015). Fiscal space for social protection. Options to expand social investments in 187 countries. Geneva: ILO.

International Labour Organization (2017). *Summary report Assessment-based national dialogue on social protection Lao People's Democratic Republic*. Geneva: ILO.

International Labour Organization (2017).*World Social Protection Report*. Geneva: ILO.

International Labour Organization (2017, November 24). The World Bank Group and ILO Universal Social Protection Initiative [website]. Recovered from http://www.ilo.org/global/topics/social-security/WCMS_378991/lang--en/index.htm

International Labour Organization (2017, November 24). Social Protection Floor [website]. Recovered from http://www.ilo.org/secsoc/areas-of-work/policy-development-and-applied-research/social-protection-floor/lang--en/index.htm

Socialprotection.org (2017, December 29). Glossary [website]. Recovered from http://socialprotection.org/learn/glossary

United Nations (2012). *The future we want*. Río de Janeiro: UN.

United Nations Development Programme (2017). *National Human Development Report. Graduation From Least Developed Country Status. Lao PDR, 2017*. Vientiane: UNDP.

World Bank (2017, November 23). Databank [website]. Recovered from http://databank.worldbank.org

World Bank (2014). *Poverty Profile in Lao PDR. Poverty Report for the Lao Consumption and Expenditure Survey 2012-2013.* Vientiane: WB.

World Health Organization (2013). *Lao PDR's Human Resources for Health country profile*. Manila: WHO.

**ບັນດາກະຊວງ ແລະ ຂະແໜງການທີ່ເຂົ້າຮ່ວມໃນການສ້າງຍຸດທະສາດ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
Ministry of Labour and Social Welfare (MOLSW)

ກະຊວງສຶກສາທິການ ແລະ ກິລາ
Ministry of Education and Sports (MoES)

ກະຊວງສາທາລະນະສຸກ
Ministry of Health (MOH)

ກະຊວງກະສິກຳ ແລະ ປ່າໄມ້
Ministry of Agriculture and Forestry (MoAF)

ກະຊວງແຜນການ ແລະ ການລົງທຶນ
Ministry of Planning and Investment (MoPI)

ກະຊວງການເງິນ
Ministry of Finance (MoF)

ກະຊວງພາຍໃນ
Ministry of Home Affairs (MoHA)

ຫ້ອງວ່າການ ສຳນັກງານນາຍົກ
Government Office

ສູນກາງສະຫະພັນກຳມະບານລາວ
Lao Federation of Trade Unions (LFTU)

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ
Lao National Chamber of Commerce and Industry (LNCCI)

ຫ້ອງການປະກັນສຸຂະພາບແຫ່ງຊາດ
National Health Insurance Bureau (NHIB)

ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ
National Social Security Fund (NSSF)

**Lao People Democratic Republic**

**Peace Independence Democracy Unity Prosperity**

# National
# Social Protection Strategy

## Vision **2030**
## Goal **2025**

Printed by:

Department of Planning and Cooperation, Ministry of Labour and Social Welfare

September 2020

**Lao People's Democratic Republic**
**Peace Independence Democracy Unity Prosperity**

Prime Minister
No.224/PM
Vientiane Capital, dated 01.04.2020.

# Decree
# On Endorsement of National Social Protection Strategy

- According to the Law of the Government of Lao PDR (revised), No. 04/NA, dated 08 November 2016;
- According to the revised version of the Labour Law No. 43/NA, dated 24 December 2016;
- According to the proposal of the Ministry of Labour and Social Welfare, No. 0670/MLSW, dated 03 March 2020.

## Prime Minister issues the Decree to:

**Article 1:** Officially endorse and declare the implementation of the National Social Protection Strategy based on the agreement at the Government meeting in March 2019.

**Article 2:** Assign the Ministry of Labour and Social Welfare to take leadership in collaboration with concerned sectors to translate into effective and efficient actions and implementation of this National Social Protection Strategy.

**Article 3:** Ministries, agencies equivalent to Ministries, provinces, Vientiane capital and other concerned sectors acknowledge, cooperate and implement this Decree effectively and efficiently.

**Article 4:** This Decree is effective from the date of signature.

Government of Lao PDR
Prime Minister

*Signed and stamped*

Thongloun Sisoulith

# Table of contents


Foreword.......................................................................................i
Acknowledgement..........................................................................ii
Terminology and definition............................................................iii
Acronyms and abbreviations.........................................................vi
I. Introduction...............................................................................1
1. Role and significance of the National Social Protection Strategy ........ 1
2. Scope of the National Social Protection Strategy.................................. 1
3. Development Process of the National Social Protection Strategy ........ 2
II. The social protection situation in the global, regional and Lao PDR contexts...........3
1. Social protection in the global context .................................................. 3
1.1 International commitments and standards ............................................. 3
1.2 Types of social protection schemes ........................................................ 3
2. Social protection in the regional context ................................................ 4
3. Social protection in the Lao PDR context ............................................... 5
3.1. Introduction ........................................................................................... 5
3.2 Related policies and regulations ............................................................. 5
3.3 The five-year 8th Lao National Socio-Economic Development Plan .......... 7
3.4 Sectoral policies, plans and regulations related to social protection: ........ 8
3.5 Social protection implementation in Lao PDR ........................................ 8
3.6 Challenges .............................................................................................. 9
3.7 Recommendations and solutions ............................................................ 9
III. National Social Protection Strategy ....................................................11
1. Vision .................................................................................................... 11
2. Principles .............................................................................................. 11
3. Overall goals ......................................................................................... 11
4. Strategic objectives ............................................................................... 11
